# ບົດທີ 1
# ເລີ້ມຕົ້ນຊີວິດຄຣິສຕຽນ

ໃນຂະນະທີ່ທ່ານເລີ້ມຮຽນບົດຮຽນນີ້ ກໍເຊື່ອວ່າທ່ານໄດ້ຕ້ອນຮັບພຣະເຢຊູຄຣິດເປັນພຣະຜູ້ໂຜດໃຫ້ພົ້ນແລະເປັນອົງພຣະຜູ້ເປັນເຈົ້າຂອງທ່ານແລ້ວ ຈຶ່ງຂໍສະແດງຄວາມຍິນນຳທ່ານ ເມື່ອທ່ານໄດ້ຮັບເຊື່ອໃນພຣະເຢຊູກໍຫມາຍເຖິງວ່າ ບັດນີ້ທ່ານໄດ້ເລີ້ມຕົ້ນເຂົ້າສູ່ຊີວິດຄຣິສຕຽນແລ້ວ.

ແຕ່ຖ້າທ່ານຍັງຮູ້ສຶກບໍ່ຫມັ້ນໃຈວ່າທ່ານໄດ້ຮັບເຊື່ອໃນພຣະເຢຊູແລ້ວຫລືບໍ່? ຫລືບໍ່ແນ່ໃຈວ່າໄດ້ຮັບເຊື່ອດ້ວຍຄວາມເຂົ້າໃຈຫລືບໍ່? ຂໍໃຫ້ທ່ານກວດສອບຕົວເອງດ້ວຍການຖາມຕົນເອງວ່າ...

1) ທ່ານເຊື່ອວ່າ ຕົນເອງເປັນຄົນບາບຫລືບໍ່?

2) ທ່ານເຊື່ອວ່າພຣະເຢຊູຊົງສິ້ນພຣະຊົນເພື່ອໄຖ່ບາບຂອງທ່ານຫລືບໍ່?

3) ທ່ານຍອມໃຫ້ພຣະເຢຊູເປັນເຈົ້າຊີວິດ(ເປັນພຣະເຈົ້າ)ຂອງທ່ານຫລືບໍ່?

ຖ້າຕອບວ່າ "**ແມ່ນ**" ທັງສາມຂໍ້ນີ້ ກໍຫມາຍເຖິງວ່າທ່ານເປັນຄຣິສຕຽນແລ້ວ ແລະຖ້າຫາກວ່າທ່ານບໍ່ເຄີຍອະທິຖານເຊື້ອເຊີນພຣະເຢຊູໃຫ້ເຂົ້າມາເປັນອົງພຣະຜູ້ເປັນເຈົ້າຂອງທ່ານ ກໍຂໍໃຫ້ທ່ານອະທິຖານດຽວນີ້ເລີຍວ່າ...

*"ຂ້າແດ່ພຣະເຈົ້າ ຂ້າພຣະອົງສຳນຶກແລ້ວວ່າຕົນເອງເປັນຄົນບາບແລະເຊື່ອວ່າ ພຣະອົງໄດ້ສິ້ນພຣະຊົນເທິງໄມ້ກາງແຂນເພື່ອຮັບໂທດບາບແທນຂ້າພຣະອົງ ຂ້າພຣະອົງຈຶ່ງຂໍເຊີນພຣະອົງໃຫ້ເຂົ້າມາເປັນອົງພຣະຜູ້ເປັນເຈົ້າໃນຊີວິດຂອງຂ້າພຣະອົງຕັ້ງແຕ່ບັດນີ້ເປັນຕົ້ນໄປ ອະທິຖານໃນພຣະນາມພຣະເຢຊູຄຣິດເຈົ້າ ອາແມນ"*

ເປີດພຣະຄັມພີອ່ານພຣະທັມ ໂຢຮັນ 3:16 ແລ້ວໃຫ້ພິຈາຣະນາເບິ່ງວ່າ ພຣະຄັມພີຕອນນີ້ພຣະເຈົ້າຊົງຮູ້ສຶກຢ່າງໃດກັບມະນຸດທຸກຄົນຢູ່ໃນໂລກນີ້? ແລະພຣະອົງຊົງເຮັດຫຍັງແດ່ເພື່ອຊ່ວຍມະນຸດຢູ່ໃນໂລກນີ້? ຖ້າທ່ານຮັບເຊື່ອໃນພຣະເຢຊູແລ້ວທ່ານຈະໄດ້ສິ່ງໃດແດ່?

## ຖານະໃຫມ່:

ເມື່ອທ່ານໄດ້ເຊື່ອວາງໃຈໃນພຣະເຢຊູແລ້ວທ່ານຈຶ່ງຮູ້ເຖິງວ່າ ບັດນີ້ທ່ານມີຖານະໃຫມ່ແລ້ວ ຄືແຕ່ກ່ອນທ່ານເປັນຄົນບາບ ແຕ່ບັດນີ້ທ່ານໄດ້ກາຍເປັນຄົນຊອບທັມແລະເປັນບຸດຂອງພຣະເຈົ້າແລ້ວ.

**1. ຈາກຄົນບາບກັບກາຍເປັນຄົນຊອບທັມ** ພຣະທັມໂຣມ 5:1 ກ່າວວ່າ "*ເຫດສັນນັ້ນເມື່ອເຮົາທັງຫລາຍໄດ້ຊົງຖືວ່າເປັນຄົນຊອບທັມເພາະຄວາມເຊື່ອ ແລ້ວພວກເຮົາຈຶ່ງມີສັນຕິສຸກກັບພຣະເຈົ້າ ໂດຍທາງພຣະເຢຊູຄຣິດເຈົ້າຂອງພວກເຮົາ*" ຄຳວ່າຄົນຊອບທັມຫມາຍເຖິງຄົນທີ່ບໍ່ມີຄວາມຜິດເປັນຄົນບໍຣິສຸດ ພຣະຄັມພີບອກເຮົາວ່າແຕ່ກ່ອນເຮົາເປັນຄົນບາບ ເມື່ອເຮົາໄດ້ເຊື່ອໃນພຣະຄຣິດແລ້ວພຣະເຈົ້າຊົງຖືວ່າເຮົາເປັນຄົນຊອບທັມບໍ່ມີຄວາມຜິດບາບອີກ

**2. ຈາກຄົນບາບກາຍເປັນບຸດຂອງພຣະເຈົ້າ** ບັດນີ້ພຣະເຈົ້າຊົງໃຫ້ສິດທິພິເສດແກ່ເຮົາ ຄືໃຫ້ເຮົາໄດ້ເປັນລູກຂອງພຣະເຈົ້າ ແລະພຣະເຈົ້າຊົງເປັນພໍ່ຫລືເປັນພຣະບິດາຂອງເຮົາ ຊຶ່ງພຣະທັມ ໂຢຮັນ 1:12 ກ່າວວ່າ "*ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ ພຣະອົງກໍຊົງປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າ*"

## ສິດທິປໂຍດໃຫມ່

ເມື່ອທ່ານເປັນຄຣິສຕຽນ ທ່ານບໍ່ພຽງແຕ່ໄດ້ຮັບຖານະໃຫມ່ເທົ່ານັ້ນ ແຕ່ຖານະໃຫມ່ຍັງເຮັດໃຫ້ທ່ານໄດ້ຮັບສິດ

ທີປໂຍດໃໝ່ໆ ຕາມມາດ້ວຍ ສິດທີປໂຍດທີ່ວ່ານີ້ຄືຄຳສັນຍາທີ່ພຣະເຈົ້າຊົງໄດ້ສັນຍາໄວ້ແກ່ເຮົາຕາມທີ່ປາກົດໃນພຣະຄັມພີດັ່ງຕໍ່ໄປນີ້...

**1. ສິດທິປໂຍດໃນການມີຊີວິດອັນຕລອດໄປໃນສວັນ** ພຣະທັມໂຢຮັນ 3:16 ກ່າວວ່າ *"ຜູ້ທີ່ເຊື່ອວາງໃຈໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ"* ຊີວິດອັນຕລອດໄປໝາຍເຖິງ ຊີວິດທີ່ໄດ້ຢູ່ກັບພຣະເຈົ້າເລີ້ມຈາກໂລກນີ້ ແລະເມື່ອເສັຽຊີວິດຈາກໂລກນີ້ໄປກໍຍັງໄດ້ໄປຢູ່ສວັນກັບພຣະເຈົ້າຕໍ່ໄປອີກ ເປັນຊີວິດທີ່ໄດ້ຢູ່ກັບພຣະເຈົ້າຢ່າງມີຄວາມສຸກຕລອດໄປເປັນນິດ ເປັນອະມະຕະ, ນີຣັນການ, ບໍ່ມີວັນສິ້ນສຸດ ບໍ່ຕ້ອງໄປຕົກນະຮົກ ແລະບໍ່ມີການວຽນຕາຍວຽນເກີດມາພົບຄວາມທຸກອີກ ພຣະຄັມພີໄດ້ບັນລະຍາຍເຖິງລັກສະນະຂອງຊີວິດອັນຕລອດໄປ (ນີຣັນ) ໃນສວັນໄວ້ໃນພຣະທັມພຣະນິມິດ 21:4 ວ່າ *"ພຣະເຈົ້າຊົງເຊັດນໍ້າຕາທຸກ ໆຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍໄດ້ລ່ວງໄປແລ້ວ"*

**2. ສິດທິປໂຍດໃນການສາຣະພາບບາບ ແລະໄດ້ຮັບການຍົກໂທດບາບໃນຊີວິດປະຈຳວັນ** ພຣະທັມ 1 ໂຢຮັນ 1:9 ກ່າວວ່າ *"ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງທັມ ຈະຊົງໂຜດຍົກບາບຂອງເຮົາ ແລະຈະຊົງໂຜດຊຳຣະລ້າງເຮົາທັງຫລາຍຈາກການອະທັມໝົດສິ້ນ"* ແລະຕໍ່ໄປໃນ 1 ໂຢຮັນ 2:1-2 ຍັງບອກອີກວ່າ *"ລູກນ້ອຍທັງຫລາຍເອີຍ, ເຮົາຂຽນຂໍ້ຄວາມເຫລົ່ານີ້ມາເຖິງພວກເຈົ້າເພື່ອພວກເຈົ້າຈະບໍ່ໄດ້ເຮັດຜິດ ແຕ່ຖ້າຄົນໃດເຮັດຜິດ ພວກເຮົາກໍມີທະນາຍຄວາມ ຄືພຣະເຢຊູຄຣິດຜູ້ຊົງທ່ຽງທັມທີ່ສະຖິດຢູ່ກັບພຣະບິດາ. ແມ່ນດ້ວຍພຣະອົງນີ້ແຫລະ, ທີ່ພຣະເຈົ້າຊົງຍົກຜິດບາບຂອງພວກເຮົາເສັຽ ແລະບໍ່ແມ່ນແຕ່ຜິດບາບຂອງພວກເຮົາພວກດຽວ ແຕ່ທັງຜິດບາບຂອງມະນຸດທັງປວງໃນໂລກເໝືອນກັນ."* ໝາຍຄວາມວ່າຄຣິສຕຽນຕ້ອງຕັ້ງໃຈທີ່ຈະບໍ່ເຮັດບາບແຕ່ຖ້າຫາກທ່ານທັງຫລາຍຜິດພາດໄປ ກໍໃຫ້ຮີບຟ້າວກັບໃຈສາຣະພາບບາບ ແລະພຣະອົງຈະຊົງຍົກໂທດໃຫ້ແກ່ເຮົາແນ່ນອນ. (ຄຳວ່າກັບໃຈ ໝາຍຄວາມວ່າຈະບໍ່ເຮັດອີກ)

**3. ສິດທິປໂຍດໃນການອະທິຖານທູນຂໍຕໍ່ພຣະເຈົ້າແລະໄດ້ຮັບສິ່ງດີຈາກພຣະເຈົ້າ** ພຣະທັມມັດທາຍ 7:11 ກ່າວວ່າ *"ພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສວັນ ຈະຊົງປະທານຂອງດີແກ່ຜູ້ທີ່ຂໍຕໍ່ພຣະອົງ"* ໝາຍຄວາມວ່າເວລານີ້ ເມື່ອທ່ານໄດ້ເປັນບຸດຂອງພຣະເຈົ້າແລ້ວ ທ່ານກໍມີສິດທີ່ຈະອະທິຖານທູນຂໍຕໍ່ພຣະເຈົ້າຜູ້ເປັນ (ພຣະບິດາ)ພໍ່ຂອງທ່ານໄດ້ ແລະພຣະອົງກໍຈະປະທານສິ່ງທີ່ດີແກ່ທ່ານ ດັ່ງທີ່ພຣະທັມໂຢຮັນ 14:14 ກ່າວໄວ້ວ່າ *"ຖ້າທ່ານທັງຫລາຍຂໍສິ່ງໃດໃນນາມຂອງເຮົາ ຝ່າຍເຮົາກໍຈະເຮັດສິ່ງນັ້ນ"*

**4. ສິດທິປໂຍດໃນການມີສັນຕິສຸກອັນແທ້ຈິງ** ພຣະທັມໂຢຮັນ 14:27 ກ່າວວ່າ *"ເຮົາມອບສງົບສຸກໄວ້ໃຫ້ກັບທ່ານທັງຫລາຍ ຄວາມສງົບສຸກຂອງເຮົາ ເຮົາປະທານໃຫ້ແກ່ທ່ານທັງຫລາຍຝ່າຍເຮົາໃຫ້ແກ່ພວກທ່ານບໍ່ເໝືອນໂລກໃຫ້ນັ້ນ ຢ່າໃຫ້ໃຈຂອງພວກທ່ານຫວັ່ນວາຍໄປ ແລະຢ່າຊູ່ຢ້ານ"* ສັນຕິສຸກຫລືຄວາມສງົບສຸກໝາຍເຖິງຄວາມສຸກທີ່ເລິກເຊິ່ງ ເປັນຄວາມສຸກໃນສ່ວນເລິກຂອງຈິດໃຈ ເປັນຄວາມຮູ້ສຶກຊື່ນໃຈ ໝັ້ນໃຈໝັ້ນຄົງປອດພັຍ ອິບອຸ່ນໃຈ ສງົບຊຸ່ມເຢັນໃນຈິດໃຈ ແມ່ນແຕ່ໃນຍາມທີ່ມີຄວາມທຸກສັນຕິສຸກນີ້ກໍຍັງບໍ່ຫາຍຈາກໄປ ສັນຕິສຸກແບບທີ່ພຣະເຢຊູປະທານໃຫ້ຈຶ່ງບໍ່ເໝືອນກັບຄວາມສຸກຫລືຄວາມສນຸກທີ່ໄດ້ມາຈາກໂລກນີ້ ພຣະຄັມພີເອີ້ນສັນຕິສຸກນີ້ ວ່າຢ່າງນີ້ *"...ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫລາຍໄວ້ໃນພຣະເຢຊູຄຣິດ"* (ຟີລິບປອຍ 4:6-7)

**5. ສິດທິປໂຍດໃນການໄດ້ຮັບການປ່ຽນແປງຊີວິດໃໝ່** ພຣະທັມ 2 ໂກຣິນໂທ 5:17 ກ່າວວ່າ "ເຫດສັນນັ້ນ

ຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃໝ່ແລ້ວ ຖານະເກົ່າເຫຼົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ, ກາຍເປັນສິ່ງໃໝ່ ທັງນັ້ນ." ຄົນທີ່ຢູ່ໃນພຣະຄຣິດກໍຄືຄົນທີ່ເຊື່ອໃນພຣະເຢຊູຄຣິດຢ່າງແທ້ຈິງ ບຸກຄົນທີ່ເຊື່ອໃນພຣະເຢຊູຄຣິດຢ່າງແທ້ຈິງ ພຣະເຈົ້າຈະຊົງສ້າງຊີວິດຂອງລາວຂຶ້ນໃໝ່ ຄວາມປະພຶດແລະນິສັຍເກົ່າທີ່ບໍ່ດີຈະຄ່ອຍປ່ຽນໄປ ນິສັຍໃໝ່ແລະລັກສະນະແບບພຣະເຢຊູຈະເຂົ້າມາແທນ.

**6. ສິດທິປະໂຫຍດຢ່າງອື່ນ ນອກຈາກສິດທິປະໂຫຍດທີ່ໄດ້ກ່າວມານັ້ນ** ທ່ານຍັງຈະໄດ້ຮັບສິດທິປະໂຫຍດອີກຫລາຍຢ່າງທີ່ພຣະຄັມພີໄດ້ກ່າວໄວ້ ຊຶ່ງທ່ານສາມາດທີ່ຈະຮຽນຮູ້ຕໍ່ໄປອີກເຊັ່ນ ສິດທິປະໂຫຍດໃນການໄດ້ຮັບການຊົງນຳຈາກພຣະເຈົ້າໃນການດຳເນີນຊີວິດ (ໂຢຮັນ 14:16-17) ສິດທິປະໂຫຍດໃນການນຳຣິດອຳນາດອັນເໜືອທັມຊາດຂອງພຣະເຈົ້າມາໃຊ້ ເພື່ອເຮັດວຽກງານຂອງພຣະເຈົ້າ (ໂຢຮັນ 14:12-13)

ສິດທິປະໂຫຍດຕ່າງໆ ທີ່ກ່າວມານີ້ ທ່ານສາມາດແນ່ໃຈໄດ້ວ່າທ່ານໄດ້ຮັບແລ້ວຢ່າງແນ່ນອນ. ເພາະໃນພຣະຄັມພີຂອງພຣະເຈົ້າໄດ້ສັນຍາໄວ້ ຊຶ່ງບໍ່ຂຶ້ນຢູ່ກັບວ່າທ່ານມີຄວາມຮູ້ສຶກຢ່າງໃດ ຫລືທ່ານຈະເຊື່ອຫລືບໍ່ເຊື່ອ ເພາະວ່າຖ້າພຣະເຈົ້າຊົງສັນຍາໄວ້ແນວໃດ ກໍຈະເປັນໄປຕາມສັນຍານັ້ນ.

## ຄຳແນະນຳສຳລັບຄຣິສຕຽນໃໝ່

ເຖິງແມ່ນວ່າທ່ານໄດ້ຖານະໃໝ່ແລະສິດທິປະໂຫຍດໃໝ່ໂດຍທາງພຣະເຢຊູແລ້ວກໍເປັນເຣື່ອງທີ່ໜ້າຊື່ນຊົມຍິນດີ ແຕ່ສິ່ງທີ່ຄຣິສຕຽນຄວນຣະວັງກໍຄື ຖ້າທ່ານຫາກບໍ່ຮັກສາຄວາມເຊື່ອທີ່ທ່ານມີໃນອົງພຣະເຢຊູໃນເວລານີ້ໄວ້ໃຫ້ດີ ກໍອາດຈະຈືດຈາງໄປໄດ້ (ຫລົ້ມຈົມເໝືອນກັບເຮືອ) ຖ້າຄວາມເຊື່ອຂອງທ່ານຈືດຈາງໄປກໍເທົ່າກັບວ່າທ່ານໄດ້ຫລົງທາງໄປຈາກພຣະເຈົ້າ ຖານະແລະສິດທິປະໂຫຍດຕ່າງໆທີ່ທ່ານໄດ້ຮັບນັ້ນກໍຈະສູນເສັຽໄປເຊັ່ນດຽວກັນ. ດັ່ງໃນພຣະທັມໂກໂລຊາຍ 2:7 ໄດ້ກ່າວເຕືອນໄວ້ວ່າ *"ຈົ່ງຢັ່ງຮາກແລະກໍ່ຮ່າງສ້າງຂຶ້ນໃນພຣະອົງ ແລະຕັ້ງໝັ້ນຄົງຢູ່ໃນຄວາມເຊື່ອຕາມທີ່ເຈົ້າທັງຫລາຍໄດ້ຮັບຄຳສັ່ງສອນມາແລ້ວ..."* ດັ່ງນັ້ນ ທ່ານຈົ່ງພະຍາຍາມບຳລຸງລ້ຽງຄວາມເຊື່ອໃຫ້ຢັ່ງຮາກເລິກແລະໝັ້ນຄົງແຂງແຮງດ້ວຍການປະຕິບັດດັ່ງຕໍ່ໄປນີ້...

**1. ອະທິຖານແລະອ່ານພຣະຄັມພີທຸກວັນ** ການອະທິຖານແມ່ນໂອກາດທີ່ທ່ານຈະໄດ້ໂອ້ລົມກັບພຣະເຈົ້າແລະການອ່ານພຣະຄັມພີກໍຈະເປັນໂອກາດທີ່ພຣະເຈົ້າຈະໄດ້ໂອ້ລົມກັບທ່ານ. ທ່ານຄວນຈະໂອ້ລົມກັບພຣະເຈົ້າເປັນປະຈຳທຸກວັນ ຖ້າທ່ານຫາກມີຄວາມຈຳເປັນແລະມີບັນຫາເຣື່ອງໃດ ທ່ານກໍສາມາດອະທິຖານຂາບທູນຕໍ່ພຣະເຈົ້າໄດ້ທຸກເວລາ ພຣະເຈົ້າຈະຊົງຮັບຟັງທ່ານແລະພ້ອມທີ່ຈະຕອບຄຳອະທິຖານຂອງທ່ານ ຈາກການກະທຳດັ່ງກ່າວນີ້ທ່ານກໍຈະມີປະສົບການຊີວິດກັບພຣະເຈົ້າຫລາຍຂຶ້ນ ຄວາມເຊື່ອຂອງທ່ານກໍຈະເຂັ້ມແຂງຂຶ້ນໄປເລື້ອຍໆ. ຖ້າຫາກເປັນໄປໄດ້ທ່ານຄວນອ່ານປຶ້ມຄຣິສຕຽນອື່ນໆ ນຳ ເພື່ອທ່ານຈະມີຄວາມເຂົ້າໃຈໃນຊີວິດຄຣິສຕຽນຫລາຍຂຶ້ນ (**ຖ້າຫາກທ່ານຍັງບໍ່ທັນມີປຶ້ມພຣະຄັມພີ ທ່ານກໍສາມາດຢືມໄດ້ຈາກອ້າຍເອື້ອຍນ້ອງຄຣິສຕຽນໃນໂບດຂອງທ່ານ ຕໍ່ຈາກນັ້ນທ່ານຕ້ອງພະຍາຍາມຊື້ປຶ້ມພຣະຄັມພີເປັນຂອງຕົນເອງ**)

**2. ຮ່ວມນະມັສການທີ່ຄຣິສຕະຈັກຂອງທ່ານທຸກວັນອາທິດ** ການໄປນະມັສການທີ່ຄຣິສຕະຈັກທຸກວັນອາທິດຈະເຮັດໃຫ້ທ່ານໄດ້ຮຽນຮູ້ຄຳສອນເພື່ອທ່ານຈະໄດ້ຮູ້ຈັກກັບພຣະເຈົ້າຫລາຍຂຶ້ນ ແລະພຣະເຈົ້າຈະຊົງຟື້ນຟູຈິດໃຈຂອງທ່ານ ໃຫ້ທ່ານມີກຳລັງເຫື່ອແຮງໃນການດຳເນີນຊີວິດແຕ່ລະອາທິດ(ສັປດາ) ທ່ານຄວນໄປຮ່ວມນະມັສການໃນວັນອາທິດເປັນປະຈຳ ຢ່າຂາດໂດຍທີ່ບໍ່ຈຳເປັນ ຈົ່ງຖືວ່າພຣະເຈົ້າເປັນທີນຶ່ງກ່ອນສິ່ງທັງປວງ.

**3. ຮ່ວມກຸ່ມສາມັກຄີທັມກັບພີ່ນ້ອງຄຣິສຕຽນ** ໃນວັນອາທິດ ຫລືໃນຊ່ວງຣະຫວ່າງແຕ່ລະອາທິດ ຈະມີຄຣິສຕຽນບາງຄົນ ບາງຄຣິສຕະຈັກ ຈັດກອງປະຊຸມຕ່າງໆ ຊຶ່ງອາດຈະຈັດຢູ່ທີ່ໂບດຫລືຢູ່ເຮືອນ ທ່ານຄວນພະຍາຍາມສະ

ລະເວລາໄປຮ່ວມກັບກຸ່ມເຫລົ່ານີ້ສເມີ ເພື່ອທ່ານຈະໄດ້ຮູ້ຈັກ ລ້ຽງແກ່ນ ແລະສນິດສນົມກັບພີ່ນ້ອງຄຣິສຕຽນ ຊຶ່ງຈະເຮັດໃຫ້ທ່ານໄດ້ຮັບຄຳແນະນຳແລະມີກຳລັງໃຈ ພ້ອມທັງຈະໄດ້ເພີ້ມເຕີມປະສົບການໃນຊີວິດຄຣິສຕຽນຫລາຍຂຶ້ນ.

**4. ອົດທົນຕໍ່ການຕຳຫນິຂອງຄົນອື່ນ** ເມື່ອທ່ານເປັນຄຣິສຕຽນແລ້ວ ອາດຈະເຮັດໃຫ້ຄົນໃນຄອບຄົວ ພີ່ນ້ອງ ຫລືເພື່ອນໆ ບໍ່ເຂົ້າໃຈ, ຕຳຫນິ, ບີບຄັ້ນ, ເພື່ອໃຫ້ທ່ານເລີກເຊື່ອໃນພຣະເຈົ້າ. ຈົ່ງຂໍຫນູນໃຈໃຫ້ທ່ານມີຄວາມເຊື່ອອັນເຂັ້ມແຂງ, ຍືນຢັດ, ອົດທົນ, ແລະຢ່າຫວັ່ນໄຫວ. ໃນຂະນະດຽວກັນຈົ່ງຕອບສນອງ ແລະສະແດງອອກຕໍ່ຄົນເຫລົ່ານັ້ນດ້ວຍຄວາມສຸພາບ, ນອບນ້ອມຖ່ອມຕົນ, ແລະຈົ່ງສະແດງຊີວິດທີ່ດີ ທີ່ພຣະເຈົ້າໄດ້ຊົງປ່ຽນແປງທ່ານໃຫ້ເຂົາເຈົ້າໄດ້ເຫັນໄດ້ສັມຜັດ. ການກະທຳຂອງທ່ານດັ່ງກ່າວນີ້ ຈະສົ່ງຜົນໃຫ້ເຂົາເຈົ້າອາດຈະຍອມຮັບທ່ານໄດ້ ແລະທ່ານຕ້ອງພະຍາຍາມຊ່ອຍເຂົາເຈົ້າໃຫ້ຖິ້ມໃຈເກົ່າເອົາໃຈໃຫມ່ມາເຊື່ອໃນພຣະເຈົ້າເຫມືອນກັນກັບທ່ານ.

**5. ຊວນຄົນອື່ນໃຫ້ມາຮູ້ຈັກກັບພຣະເຈົ້າ** ບັດນີ້ທ່ານໄດ້ຮັບຄວາມລອດພົ້ນ ຄືພົ້ນຈາກບາບແລ້ວ ທ່ານໄດ້ເປັນລູກຂອງພຣະເຈົ້າ ແລະໄດ້ຮັບສິດທິຜົນປໂຍດຢ່າງຫລວງຫລາຍ. ຈະເປັນການດີເທົ່າໃດຫນໍ ຖ້າຫາກຄົນທີ່ເຮົາຮັກ ແລະຄົນທີ່ເຮົາຮູ້ຈັກໄດ້ຮັບສິ່ງດີໆ ເຫລົ່ານີ້ເຫມືອນດັ່ງທີ່ເຮົາໄດ້ຮັບຢູ່ໃນເວລານີ້.

**ຕັດສິນໃຈ:** - ທ່ານແນ່ໃຈແທ້ບໍ່ວ່າ ທ່ານໄດ້ຕ້ອນຮັບພຣະເຢຊູຄຣິດເປັນອົງພຣະຜູ້ເປັນເຈົ້າຂອງທ່ານ? .................

( )ແນ່ໃຈແລ້ວ ( )ບໍ່ທັນແນ່ໃຈເທື່ອ

- ທ່ານຕັ້ງໃຈຈະຮັກສາຄວາມເຊື່ອໃຫ້ຢັ່ງຮາກເລິກຈົນຕລອດຊີວິດຫລືບໍ່?......................................

( )ຕັ້ງໃຈແລ້ວ ( )ບໍ່ທັນໄດ້ຕັ້ງໃຈເທື່ອ

**ທ່ອງຈຳຂໍ້ພຣະຄັມພີ:** ພຣະທັມໂຢຮັນ 3:16 *"ເພາະວ່າພຣະເຈົ້າຊົງຮັກໂລກ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ."*

# ບົດທີ 2
# ອ່ານພຣະຄັມພີ ແລະ ອະທິຖານປະຈຳວັນ

*ກະຣຸນາເປີດພຣະຄັມພີອ່ານ ພຣະທັມໂຢຮັນ 15:1-10 ຈົ່ງພິຈາຣະນາເບິ່ງວ່າ ອົງພຣະເຢຊູໄດ້ປຽບທຽບທ່ານໃສ່ກັບພຣະອົງຢ່າງໃດ? ພຣະເຢຊູຢາກໃຫ້ທ່ານມີຄວາມສັມພັນກັບພຣະອົງຢ່າງໃດ? ຖ້າຫາກທ່ານກະທຳຕາມຈະມີຫຍັງເກີດຂຶ້ນ? ແລະຖ້າທ່ານບໍ່ກະທຳຕາມເດ ຈະມີຫຍັງເກີດຂຶ້ນ?*

ພຣະເຈົ້າຊົງມີນ້ຳພຣະທັຍຢາກໃຫ້ຄຣິສຕຽນທຸກຄົນມີຊີວິດທີ່ເຂົ້າສນິດກັບພຣະອົງ ການມີຊີວິດຕິດສນິດກັບພຣະເຈົ້າ ກໍເຫມືອນກັບທີ່ເຮົາຕິດສນິດ(ລົ້ງເຄີຍ ຮູ້ຈັກກັນຫລາຍ) ກັບຄົນໃດຄົນນຶ່ງເປັນພິເສດເຊັ່ນ ໄດ້ໃຊ້ເວລາຢ່າງຫລວງຫລາຍນຳກັນ, ໄດ້ໂອ້ລົມກັນ, ໄດ້ກະທຳສິ່ງຕ່າງໆ ຮ່ວມກັນເປັນປະຈຳ. ເມື່ອເຮົາຮູ້ຈັກກັນຫລາຍກໍຮູ້ໃຈກັນຫລາຍ, ເຊື່ອໃຈກັນຫລາຍ, ຮັກກັນຫລາຍ ແລະຕອບສນອງຄວາມຕ້ອງການຂອງກັນແລະກັນຫລາຍ ຈົນກາຍເປັນຄວາມສັມພັນທີ່ມີຕໍ່ກັນຢ່າງພິເສດ, ເລິກເຊິ່ງ ຫລາຍກວ່າຄວາມສັມພັນທີມີຕໍ່ຄົນອື່ນໆ.

ການອ່ານພຣະຄັມພີແລະອະທິຖານປະຈຳວັນ ເປັນຫລັກປະຕິບັດພື້ນຖານທີ່ຈະເຮັດໃຫ້ຊີວິດຂອງທ່ານຕິດສນິດກັບພຣະເຈົ້າ ຊຶ່ງເອີ້ນອີກຢ່າງນຶ່ງວ່າ "ການເຝົ້າດ່ຽວ" ຫລື "ການເຂົ້າເຝົ້າພຣະເຈົ້າ" ຫມາຍເຖິງການເຂົ້າເຝົ້າພຣະເຈົ້າເປັນທາງສ່ວນຕົວ. ການເຂົ້າເຝົ້າພຣະເຈົ້າແມ່ນການໂອ້ລົມກັບພຣະເຈົ້າທຸກວັນ ພຣະເຈົ້າເວົ້າກັບເຮົາເວລາເຮົາອ່ານພຣະຄັມພີ ແລະເຮົາໄດ້ເວົ້າກັບພຣະເຈົ້າເວລາເຮົາອະທິຖານ. ເປັນເຣື່ອງທີ່ຫນ້າຊົມຊື່ນຍິນດີນຳຫລາຍ ທີ່ທ່ານສາມາດໂອ້ລົມກັບພຣະເຈົ້າໄດ້ທຸກວັນ ທ່ານຈະໄດ້ຮຽນຮູ້ເຣື່ອງການອ່ານພຣະຄັມພີແລະຕໍ່ຈາກນັ້ນທ່ານກໍຈະໄດ້ຮຽນຮູ້ເຣື່ອງການອະທິຖານຕໍ່ໄປ.

## ການອ່ານພຣະຄັມພີ:

ກ່ອນທີ່ທ່ານຈະອ່ານພຣະຄັມພີ ທ່ານຄວນຈະຮູ້ກ່ອນວ່າພຣະຄັມພີຄືຫຍັງ ແລະສຳຄັນຢ່າງໃດ. ພຣະຄັມພີແມ່ນພຣະວັຈນະຫລືພຣະຄຳອັນສັກສິດຂອງພຣະເຈົ້າ ທີ່ໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າໃຫ້ (ຜູ້ປະກາດພຣະທັມ) ຂຽນຂຶ້ນ ດັ່ງນັ້ນຈຶ່ງເປັນຖ້ອຍຄຳແຫ່ງຄວາມຈິງ, ບໍ່ມີຜິດພາດ, ແລະເປັນຖ້ອຍຄຳທີ່ມີຣິດອຳນາດສາມາດວິນິສັຍຈິດໃຈ ປ່ຽນແປງຊີວິດ ແລະບຳລຸງລ້ຽງຈິດວິນຍານ. ພຣະຄັມພີເປັນຫລັກຄວາມເຊື່ອແລະເປັນຫລັກການດຳເນີນຊີວິດອັນສູງສຸດຂອງຄຣິສຕຽນ ( 2 ຕີໂມທຽວ 3:15-17; ເຮັບເຣີ 4:12 )

ທ່ານຈະເຫັນຄຸນຄ່າຂອງພຣະຄັມພີເຫນືອສິ່ງອື່ນໃດ ເມື່ອທ່ານຫມັ່ນອ່ານພຣະຄັມພີ, ທ່ອງຈຳຂໍ້ພຣະຄັມພີ, ເຊື່ອຟັງຄຳສອນໃນພຣະຄັມພີ. ການອ່ານພຣະຄັມພີປະຈຳວັນຄວນກະທຳດັ່ງນີ້...

1. ເມື່ອທ່ານອ່ານພຣະຄັມພີປະຈຳວັນ ທ່ານຄວນມີປຶ້ມພຣະຄັມພີ, ປຶ້ມຈົດບັນທຶກ, ສໍຫລືປາກກາ ເພື່ອຈົດບັນທຶກໄວ້ວ່າມື້ນີ້ໄດ້ອ່ານພຣະຄັມພີເຫລັ້ມໃດ, ບົດໃດ, ຂໍ້ໃດ ແລະມີຂໍ້ຄິດແນວໃດແດ່ຈາກການອ່ານນັ້ນ.

2. ກ່ອນທີ່ທ່ານຈະເລີ້ມອ່ານ ຂໍໃຫ້ທ່ານອະທິຖານຂໍໃຫ້ພຣະເຈົ້າຊ່ວຍທ່ານໃຫ້ເຂົ້າໃຈແລະໄດ້ຂໍ້ຄິດ ຄຳສອນໃຈສຳລັບມື້ນີ້ ຖ້າຫາກທ່ານຮ້ອງເພງສັຣເສີນພຣະເຈົ້ານຳກໍຍິ່ງເປັນການດີ.

3. ຂໍແນະນຳໃຫ້ທ່ານອ່ານພຣະຄັມພີພາກພຣະສັນຍາໃຫມ່ກ່ອນ ຕັ້ງແຕ່ພຣະທັມມັດທາຍໄປຈົນຮອດພຣະທັມພຣະນິມິດ ຈົ່ງອ່ານຕໍ່ເນື່ອງໄປເລື້ອຍໆ ຈົນຈົບ. ຕອນທຳອິດຄວນຈະອ່ານຢ່າງຫນ້ອຍມື້ລະບົດ.

4. ວິທີອ່ານພຣະຄັມພີໃຫ້ໄດ້ຜົນດີສາມາດກະທຳໄດ້ໂດຍ (1) ອ່ານຢ່າງຕຶກຕອງພິຈາຣະນາ ຖ້າຫາກຍັງບໍ່ເຂົ້າໃຈໃຫ້ອ່ານລົ້ມຄືນອີກຫລາຍໆ ຄັ້ງ ແລະອ່ານດ້ວຍໃຈຍອມເຊື່ອຟັງ (2) ຈົ່ງສັງເກດເບິ່ງວ່າພຣະຄັມພີຂໍ້ທີ່ທ່ານກຳລັງອ່ານຢູ່ນັ້ນໄດ້ບອກທ່ານເຣື່ອງພຣະເຈົ້າຫລືພຣະເຢຊູວ່າແນວໃດແດ່. ມີຄຳສອນຫລືຄຳສັ່ງຫຍັງແດ່ໃຫ້ທ່ານປະຕິບັດຕາມ. ມີຕົວຢ່າງທີ່ດີຫລືບໍ່ດີທີ່ທ່ານຄວນເອົາເປັນແບບຢ່າງຫລືບໍ່ຄວນເອົາເປັນແບບຢ່າງ (ພຣະຄັມພີໄດ້ຈົດ

ບັນທຶກທັງສິ່ງທີ່ດີແລະທີ່ບໍ່ດີເອົາໄວ້) ມີຄໍາສັນຍາແນວໃດແດ່ ແລະມີຂໍ້ຄິດແນວໃດແດ່.

5. ຂໍ້ຄິດຫລືຄໍາສອນຕ່າງໆທີ່ທ່ານໄດ້ຮັບຈາກການອ່ານພຣະຄັມພີ ທ່ານຄວນຈົດໄວ້ໃນປື້ມບັນທຶກເພື່ອຈະໄດ້ເອົາມາອ່ານທົບທວນເບິ່ງອີກຕາມພາຍຫລັງ ຫລືຖ້າພົບພຣະຄັມພີຂໍ້ໃດທີ່ໜ້າສົນໃຈທ່ານຈົ່ງຂີດເສັ້ນກ້ອງໄວ້ເພື່ອຈະໄດ້ຮູ້ວ່າພຣະຄັມພີຂໍ້ນັ້ນມີຄວາມສໍາຄັນ ແລະຖ້າທ່ານຫາກມີຄວາມສົງສັຍຂ້ອງໃຈແນວໃດກໍໃຫ້ນໍາມາຖາມຄຣິສຕຽນຄົນອື່ນທີ່ມີຄວາມເຂົ້າໃຈດີ ຫລືສຶກສາຄົ້ນຄວ້າຈາກປື້ມອະທິບາຍພຣະຄັມພີຫລາຍໆ ເຫລົ່ານັ້ນກໍຍິ່ງເປັນການດີ.

6. ຫລັງຈາກໄດ້ຂໍ້ຄິດຄໍາສອນຈາກການອ່ານພຣະຄັມພີແລ້ວ ຂໍໃຫ້ທ່ານຕັ້ງໃຈທີ່ຈະນໍາເອົາຂໍ້ຄິດແລະຄໍາສອນເຫລົ່ານັ້ນມາໃຊ້ໃຫ້ເກີດຜົນໃນການດໍາເນີນຊີວິດປະຈໍາວັນ.

## ການອະທິຖານ (ອ້ອນວອນ):

ການອະທິຖານບໍ່ແມ່ນການທ່ອງຂຶ້ນໃຈຫລືຈື່ຈໍາເອົາເໝືອນບົດສູດ ແຕ່ເປັນການເວົ້າກັບພຣະເຈົ້າດ້ວຍຄວາມຄິດແລະຄວາມຮູ້ສຶກອັນແທ້ຈິງຈາກໃຈຂອງເຮົາ. ການອະທິຖານໃນການເຂົ້າເຝົ້າພຣະເຈົ້າປະຈໍາວັນຄວນກະທໍາຕາມຂັ້ນຕອນດັ່ງນີ້...

**1. ຄໍາຂຶ້ນຕົ້ນຫລືຄໍາທີ່ໃຊ້ເອີ້ນພຣະເຈົ້າ** ເຮົາສາມາດໃຊ້ໄດ້ຫລາຍຄໍາເຊັ່ນ ຂ້າແດ່ພຣະບິດາ, ຂ້າແດ່ພຣະເຈົ້າຜູ້ສູງສຸດ, ພຣະອົງເຈົ້າຂ້າ, ພຣະບິດາເຈົ້າ ແລະອື່ນໆ. ສ່ວນຄໍາທີ່ໃຊ້ເອີ້ນໂຕເຮົາເອງແມ່ນ ຂ້າພຣະອົງ ຫລືລູກ, ຖ້າຫາກຫລາຍຄົນກໍໃຊ້ຄໍາວ່າ ຂ້າພຣະອົງທັງຫລາຍ, ພວກຂ້າພຣະອົງ ຫລືພວກລູກໆ.

**2. ຄວນເລີ້ມຕົ້ນການອະທິຖານດ້ວຍການສັຣເສີນແລະຂອບພຣະຄຸນພຣະເຈົ້າ** ທ່ານສັຣເສີນພຣະເຈົ້າໄດ້ໂດຍການອ້າງເຖິງພຣະລັກສະນະຕ່າງໆ ທີ່ດີເລີດຂອງພຣະເຈົ້າເຊັ່ນ ສັຣເສີນພຣະເຈົ້າເພາະວ່າພຣະອົງຊົງບໍຣິສຸດ, ຊົງເປັນຄວາມຮັກ, ຊົງເປັນພຣະຜູ້ສ້າງ, ຊົງເປັນພຣະຜູ້ໄຖ່, ຊົງດູແລຊີວິດ ແລະອື່ນໆ. ທ່ານສາມາດຂອບພຣະຄຸນພຣະເຈົ້າໄດ້ໂດຍອ້າງເຖິງສິ່ງທີ່ດີຕ່າງໆ ທີ່ພຣະອົງຊົງກະທໍາຕໍ່ມະນຸດທັງປວງແລະຕົວທ່ານເອງເຊັ່ນ ຂອບພຣະຄຸນພຣະເຈົ້າທີ່ຊົງໄຖ່ຂ້າພຣະອົງໃຫ້ພົ້ນຈາກບາບ ຂອບພຣະຄຸນພຣະອົງທີ່ຊົງດູແລຊີວິດ ຂອບພຣະຄຸນພຣະອົງທີ່ຊົງຕອບຄໍາອະທິຖານຂອງຂ້າພຣະອົງ ຂອບຄຸນພຣະອົງທີ່ຊົງປະທານອາຫານປະຈໍາວັນ ຂອບພຣະຄຸນພຣະອົງທີ່ຊົງປ່ຽນແປງຊີວິດຂອງຂ້າພຣະອົງ ແລະອື່ນໆ.

**3. ສາຣະພາບບາບ** ຖ້າທ່ານເຮັດຜິດພາດໄປ ໄດ້ເຮັດຜິດບາບສິ່ງໃດກໍຕາມຂໍໃຫ້ສໍານຶກຜິດແລະອະທິຖານຂໍການຊົງຍົກໂທດກັບພຣະເຈົ້າ ໂດຍບອກເຖິງຄວາມຜິດບາບຢ່າງເຈາະຈົງໃນສິ່ງທີ່ທ່ານໄດ້ກະທໍາ ແລະອະທິຖານຂໍກໍາລັງເຫື່ອແຮງຈາກພຣະເຈົ້າເພື່ອໃຫ້ຊ່ອຍທ່ານເອົາຊະນະຕໍ່ຄວາມບາບນັ້ນ ແລະຈົ່ງກັບໃຈໃໝ່ບໍ່ກະທໍາສິ່ງນັ້ນອີກຊຶ່ງທ່ານອາດຈະທູນຕໍ່ພຣະເຈົ້າວ່າ... *"ຂໍພຣະອົງຊົງຍົກໂທດໃຫ້ແກ່ຂ້າພຣະອົງດ້ວຍເທີ້ນທີ່ຂ້າພຣະອົງໄດ້ກະທໍາຜິດໃນເຣື່ອງ............... ຂໍໂຜດຊົງຊ່ອຍຂ້າພຣະອົງຢ່າໃຫ້ເຮັດສິ່ງນັ້ນອີກ...."*

**4. ທູນຂໍ** ພຣະເຈົ້າຊົງໃຫ້ສິດທິແກ່ທ່ານໃນການທູນຂໍເຣື່ອງຕ່າງໆ ທີ່ທ່ານຕ້ອງການ ທ່ານສາມາດທູນຂໍນໍາພຣະອົງໄດ້ຢ່າງເຕັມທີ່ ພຣະເຈົ້າຈະຊົງຮັບຟັງແລະຕອບຄໍາອະທິຖານຂອງທ່ານ ຊຶ່ງແຕ່ລະເທື່ອພຣະອົງຈະຊົງຕອບທ່ານແຕກຕ່າງກັນໄປ ບາງຄັ້ງພຣະອົງຈະຊົງຕອບໄວ ບາງຄັ້ງພຣະອົງຈະບໍ່ຕອບໃນທັນທີ ແລະຊົງຕອບຕາມເວລາຂອງພຣະອົງ ເຮົາຕ້ອງອົດທົນໃນການລໍຄອຍ ບາງຄັ້ງພຣະອົງຈະຊົງຕອບວ່າ "ບໍ່" ຄືພຣະອົງບໍ່ຕອບກົງກັບທີ່ເຮົາຂໍ ແຕ່ພຣະອົງຊົງຕອບເປັນຢ່າງອື່ນແທນ ບໍ່ວ່າພຣະອົງຈະຕອບຄໍາອະທິຖານຂອງທ່ານຢ່າງໃດກໍຕາມ ພຣະອົງຊົງຮູ້ດີແລ້ວວ່າສິ່ງໃດແມ່ນສິ່ງທີ່ດີທີ່ສຸດສໍາລັບເຮົາ ເພາະພຣະອົງຊົງສັນຍາວ່າຈະຊົງປະທານ "ສິ່ງທີ່ດີ" ໃຫ້ແກ່ລູກຂອງພຣະອົງ (ມັດທາຍ 7:11) ແລະຈະຊ່ອຍບັນດາຜູ້ທີ່ຮັກພຣະອົງໃຫ້ເກີດຜົນດີໃນທຸກສິ່ງ (ໂຣມ 8:28) ເຖິງແມ່ນວ່າ

ພຣະອົງຈະຊົງຕອບຄໍາອະທິຖານຂອງພວກເຮົາແນວໃດກໍຕາມ ພຣະອົງຊົງສັນຍາໄວ້ວ່າ *"ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເຣື່ອງຄວາມປາຖນາຂອງເຈົ້າທຸກຢ່າງຕໍ່ພຣະເຈົ້າ ດ້ວຍການໄຫວ້ວອນ ແລະການອ້ອນວອນຂໍ, ພ້ອມກັບການຂອບພຣະຄຸນ, ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫລາຍໄວ້ໃນພຣະເຢຊູຄຣິດ."* (ຟີລິບປອຍ 4:6)

ການອ້ອນວອນອະທິຖານຂອງທ່ານ ຕ້ອງອະທິຖານດ້ວຍຄວາມເຊື່ອ ຄືເຊື່ອວ່າພຣະເຈົ້າຊົງຍິ່ງໃຫຍ່ ຊົງສາມາດກະທໍາໄດ້ຕາມທີ່ທ່ານທູນຂໍ ຄົນທີ່ທູນຂໍໂດຍຂາດຄວາມເຊື່ອມັກຈະບໍ່ໄດ້ຜົນ ພຣະເຢຊູຊົງກ່າວວ່າ *"ສິ່ງສາຣະພັດທີ່ພວກທ່ານທູນຂໍໃນການອ້ອນວອນ ຖ້າມີຄວາມເຊື່ອທ່ານກໍຈະໄດ້ສິ່ງນັ້ນ."* (ມັດທາຍ 21:22 ) *"...ຖ້າເຈົ້າເຊື່ອຄົງຈະໄດ້ເຫັນສະງ່າຣາສີຂອງພຣະເຈົ້າ."* (ໂຢຮັນ 11:40) *"ຖ້າພວກທ່ານຫາກມີຄວາມເຊື່ອບໍ່ໄດ້ສົງສັຍ ທ່ານຈະເຮັດໄດ້ດັ່ງທີ່ເຮົາໄດ້ເຮັດແກ່ຕົ້ນເດື່ອນີ້ ແລະບໍ່ພຽງເທົ່ານັ້ນ, ແຕ່ທ່ານວ່າຈະບອກພູນີ້ວ່າຈົ່ງຍ້າຍໄປລົງນໍ້າທະເລເສັຽ ກໍຈະເປັນດັ່ງນັ້ນ."* ( ມັດທາຍ 21:21) *"ແຕ່ໃຫ້ຜູ້ນັ້ນທູນຂໍດ້ວຍຄວາມເຊື່ອ ຢ່າໃຫ້ມີໃຈສົງສັຍ ເພາະຜູ້ທີ່ສົງສັຍນັ້ນເປັນເຫມືອນຟອງນໍ້າທີ່ຖືກລົມພັດຊັດໄປມາ ຢ່າໃຫ້ຜູ້ນັ້ນຄິດວ່າຕົນຈະໄດ້ຮັບສິ່ງໃດຈາກອົງພຣະຜູ້ເປັນເຈົ້າ."* (ຢາໂກໂບ 1:6-7 ) *"...ຄໍາອ້ອນວອນທີ່ປະກອບດ້ວຍຄວາມເຊື່ອຈະເຮັດໃຫ້ຜູ້ປ່ວຍນັ້ນລອດພົ້ນ ແລະອົງພຣະຜູ້ເປັນເຈົ້າຈະຊົງໂຜດໃຫ້ຜູ້ນັ້ນລຸກຂຶ້ນດີເປັນປົກກະຕິ ແລະຖ້າຜູ້ນັ້ນໄດ້ທໍາຜິດເຮັດບາບ ພຣະອົງກໍຈະຊົງໂຜດອະພັຍໃຫ້."* (ຢາໂກໂບ 5:15)

ເຖິງຢ່າງໃດກໍຕາມ, ທ່ານບໍ່ຄວນທູນຂໍໃນທາງທີ່ຜິດ ຄືທູນຂໍດ້ວຍໃຈໂລບໂລພາເຫັນແກ່ຕົວຊຶ່ງຈະນໍາໄປສູ່ຄວາມບາບ ເພາະວ່າເປັນສິ່ງທີ່ພຣະເຈົ້າບໍ່ຊົງພໍພຣະທັຍ ພຣະອົງຈະບໍ່ຕອບຄໍາອະທິຖານແບບນີ້ ດັ່ງພຣະທັມຢາໂກໂບ 4:3 ກ່າວວ່າ *"ເຈົ້າທັງຫລາຍຂໍແລະບໍ່ໄດ້ຮັບເພາະຂໍຜິດ ເພື່ອເອົາໄປໃຊ້ໃນກິເລດຕັນຫາຂອງຕົນ."*

ສິ່ງທີ່ທ່ານຄວນອະທິຖານທູນຂໍທຸກວັນໄດ້ແກ່ ຂໍໃຫ້ຂ້າພຣະອົງມີຊີວິດທີ່ພໍພຣະທັຍພຣະເຈົ້າໃນທຸກດ້ານ ຂໍໃຫ້ຂ້າພຣະອົງສາມາດຊ່ອຍນໍາຄົນອື່ນມາເຊື່ອໃນພຣະເຢຊູໃຫ້ໄດ້ຫລາຍໆ ຂໍໃຫ້ສະມາຊິກຄອບຄົວແລະຫມູ່ເພື່ອນມາເຊື່ອໃນພຣະເຢຊູ ຂໍພຣະອົງຊົງປະທານສິ່ງທີ່ຈໍາເປັນໃນການດໍາເນີນຊີວິດໃຫ້ຂ້າພຣະອົງຢ່າງພຽງພໍ ນອກຈາກນີ້ຄວນຈະອະທິຖານເພື່ອຄຣິສຕະຈັກແລະປະເທດຊາດນໍາ.

ຈົ່ງເບິ່ງຕົວຢ່າງຄໍາອະທິຖານ ທີ່ພຣະເຢຊູຊົງສອນເຫລົ່າອັຄສາວົກໃນພຣະທັມມັດທາຍ 6:9-13 ຊຶ່ງກ່າວວ່າດັ່ງນີ້ *"ເຫດສັນນີ້ທ່ານຈົ່ງອ້ອນວອນຕາມຢ່າງນີ້ວ່າ ຂ້າແດ່ພຣະບິດາຂອງຂ້າພຣະອົງທັງຫລາຍ ຜູ້ຊົງສະຖິດໃນສວັນ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄຣົບບູຊາ ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່ ຂໍໃຫ້ເປັນໄປຕາມນໍ້າພຣະທັຍຂອງພຣະອົງ ໃນສວັນເປັນຢ່າງໃດກໍໃຫ້ເປັນໄປຢ່າງນັ້ນທີ່ແຜ່ນດິນໂລກ. ຂໍຊົງໂຜດປະທານອາຫານປະຈໍາວັນໃຫ້ແກ່ຂ້າພຣະອົງທັງຫລາຍໃນກາລະວັນນີ້ ຂໍຊົງໂຜດຍົກໂທດໃຫ້ຂ້າພຣະອົງ ເຫມືອນຂ້າພຣະອົງຍົກໂທດໃຫ້ ແກ່ຜູ້ເຮັດຜິດຕໍ່ຂ້າພຣະອົງນັ້ນ. ແລະຂໍຢ່າພາຂ້າພຣະອົງເຂົ້າໄປໃນການທົດລອງ ແຕ່ຂໍຊົງໂຜດໃຫ້ພົ້ນຈາກການຊົ່ວຮ້າຍ ເຫດວ່າຣາຊອານາຈັກ, ຣິດອໍານາດ, ແລະພຣະຣັສມີກໍເປັນຂອງພຣະອົງສືບໆ ໄປເປັນນິດ ອາເມນ."*

**5. ການຈົບຄໍາອະທິຖານ:** ເມື່ອຈະຈົບຄໍາອະທິຖານຂອງທ່ານ ຈົ່ງຈົບດ້ວຍການກ່າວອ້າງພຣະນາມຂອງອົງພຣະເຢຊູເຊັ່ນ *"ຂ້າພຣະອົງອະທິຖານໃນພຣະນາມຂອງອົງພຣະເຢຊູຄຣິດເຈົ້າ ອາເມນ"* ຄໍາວ່າ "ອາເມນ" ແມ່ນພຣະສາເດີມຂອງພຣະຄັມພີຊຶ່ງແປວ່າ "ແນ່ນອນ" ຊຶ່ງໃຊ້ເວົ້າສນັບສນູນຄໍາອະທິຖານ ວ່າສິ່ງທີ່ເຮົາໄດ້ອະທິຖານຕໍ່ພຣະເຈົ້ານັ້ນ ເຮົາເຫັນຊອບຢ່າງແນ່ນອນ ແລະເຮົາເຊື່ອວ່າຈະເປັນໄປຕາມຄໍາອະທິຖານຢ່າງແນ່ນອນ.

## ຂໍ້ແນະນໍາເພີ້ມເຕີມບາງປະການ:

ທ່ານຄວນເຂົ້າເຝົ້າພຣະເຈົ້າໂດຍສ່ວນຕົວ(ຄົນດຽວ)ທຸກວັນ ຢ່າຂາດຫາກບໍ່ຈໍາເປັນ ຄວນເຂົ້າເຝົ້າພຣະເຈົ້າທຸກວັນຫລັງຈາກຕື່ນແຕ່ນອນແລະກ່ອນເຂົ້ານອນ ເພາະຊ່ວງນີ້ເປັນຊ່ວງເວລາທີ່ສງົບງຽບ ແລະຄວນໃຊ້ເວລາໃນການເຂົ້າເຝົ້າພຣະເຈົ້າໃຫ້ດົນພໍສົມຄວນ ເພາະຈະເຮັດໃຫ້ທ່ານມີຄວາມອີ່ມໃຈ ມີສັນຕິສຸກໃນໃຈ ຖ້າທ່ານຫາກຮູ້ສຶກ

ວ່າທ່ານມີເວລາໜ້ອຍທ່ານກໍຄວນຕື່ນແຕ່ເຊົ້າຂຶ້ນອີກ ຖ້າຫາກເຮັດບໍ່ໄດ້ແທ້ໆ ຂໍໃຫ້ທ່ານໃຊ້ເວລາຊ່ວງອື່ນທີ່ເຫັນວ່າເໝາະສົມແທນ. ການເຂົ້າເຝົ້າພຣະເຈົ້າເປັນສິ່ງຈຳເປັນໃນຊີວິດຄຣິສຕຽນ ເພາະວ່າທ່ານຈະໄດ້ຮັບການເພີ່ມເຫື່ອແຮງ ເພີ້ມພະລັງຈາກພຣະເຈົ້າໃນການດຳເນີນຊີວິດແຕ່ລະວັນ ຈະເຮັດໃຫ້ທ່ານດຳເນີນຊີວິດຢ່າງເຂັ້າໃຈຫລາຍຂື້ນ.

ການເຂົ້າເຝົ້າພຣະເຈົ້າ, ການອ່ານພຣະຄັມພີແລະການອະທິຖານທຸກວັນ ຈະເຮັດໃຫ້ທ່ານມີຊີວິດທີ່ໃກ້ຊິດຕິດສນິດກັບພຣະເຈົ້າ ຈະສົ່ງຜົນໃຫ້ທ່ານມີຊີວິດທີ່ *ເກີດຜົນຢ່າງຫລວງຫລາຍ* ແຕ່ຖ້າທ່ານຫາກ *ແຍກຈາກພຣະເຈົ້າ* ທ່ານຈະບໍ່ເກີດຜົນທີ່ພຣະເຈົ້າຊົງພໍພຣະທັຍ ( ໂຢຮັນ 15:5 )

ການອະທິຖານເປັນສິ່ງທີ່ທ່ານຕ້ອງກະທຳຢ່າງສມ່ຳສເມີ ນອກຈາກໃນການເຂົ້າເຝົ້າພຣະເຈົ້າແລ້ວທ່ານຕ້ອງອະທິຖານໃນເວລາອື່ນໆ ນຳເຊັ່ນ ອະທິຖານຂອບພຣະຄຸນພຣະເຈົ້າກ່ອນຮັປທານອາຫານ ອະທິຖານເມື່ອທ່ານມີສິ່ງທີ່ສຳຄັນຕ້ອງກະທຳ ແລະເມື່ອປະເຊີນກັບບັນຫາຕ່າງໆ ເປັນຕົ້ນວ່າເມື່ອປະເຊີນກັບບັນຫາອັນໜັກໜ່ວງ ຫລືຕ້ອງການຂໍການຊົງນຳຈາກພຣະເຈົ້າເປັນພິເສດ. ທ່ານຄວນຈັດໃຫ້ມີການອະທິຖານອົດອາຫານຫລືຖືສິນອົດອາຫານ (ລູກາ 2:57; ກິຈການ 13:2-3; 14:23) ການອະທິຖານຖືສິນອົດອາຫານແມ່ນການເພິ່ງພາໃນພຣະເຈົ້າຫລາຍກວ່າທັມມະດາ ມີໃຈຈົດຈໍ່ໃນພຣະເຈົ້າເປັນພິເສດ ຊຶ່ງຈະສົ່ງຜົນໃຫ້ເຮົາໄດ້ຮັບການຊົງນຳຈາກພຣະເຈົ້າຢ່າງຫລວງຫລາຍເປັນພິເສດອີກນຳ.

**ການຕັດສິນໃຈ:** - ທ່ານຕັ້ງໃຈຈະເຂົ້າເຝົ້າພຣະເຈົ້າເປັນປະຈຳທຸກວັນຫລືບໍ່....................
( ) ຕັ້ງໃຈແລ້ວ ( )ບໍ່ທັນຕັ້ງໃຈເທື່ອ

**ທ່ອງຈຳຂໍ້ພຣະຄັມພີ:** ໂຢຮັນ 15:5 *"ເຮົາເປັນເຄືອອະງຸ່ນ ທ່ານທັງຫລາຍເປັນກິ່ງ ຜູ້ທີ່ເຂົ້າສນິດຢູ່ໃນເຮົາແລະເຮົາເຂົ້າສນິດຢູ່ໃນຜູ້ນັ້ນ ແມ່ນຜູ້ນັ້ນແຫລະ ຈະເກີດຜົນຫລາຍ ເພາະຖ້າແຍກຈາກເຮົາແລ້ວພວກທ່ານບໍ່ອາດເຮັດສິ່ງໃດໄດ້."*

# ບົດທີ 3
## ມີຊີວິດຜູກພັນກັບຄຣິສຕະຈັກ

*ກະຣຸນາເປີດພຣະຄັມພີອ່ານ ພຣະທັມກິຈການ 2:37-47 ຈົ່ງພິຈາຣະນາເບິ່ງວ່າຄົນທີ່ໄດ້ຮັບເຊື່ອພຣະເຢຊູແລ້ວ ເມື່ອໄດ້ຍິນຄຳສອນລາວຈະຕອບສນອງຢ່າງໃດ (ຂໍ້ 41)? ຄົນທີ່ຮັບເຊື່ອແລ້ວຈະເຮັດຫຍັງຕໍ່ໄປ (ຂໍ້ 42)? ບັນດາຜູ້ທີ່ເຊື່ອຈະຮ່ວມໃຈກັນໄປໂຮມຊຸມນຸມກັນບ່ອນໃດແດ່ (ຂໍ້ 45-46)? ເຂົາເຈົ້າໂຮມຊຸມນຸມກັນຈັກມື້ (ຂໍ້ 46)? ເຂົາເຈົ້າໂຮມຊຸມນຸມກັນເຮັດຫຍັງແດ່ (ຂໍ້45-47)? ສິ່ງທີ່ເຂົາເຈົ້າໄດ້ກະທຳ ສົ່ງຜົນຕໍ່ຄົນອື່ນຢ່າງໃດ (ຂໍ້ 47)?*

ເມື່ອທ່ານໄດ້ກ້າວເຂົ້າມາສູ່ຊີວິດຄຣິສຕຽນແລ້ວ ພຣະເຈົ້າບໍ່ໄດ້ໃຫ້ທ່ານເປັນຄຣິສຕຽນແບບໂດດດ່ຽວ ຄືມີຄວາມສັມພັນຣະຫວ່າງທ່ານກັບພຣະເຈົ້າແຕ່ພຽງເທົ່ານັ້ນ ແຕ່ພຣະອົງໄດ້ນຳທ່ານເຂົ້າໄປສູ່ຄອບຄົວຂອງພຣະອົງນຳ. ພຣະຄັມພີເອີ້ນຄອບຄົວຂອງພຣະເຈົ້າວ່າ "**ຄຣິສຕະຈັກ**" (1 ຕີໂມທຽວ 3:15) ຄຳນີ້ໃນພາສາເດີມຂອງພຣະຄັມພີມີຄວາມຫມາຍວ່າ "**ກຸ່ມຄົນທີ່ຖືກເອີ້ນອອກມາ**" ພຣະຄັມພີໄດ້ຊີ້ໃຫ້ເຫັນເປັນພາບພົດວ່າ ຄຣິສຕະຈັກຫລືຄອບຄົວຂອງພຣະເຈົ້າມີລັກສະນະເປັນ "**ກາຍຂອງພຣະຄຣິດ**" ແລະຄຣິສຕຽນແຕ່ລະຄົນເປັນ "**ອະວັຍຍະວະສ່ວນນຶ່ງຂອງພຣະກາຍນັ້ນ**" ( 1 ໂກຣິນໂທ 12:12-13, 27 )

ຄຣິສຕະຈັກຈຶ່ງຫມາຍເຖິງກຸ່ມຄົນຂອງບັນດາຜູ້ທີ່ເຊື່ອໃນອົງພຣະເຢຊູຄຣິດ ທີ່ມີຊີວິດຜູກພັນກັນເປັນແບບຄອບຄົວ. ຄຣິສຕະຈັກທຸກແຫ່ງໃນໂລກເປັນຄອບຄົວດຽວກັນ ເປັນພຣະກາຍຂອງພຣະຄຣິດອົງດຽວກັນ ມີພຣະເຢຊູຊົງເປັນສີສະ(ຫົວ) ຫລືເປັນພຣະປະມຸກເຫມືອນກັນ ພຽງແຕ່ວ່າແຕ່ລະຄຣິສຕະຈັກໄດ້ແຍກກັນຢູ່ຕາມທ້ອງຖິ່ນຕ່າງໆ.

ພຣະຄັມພີສອນໃຫ້ເຮົາຜູກພັນຕົນເອງກັບຄຣິສຕະຈັກໃນທັນທີ ທີ່ເຮົາໄດ້ຮັບເຊື່ອໃນອົງພຣະເຢຊູຄຣິດເຈົ້າ. ດັ່ງທີ່ພຣະທັມກິຈການ 2:44-46 ໄດ້ກ່າວໄວ້ວ່າ ບັນດາຜູ້ທີ່ເຊື່ອໃນສມັຍເລີ້ມແຣກໄດ້ພ້ອມໃຈກັນຮ່ວມຊຸມນຸມໃນທີ່ແຫ່ງດຽວກັນ "ໄດ້ຢູ່ຮ່ວມກັນ, ໄດ້ຮ່ວມປະຊຸມໃນບໍຣິເວນພຣະວິຫານ ແລະ ໄປຕາມເຮືອນຂອງເຂົາເຈົ້າ."

## ຫນ້າທີ່ແລະຄຸນຄ່າຂອງຄຣິສຕະຈັກ

ສິ່ງທີ່ຄຣິສຕະຈັກ ຫລືກຸ່ມຊົນຂອງຄຣິສຕຽນກະທຳເປັນຫລັກປະຕິບັດມີຢູ່ 5 ປະການດັ່ງນີ້

**1. ປະຊຸມນະມັສການ:** ຄຣິສຕະຈັກໄດ້ຈັດໃຫ້ມີການນະມັສການພຣະເຈົ້າເປັນປະຈຳທຸກວັນອາທິດ. ຄຣິສຕຽນໄດ້ຖືເອົາວັນອາທິດເປັນວັນພັກງານແລະນະມັສການພຣະເຈົ້າ. ການນະມັສການພຣະເຈົ້າແມ່ນການປະຊຸມກັນຂອງບັນດາຄຣິສຕຽນ ເພື່ອສະແດງຄວາມໂຄຣົບຕໍ່ພຣະເຈົ້າ, ອະທິຖານ ແລະຮຽນຮູ້ນ້ຳພຣະທັຍຂອງພຣະອົງ. ໃນການນະມັສການຈະມີການຮ້ອງເພງສັຣເສີນພຣະເຈົ້າ, ອະທິຖານ, ອ່ານພຣະຄັມພີ, ຟັງເທສນາ, ການຖວາຍຊັບເພື່ອໃຊ້ໃນວຽກງານຂອງພຣະເຈົ້າ ແລະລວມໄປເຖິງການໂອ້ລົມ, ປຶກສາກັນ ເພື່ອຮ່ວມກັນຮັບໃຊ້ພຣະເຈົ້າອີກນຳ.

ການນະມັສການແມ່ນອີກທາງນຶ່ງທີ່ທ່ານຈະໄດ້ໃກ້ຊິດສນິດກັບພຣະເຈົ້າ ດັ່ງນັ້ນການທີ່ທ່ານມີຊີວິດຜູກພັນກັບຄຣິສຕະຈັກໂດຍໄປຮ່ວມນະມັສການທີ່ຄຣິສຕະຈັກເປັນປະຈຳ ຈະເຮັດໃຫ້ຊີວິດຝ່າຍຈິດວິນຍານຂອງທ່ານເຕີບໃຫຍ່ຂຶ້ນ ມີຊີວິດຊີວາແລະເກີດຜົນ ເພາະທ່ານຈະໄດ້ຮັບການຟື້ນຟູຈິດວິນຍານ ໄດ້ຮູ້ຈັກນ້ຳພຣະທັຍພຣະເຈົ້າ ແລະມີຊີວິດທີ່ຕິດສນິດກັບພຣະເຈົ້າຢ່າງຕໍ່ເນື່ອງ. ຄຣິສຕຽນທີ່ໄປນະມັສການພຣະເຈົ້າແບບຢຸດໆ ຍ່ອນ ຈິດວິນຍານຂອງລາວຈະຄ່ອຍໆຫ່ຽວແຫ້ງລົງ ໃນທີ່ສຸດຄວາມເຊື່ອກໍເສື່ອມສລາຍຕາຍໄປ.

**2. ປະກາດຂ່າວປະເສີດ:** ຄຣິສຕະຈັກຈະທຳຫນ້າທີ່ປະກາດຂ່າວປະເສີດກັບຄົນທີ່ຍັງບໍ່ຮູ້ຈັກກັບພຣະເຈົ້າ

ການທີ່ທ່ານມີຊີວິດຜູກພັນກັບຄຣິສຕະຈັກ ທ່ານກໍມີໂອກາດຈະໄດ້ຮັບໃຊ້ພຣະເຈົ້າໃນການປະກາດຂ່າວປະເສີດກັບຄົນທີ່ທ່ານຮູ້ຈັກ ແລະນຳຄົນອື່ນມາຮູ້ຈັກກັບອົງພຣະເຢຊູຄຣິດໄດ້ຫລາຍຂຶ້ນ.

ເມື່ອມີການປະກາດຂ່າວປະເສີດ ກໍຈະມີຄົນຕອບສນອງດ້ວຍການຮັບເຊື່ອໃນອົງພຣະເຢຊູ ຄຣິສຕະຈັກກໍຈະປະກອບພິທີບັບຕິສະມາໃຫ້ແກ່ຄົນນັ້ນຕາມທີ່ອົງພຣະເຢຊູໄດ້ຊົງສັ່ງໄວ້ (ມາຣະໂກ 16:15-16) ພິທີບັບຕິສະມາແມ່ນໃຫ້ຜູ້ທີ່ຮັບເຊື່ອໄດ້ມຸດ (ຈຸ່ມຕົວ)ລົງໃນນ້ຳແລ້ວກໍລຸກຂຶ້ນມາ ຊຶ່ງມີຄວາມຫມາຍວ່າ ລາວໄດ້ຕາຍ, ຖືກຝັງກັບອົງພຣະເຢຊູຄຣິດ ລາວໄດ້ຕາຍຕໍ່ຄວາມບາບ ແລະຟື້ນຄືນມາມີຊີວິດໃຫມ່ກັບອົງພຣະເຢຊູຄຣິດ ຊີວິດຂອງລາວບໍ່ໄດ້ຢູ່ໃຕ້ອຳນາດຂອງຄວາມບາບອີກຕໍ່ໄປ (ໂຣມ 6:3-4) ພິທີນີ້ເປັນການກະທຳເພື່ອຢືນຢັນແລະປະກາດຢ່າງຈະແຈ້ງວ່າ ຄົນຜູ້ນັ້ນໄດ້ຕັ້ງໃຈຢ່າງແນ່ວແນ່ທີ່ຈະເຊື່ອຟັງພຣະເຢຊູຄຣິດແລະດຳເນີນຊີວິດຕິດຕາມພຣະອົງຢ່າງແທ້ຈິງ. ການທີ່ທ່ານມີຊີວິດຜູກພັນກັບຄຣິສຕະຈັກທ່ານກໍຈະໄດ້ຮັບບັບຕິສະມາເຫມືອນກັນ (ຖ້າຫາກທ່ານຍັງບໍ່ທັນໄດ້ຮັບ)

**3. ສອນຜູ້ທີ່ເຊື່ອໃຫ້ເຕີບໃຫຍ່ຂຶ້ນຈົນເປັນຜູ້ໃຫຍ່ຝ່າຍຈິດວິນຍານ:** ຄຣິສຕະຈັກຈະທຳຫນ້າທີ່ສອນຜູ້ທີ່ເຊື່ອໃຫ້ເຕີບໃຫຍ່ຂຶ້ນຈົນເປັນຜູ້ໃຫຍ່ຝ່າຍຈິດວິນຍານ. ການທີ່ທ່ານມີຊີວິດຜູກພັນກັບຄຣິສຕະຈັກທ່ານຈະໄດ້ຮັບການສອນແລະການສ້າງຊີວິດໃຫມ່ ຈາກຄຣິສຕຽນໃຫມ່ທີ່ເປັນເຫມືອນເດັກອ່ອນໃນພຣະຄຣິດ ຈົນເຕີບໃຫຍ່ຂຶ້ນກາຍເປັນຜູ້ໃຫຍ່ຝ່າຍຈິດວິນຍານ.

**4. ສ້າງຄວາມສາມັກຄີທັມຖ້າມກາງພີ່ນ້ອງຄຣິສຕຽນ:** ຄຣິສຕະຈັກຈະທຳຫນ້າທີ່ຊ່ອຍໃຫ້ພີ່ນ້ອງຄຣິສຕຽນໄດ້ຮ່ວມສາມັກຄີທັມເຊິ່ງກັນແລະກັນ. ຄຳວ່າ "**ສາມັກຄີທັມ**" ຫມາຍເຖິງພີ່ນ້ອງຄຣິສຕຽນທີ່ເປັນລູກຂອງພຣະເຈົ້າໄດ້ໃຊ້ຊີວິດຮ່ວມກັນ ຜູກພັນກັນ ເປັນນ້ຳນຶ່ງໃຈດຽວກັນ ຊຶ່ງເປັນຄວາມສັມພັນແບບຄອບຄົວ. ພີ່ນ້ອງຄຣິສຕຽນແຕ່ລະຄົນຈະມາພົບປະກັນ, ໂອ້ລົມກັນ. ຮັກເຊິ່ງກັນແລະກັນ, ຊ່ອຍເຫລືອເຊິ່ງກັນແລະກັນ, ເສີມສ້າງເຊິ່ງກັນແລະກັນ ແລະເມື່ອມີບັນຫາກໍຕັກເຕືອນແລະໃຫ້ອະພັຍແກ່ກັນແລະກັນ.

ເມື່ອທ່ານມີຊີວິດຜູກພັນກັບຄຣິສຕະຈັກ ຈະເຮັດໃຫ້ທ່ານມີຄວາມສຸກທີ່ໄດ້ຢູ່ໃນຄອບຄົວຂອງຄຣິສຕຽນ ເປັນຄອບຄົວໃຫຍ່ ເປັນຄອບຄົວແຫ່ງຄວາມຮັກ ແລະຊີວິດຂອງທ່ານຈະໄດ້ຮັບການເສີມສ້າງຢ່າງຫລວງຫລາຍໃນການຮ່ວມສາມັກຄີທັມກັບພີ່ນ້ອງຄຣິສຕຽນ.

**5. ຮັບໃຊ້ສັງຄົມ:** ຄຣິສຕະຈັກຈະທຳຫນ້າທີ່ຮັບໃຊ້ສັງຄົມ ເພື່ອຊ່ອຍໃຫ້ສັງຄົມດີຂຶ້ນໃນທຸກທາງເທົ່າທີ່ຈະກະທຳໄດ້ ເພາະເປັນຄຳສອນຂອງອົງພຣະເຢຊູຄຣິດທີ່ສອນວ່າໃຫ້ຄຣິສຕຽນ "**ຮັກເພື່ອນບ້ານເຫມືອນຮັກຕົນເອງ**" (ມັດທາຍ 19:19) ແລະ "ນຳພາໃນການພັດທະນາ" ຄົນອື່ນ (ໂຣມ 15:2) ການທີ່ທ່ານມີຊີວິດຜູກພັນກັບຄຣິສຕະຈັກທ່ານກໍຈະມີສ່ວນໃນການຮັບໃຊ້ສັງຄົມເຫມືອນກັນ.

## ຫນ້າທີ່ຂອງຄຣິສຕຽນຕໍ່ຄຣິສຕະຈັກ:

ໃນຖານະທີ່ທ່ານເປັນຄຣິສຕຽນຄົນນຶ່ງ ສິ່ງທີ່ຄວນປະຕິບັດຕໍ່ຄຣິສຕະຈັກມີດັ່ງນີ້

**1. ເຂົ້າເປັນສະມາຊິກຂອງຄຣິສຕະຈັກ:** ທ່ານຄວນສມັກເຂົ້າເປັນສະມາຊິກຂອງຄຣິສຕະຈັກ, ມີຊີວິດຜູກພັນກັບຄຣິສຕະຈັກ ແລະປະຕິບັດຕົນໃນຖານະທີ່ເປັນສະມາຊິກທີ່ດີຂອງຄຣິສຕະຈັກ.

**2. ຮ່ວມປະຊຸມນະມັສການທີ່ຄຣິສຕະຈັກຢ່າງສມ່ຳສເມີ:** ພຣະທັມເຮັບເຣີ 10:25 ກ່າວວ່າ *"ຢ່າປະການປະຊຸມກັນເຫມືອນຢ່າງລາງຄົນເຄີຍປະນັ້ນ ແຕ່ຈົ່ງຫນູນໃຈກັນແລະກັນຫລາຍກວ່າເກົ່າອີກ ເພາະທ່ານກໍຮູ້ກໍເຫັນວ່າວັນນັ້ນໃກ້ເຂົ້າມາແລ້ວ."* ໃຫ້ເຮົາເຫັນຄຸນຄ່າຂອງການນະມັສການພຣະເຈົ້າໃນວັນອາທິດຢ່າງແທ້ຈິງ ດັ່ງນັ້ນຢ່າພະຍາ

ຍາມຂາດການປະຊຸມນະມັສການພຣະເຈົ້າ.

**3. ຮ່ວມສາມັກຄີທັມກັບພີ່ນ້ອງຄຣິສຕຽນໃນຄຣິສຕະຈັກ:** ພະຍາຍາມຫາເວລາພົບປະແລະຮ່ວມສາມັກຄີທັມກັບພີ່ນ້ອງຄຣິສຕຽນ ບໍ່ວ່າຈະເປັນພີ່ນ້ອງໃນຄຣິສຕະຈັກ, ຕາມບ້ານເຮືອນ ຫລືໃນທີ່ອື່ນໆ

**4. ຍອມຮັບການລ້ຽງດູຝ່າຍຈິດວິນຍານຈາກຄຣິສຕະຈັກ:** ຄຣິສຕະຈັກຈະຈັດໃຫ້ມີການຮຽນການສອນພຣະຄັມພີເປັນລຳດັບຊັ້ນຕ່າງໆ ເພື່ອສອນຄຣິສຕຽນທຸກຄົນໃຫ້ເຕີບໃຫຍ່ຝ່າຍຈິດວິນຍານເປັນລຳດັບຂັ້ນຂຶ້ນໄປ ການຮຽນການສອນອາດຈະຈັດໃນຫລາຍຮູບແບບ ທ່ານຄວນຈະເຂົ້າຮ່ວມໃນການຮຽນການສອນຕາມຣະບົບຂອງຄຣິສຕະຈັກ ເພື່ອທ່ານຈະໄດ້ຮັບການລ້ຽງດູຝ່າຍຈິດວິນຍານໃຫ້ຈະເຣີນເຕີບໃຫຍ່ຂຶ້ນໄປເລື້ອຍໆ.

**5. ສນັບສນູນງານຂອງຄຣິສຕະຈັກດ້ວຍຊັບແລະກຳລັງຄວາມສາມາດ:** ການດຳເນີນງານຂອງຄຣິສຕະຈັກຈຳເປັນຕ້ອງມີການໃຊ້ຈ່າຍ ຄຣິສຕະຈັກບໍ່ໄດ້ມີລາຍໄດ້ຈາກທຣະກິດການຄ້າ ແຕ່ໄດ້ຮັບຈາກການຖວາຍຂອງພີ່ນ້ອງຄຣິສຕຽນທັງຫລາຍທີ່ເປັນສະມາຊິກຂອງຄຣິສຕະຈັກ ດັ່ງນັ້ນ ຈຶ່ງຂໍເຊີນຊວນໃຫ້ທ່ານມີສ່ວນຮັບໃຊ້ພຣະເຈົ້າດ້ວຍການຖວາຍຊັບ ເພື່ອໃຊ້ໃນການດຳເນີນງານຂອງຄຣິສຕະຈັກ.

ມີຂໍ້ພຣະຄັມພີທີ່ໜູນໃຈຄຣິສຕຽນໃຫ້ຖວາຍຊັບຢ່າງສມ່ຳສເມີ ເປັນຈຳນວນນຶ່ງສ່ວນສິບຂອງລາຍໄດ້ ຫລືຜົນທີ່ໄດ້ຈາກກຳໄລ (ມາລາກີ 3:10) ແຕ່ເຖິງຢ່າງໃດກໍຕາມການຖວາຍຊັບນີ້ເປັນເຣື່ອງສ່ວນຕົວຂອງທ່ານກັບພຣະເຈົ້າ ຈະບໍ່ມີຜູ້ໃດບັງຄັບທ່ານໃຫ້ຖວາຍຫລືກວດສອບການຖວາຍຂອງທ່ານ. ຖ້າຫາກທ່ານຖວາຍ ກໍຈົ່ງຖວາຍດ້ວຍຄວາມເຕັມໃຈ, ດ້ວຍໃຈໃສສັດທາ, ບໍ່ແມ່ນດ້ວຍຝືນໃຈ, ບໍ່ແມ່ນດ້ວຍການນຶກເສັຽດາຍ, ຄືຖວາຍໃນສິ່ງທີ່ທ່ານມີ ບໍ່ແມ່ນຖວາຍໃນສິ່ງທີ່ທ່ານບໍ່ມີ ( 2 ໂກຣິນໂທ 9:5-7)

ເມື່ອທ່ານມີໃຈຖວາຍ ແລະຖວາຍຢ່າງສັດຊື່ ພຣະເຈົ້າຊົງມີພຣະສັນຍາວ່າພຣະອົງຈະຊົງອວຍພຣະພອນໃນຊີວິດຂອງທ່ານ ດັ່ງຂໍ້ພຣະຄັມພີທີ່ກ່າວວ່າ *"ດັ່ງນີ້ແຫລະ, ຄົນທີ່ຫວ່ານພຽງເລັກນ້ອຍ ກໍກ່ຽວເກັບໄດ້ພຽງເລັກນ້ອຍ ແລະຄົນທີ່ຫວ່ານຫລາຍ ກໍກ່ຽວເກັບໄດ້ຫລາຍ "* ( 2 ໂກຣິນໂທ 9:6 ) *"ໂດຍຊົງໂຜດໃຫ້ເຈົ້າທັງຫລາຍຮັ່ງມີດ້ວຍສິ່ງຂອງຢ່າງບໍຣິບູນ ເພື່ອໃຫ້ພວກເຈົ້າມີຂອງແຈກຢາຍຢ່າງໃຈກວ້າງຂວາງ ຊຶ່ງເຮົາໄດ້ນຳໄປແຈກຢາຍ ຈຶ່ງເປັນເຫດໃຫ້ເກີດການຂອບພຣະຄຸນພຣະເຈົ້າ. "* ( 2 ໂກຣິນໂທ 9:11) *"ຈົ່ງນຳເງິນເຕັມຈຳນວນນຶ່ງສ່ວນສິບມາທີ່ວິຫານ ເພື່ອວ່າຈະມີອາຫານໃນພຣະວິຫານ ຈົ່ງລອງເບິ່ງດູແລະພວກເຈົ້າຈະເຫັນວ່າເຮົາຈະໄຂຟ້າສວັນ ແລ້ວເທພຣະພອນມາຍັງພວກເຈົ້າຢ່າງຫລວງຫລາຍ. "* (ມາລາກີ 3:10)

ເງິນທີ່ທ່ານໄດ້ມອບຖວາຍແກ່ພຣະເຈົ້າ ຈະມີຄະນະກັມມະການບໍຣິຫານຂອງຄຣິສຕະຈັກເກັບຮັກສາເປັນຢ່າງດີ ຈະມີການທຳບັນຊີເຮັດລາຍງານທັງລາຍຮັບແລະລາຍຈ່າຍຢ່າງຖືກຕ້ອງ ຖ້າທ່ານມີຄວາມຂ້ອງໃຈທ່ານກໍສາມາດສອບຖາມຫລືກວດສອບນຳຄະນະກັມມະການບໍຣິຫານຄຣິສຕະຈັກໄດ້ທຸກເວລາ. ການໃຊ້ຈ່າຍຕ່າງໆ ກໍຈະມີບັນຊີບັນທຶກໄວ້ຢ່າງຖືກຕ້ອງສອດຄ່ອງກັບຈຸດປະສົງຂອງຄຣິສຕະຈັກ ຈະເຫັນວ່າເປັນການໃຊ້ຈ່າຍຢ່າງມີຄຸນຄ່າ ແລະມີຄວາມລະມັດລະວັງບໍ່ຟູມເຟືອຍ.

ແທ້ຈິງແລ້ວທ່ານບໍ່ຄວນຈະຖວາຍແຕ່ຊັບ(ເງິນ)ເທົ່ານັ້ນ ແຕ່ທ່ານຄວນຖວາຍແຮງກາຍ, ແຮງໃຈ, ແຮງສະຕິປັນຍາ ແກ່ພຣະເຈົ້າ ເພື່ອສນັບສນູນວຽກງານຂອງຄຣິສຕະຈັກຢ່າງສຸດກຳລັງອີກນຳ.

**6. ໃຫ້ກຽດແລະເຊື່ອຟັງຜູ້ນຳຄຣິສຕະຈັກ:** ຜູ້ນຳຂອງຄຣິສຕະຈັກ ບໍ່ວ່າຈະເປັນສິດຍາພິບານ, ອາຈານ. ຫລືຜູ້ນຳອື່ນໆ ມີໜ້າທີ່ລ້ຽງດູຈິດວິນຍານຂອງສະມາຊິກຄຣິສຕະຈັກທຸກຄົນ ດັ່ງນັ້ນທ່ານຈຶ່ງຄວນຮັກແພງ, ໃຫ້ກຽດແລະເຊື່ອຟັງສິດຍາພິບານແລະຜູ້ນຳຂອງຄຣິສຕະຈັກ.

**ການຕັດສິນໃຈ:** - ທ່ານມີຈິດໃຈທີ່ຈະຜູກພັນກັບຄຣິສຕະຈັກ(ໂບດ)ແຫ່ງນີ້ຫລືບໍ່? .........................................

( )ມີຈິດໃຈ ( )ບໍ່ທັນມີຈິດໃຈເທື່ອ

- ທ່ານຈະຮ່ວມນະມັສການພຣະເຈົ້າທີ່ຄຣິສຕະຈັກຢ່າງສມ່ຳສເມີຫລືບໍ່? ................................

( )ຈະຮ່ວມ ( )ຈະບໍ່ຮ່ວມ

- ທ່ານຕັ້ງໃຈວ່າຈະມີສ່ວນຮັບໃຊ້ໃນວຽກງານຂອງຄຣິສຕະຈັກຫລືບໍ່? ................................

( )ຕັ້ງໃຈແລ້ວ ( )ບໍ່ທັນຕັ້ງໃຈເທື່ອ

- ທ່ານພ້ອມຈະຮັບບັບຕິສະມາ(ຖ້າຍັງບໍ່ທັນໄດ້ຮັບ) ເພື່ອສະແດງຄວາມຕັ້ງໃຈວ່າຈະຕິດຕາມ ອົງພຣະເຢຊູຢ່າງແທ້ຈິງຫລືບໍ່?................................

( )ພ້ອມແລ້ວ ( )ຍັງບໍ່ພ້ອມເທື່ອ ( )ໄດ້ຮັບບັບຕິສະມາແລ້ວ

**ທ່ອງຈຳຂໍ້ພຣະຄັມພີ:** ໂຢຮັນ 4:24 *"ພຣະເຈົ້າຊົງເປັນພຣະວິນຍານ ແລະຜູ້ທີ່ນະມັສການພຣະອົງຕ້ອງນະມັສການ ດ້ວຍຈິດວິນຍານແລະຄວາມຈິງ."*

# ບົດທີ 4
## ຫລັກຄວາມເຊື່ອພື້ນຖານຂອງຄຣິສຕຽນ

ຈົ່ງເປີດພຣະຄັມພີອ່ານ ພຣະທັມ 2 ຕີໂມທຽວ 3:15-17 *ອ່ານແລະພິຈາຣະນາເບິ່ງວ່າເປັນຫຍັງພຣະຄັມພີຈຶ່ງເປັນ ປື້ມທີ່ສັກສິດ? ພຣະຄັມພີມີຄຸນຄ່າຫຍັງແດ່? ມີປໂຍດແກ່ຄຣິສຕຽນຢ່າງໃດ?*

ຄຣິສຕຽນຈະມີທັສນະຄະຕິແລະແນວຄວາມຄິດຫລາຍຢ່າງທີ່ແຕກຕ່າງກັບຄົນທີ່ບໍ່ຮູ້ຈັກພຣະເຈົ້າ. ເນື່ອງຈາກວ່າແນວຄວາມຄິດຂອງເຮົາມາຈາກສິ່ງທີ່ເຮົາເຊື່ອ ແລະຫລັກຄວາມເຊື່ອທີ່ເຮົາຍຶດຖືກໍມາຈາກຫລັກຄຳສອນຂອງພຣະຄັມພີ. ເຮົາເຊື່ອວ່າພຣະຄັມພີເປັນພຣະວັຈນະຫລືຖ້ອຍຄຳຂອງພຣະເຈົ້າ ເພາະໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າໃຫ້ຂຽນຂຶ້ນ ເພື່ອເປັນຫລັກອັນສູງສຸດໃນຄວາມເຊື່ອແລະໃນການປະພຶດ ດັ່ງພຣະທັມ 2 ຕີໂມທຽວ 3:16-17 ໄດ້ກ່າວໄວ້ວ່າ *"ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າແລະເປັນປໂຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ, ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດ ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ."*

ພຣະຄັມພີສອນເຮົາໃຫ້ ".....ເປັນຄົນຍຶດໝັ້ນໃນຫລັກອັນທ່ຽງທັມທີ່ຖືກຕ້ອງຕາມໂອວາດຄຳສອນ ເພື່ອຈະສາມາດເຕືອນສະຕິດ້ວຍຄຳສອນອັນມີຫລັກ ແລະຊີ້ແຈງແກ່ຄົນທີ່ຄັດຄ້ານຄຳສອນນັ້ນ." ( ຕີໂຕ 1:9) ແລະຍັງໄດ້ເນັ້ນອີກວ່າ "......ຈົ່ງສ້າງຕົນເອງຂຶ້ນເທິງຄວາມເຊື່ອອັນສັກສິດທີ່ສຸດຂອງພວກທ່ານ."( ຢູດາ 1:20) ຂໍ້ພຣະຄັມພີເຫລົ່ານີ້ຊີ້ບອກວ່າຄຣິສຕຽນຕ້ອງຮູ້ແລະຍຶດໝັ້ນໃນຫລັກຄວາມເຊື່ອຫລືຫລັກຄຳສອນຂອງພຣະຄັມພີ. ຫລັກຄວາມເຊື່ອພື້ນຖານຂອງຄຣິສຕຽນຕາມຄຳສອນຂອງພຣະຄັມພີສາມາດນຳມາສຶກສາໂດຍຫຍໍ້ ໄດ້ດັ່ງນີ້

1. **ເຮົາເຊື່ອວ່າ** ພຣະເຈົ້າມີຈິງແລະເປັນພຣະເຈົ້າທ່ຽງແທ້ແຕ່ອົງດຽວໃນໂລກຈັກວານ ພຣະອົງຊົງເປັນພຣະວິນຍານ ຊົງເປັນຢູ່ຕລອດໄປເປັນນິດ(ນິຣັນ)ບໍ່ມີເກີດແລະບໍ່ມີຕາຍ. ຊົງເປັນພຣະເຈົ້າອົງຍິ່ງໃຫຍ່ໂດຍບໍ່ຈຳກັດຄື ພຣະອົງຊົງເຮັດໄດ້ທຸກສິ່ງ, ຊົງຮອບຮູ້ທຸກສິ່ງ, ແລະຊົງສະຖິດຢູ່ທຸກແຫ່ງຫົນ, ຊົງເຕັມໄປດ້ວຍຄວາມຮັກຄວາມບໍຣິສຸດພ້ອມທັງຄວາມດີງາມອັນຄົບຖ້ວນສົມບູນ. ຊົງເປັນພຣະເຈົ້າອົງດຽວ ແຕ່ໄດ້ຊົງສຳແດງພຣະອົງເປັນ 3 ພຣະພາກ ຊຶ່ງໄດ້ແກ່ 1)ພຣະບິດາ, 2)ພຣະບຸດ(ຫລືພຣະເຢຊູ), ແລະ3)ພຣະວິນຍານບໍຣິສຸດ (ເອຊາຢາ 45:5; ລູກາ 1:37; 1 ໂຢຮັນ 4:8-10, ອົບພະຍົບ 20:3-4 )

2. **ເຮົາເຊື່ອວ່າ** ຈັກວານ, ໂລກ, ຊີວິດແລະສັພສິ່ງທັງປວງບໍ່ໄດ້ເກີດຂຶ້ນມາເອງໂດຍບັງເອີນ ແຕ່ພຣະເຈົ້າຊົງເປັນຜູ້ສ້າງຂຶ້ນມາ. ພຣະອົງຊົງສ້າງມະນຸດດ້ວຍຄວາມຮັກແລະສ້າງໃຫ້ມີຮູບຮ່າງຄ້າຍຄືພຣະອົງ(ຄືມີລັກສະນະບາງຢ່າງເຫມືອນພຣະອົງ) ແລະຊົງມີພຣະປະສົງໃຫ້ມະນຸດມີຄວາມສັມພັນທີ່ຕິດສນິດກັບພຣະອົງ ເພື່ອເຂົາຈະມີຊີວິດທີ່ຄົບບໍຣິບູນຊຶ່ງໄດ້ແກ່ ມີປັນຍາສູງ, ມີຄວາມສຳນຶກໃນດ້ານສິນທັມ, ແລະມີຊີວິດນິຣັນ (ຊີວິດອະມະຕະ ຕລອດໄປເປັນນິດ) (ປະຖົມມະການ 1-2; ກິຈການ 17:24-26 )

3. **ເຮົາເຊື່ອວ່າ** ມະນຸດຄູ່ທຳອິດໄດ້ກະທຳບາບ ບໍ່ເຊື່ອຟັງພຣະເຈົ້າ ຈຶ່ງສົ່ງຜົນໃຫ້ມະນຸດທັງຫມົດທີ່ເປັນເຊື້ອສາຍຂອງມະນຸດຄູ່ນັ້ນໄດ້ຮັບຖານະເປັນຄົນບາບ ພຣະລັກສະນະຂອງພຣະເຈົ້າທີ່ຢູ່ໃນມະນຸດຈຶ່ງເສື່ອມສລາຍ ແລະມະນຸດຈຶ່ງໄດ້ຮັບຜົນກັມຄື ມີຊີວິດທີ່ທຸກລຳບາກ, ມີນິສັຍທີ່ຕິດຢູ່ໃນທັມມະຊາດຂອງຄວາມບາບ, ບໍ່ມີພຣະເຈົ້າເປັນທີ່ເພິ່ງ, ທັງຊີວິດຝ່າຍຮ່າງກາຍແລະຊີວິດຝ່າຍວິນຍານຕ້ອງຕາຍ ຄືຮ່າງກາຍຕ້ອງກັບໄປເປັນດິນ ຕໍ່ຈາກນັ້ນຊີວິດຝ່າຍວິນຍານຕ້ອງຖືກພິພາກສາຕົກລົງໄປບຶງໄຟນະຮົກທີ່ເຜົາໄຫມ້ຢູ່ຕລອດໄປເປັນນິດ ( ປະຖົມມະການ 3; ໂຣມ 3:23; ພຣະນິມິດ 21 )

4. **ເຮົາເຊື່ອວ່າ** ພຣະເຈົ້າຊົງຮັກມະນຸດຫລາຍ, ຈົນໄດ້ຊົງປະທານພຣະເຢຊູຄຣິດຊຶ່ງເປັນພຣະເຈົ້າຢູ່ໃນຖານະພຣະບຸດ ໃຫ້ສະເດັດລົງມາບັງເກີດເປັນມະນຸດນຳຍິງພົມມະຈາຣີ(ສາວປອດ)ຊາວຢິວ ເມື່ອພຣະອົງຈະເຣີນເຕີບໃຫຍ່

ຂຶ້ນກໍຊົງປະຕິບັດພຣະຣາຊະກິດ ຊົງເທສນາສັ່ງສອນປະກາດເຣື່ອງພຣະຣາຊແຜ່ນດິນຂອງພຣະເຈົ້າ ຊົງຢືນຢັນຄວາມເປັນພຣະເຈົ້າຂອງພຣະອົງດ້ວຍການສຳແດງການອັສຈັນຫລາຍປະການ ຊົງດຳເນີນຊີວິດຢ່າງບໍຣິສຸດປາສຈາກບາບ ແລະຊົງເຕັມປ່ຽມດ້ວຍຄວາມຮັກທີ່ມີຕໍ່ມະນຸດ, ທ້າຍສຸດ ພຣະອົງໄດ້ຊົງໄຖ່ມະນຸສໂລກໃຫ້ພົ້ນຈາກບາບ ໂດຍການຍອມໃຫ້ຖືກຈັບເອົາໄປຄຶງໄວ້ເທິງໄມ້ກາງແຂນຈົນສິ້ນພຣະຊົນ ໃນວັນຖ້ວນສາມພຣະອົງໄດ້ຊົງເປັນຄືນມາຈາກຕາຍ ຊຶ່ງເປັນການພິສູດວ່າພຣະອົງມີຊັຍຊະນະເໜືອຄວາມບາບແລະຄວາມຕາຍ ຕໍ່ຈາກນັ້ນພຣະອົງກໍໄດ້ສະເດັດກັບຄືນສູ່ສວັນຕໍ່ໜ້າບັນດາອັຄສາວົກ (ໂຢຮັນ 3:16; ໂຣມ 5:10-11; ຟີລິບປອຍ 2:5-8 )

**5. ເຮົາເຊື່ອວ່າ** ມີທາງດຽວທີ່ມະນຸດຈະຫລຸດພົ້ນຈາກບາບໄດ້ຄືການຖິ້ມໃຈເກົ່າເອົາໃຈໃໝ່ ໂດຍການສຳນຶກວ່າຕົນເອງເປັນຄົນບາບ ເຊື່ອວ່າພຣະເຢຊູຊົງເປັນພຣະຜູ້ໄຖ່ໃຫ້ຫລຸດພົ້ນຈາກບາບ ແລະຍອມໃຫ້ພຣະອົງສະເດັດເຂົ້າມາເປັນອົງພຣະຜູ້ເປັນເຈົ້າໃນຊີວິດ ຖ້າຫາກໃຜມີຄວາມເຊື່ອແບບນີ້ລາວກໍຈະກ້າວເຂົ້າໄປສູ່ຄວາມຫລຸດພົ້ນ ຈະມີການປ່ຽນແປງເກີດຂຶ້ນໃນຊີວິດຂອງລາວດັ່ງນີ້ ຈະມີສັນຕິສຸກອັນແທ້ຈິງ, ອຸປນິສັຍຈະປ່ຽນໄປໃນທາງທີ່ດີ, ມີພຣະເຈົ້າເປັນທີ່ເພິ່ງພາ, ແລະເມື່ອອຳລາຈາກໂລກນີ້ໄປແລ້ວຈິດວິນຍານ(ອັນເປັນຊີວິດແທ້)ຂອງລາວຈະໄດ້ໄປຢູ່ກັບອົງພຣະຜູ້ເປັນເຈົ້າຕລອດໄປເປັນນິດ. ຕາມຄວາມສາມາດແລະການກະທຳຂອງຕົນເອງ ມະນຸດບໍ່ສາມາດຊ່ອຍຕົນເອງໃຫ້ຫລຸດພົ້ນຈາກບາບໄດ້ ຈຶ່ງຈຳເປັນຕ້ອງເພິ່ງໃນພຣະເຈົ້າແລະວາງໃຈເຊື່ອໃນອົງພຣະເຢຊູຄຣິດເທົ່ານັ້ນ (ໂຢຮັນ 14:6; ກິຈການ 4:12; ເອເຟໂຊ 2:8-9 )

**6. ເຮົາເຊື່ອວ່າ** ໃນທັນທີທີ່ເຮົາວາງໃຈເຊື່ອໃນອົງພຣະເຢຊູ ພຣະເຈົ້າໄດ້ຊົງປະທານພຣະວິນຍານບໍຣິສຸດຊຶ່ງແມ່ນພຣະເຈົ້າອີກພຣະພາກນຶ່ງ(ໃນຕຣີເອການຸພາບ) ໃຫ້ເຂົ້າມາສະຖິດຢູ່ໃນຊີວິດເຮົາ ພຣະອົງຈະເປັນຜູ້ຊ່ອຍໃນການປ່ຽນແປງຈິດໃຈ, ເປັນພະຍານໃນຈິດໃຈ, ເປັນຜູ້ສອນໃນຈິດໃຈ, ເປັນຜູ້ເລົ້າໂລມໃຈ, ເປັນຜູ້ຊົງນຳພາໃນການດຳເນີນຊີວິດ, ເປັນຜູ້ຊຸກຍູ້ໃຫ້ເຮົາມີໃຈຮັບໃຊ້ແລະຊົງປະທານຣິດເດດໃຫ້ໃນການຮັບໃຊ້ ແຕ່ວ່າເຮົາຈຳເປັນຕ້ອງເຕັມລົ້ນດ້ວຍພຣະວິນຍານບໍຣິສຸດຢູ່ສເມີ ຄືຍອມໃຫ້ພຣະວິນຍານຊົງທຳງານໃນຊີວິດຂອງເຮົາຢ່າງເຕັມທີ່ ( ໂຢຮັນ 14:16-17,26 ; ກິຈການ 2:38; 1 ໂກຣິນໂທ 12:4-11; 2 ໂກຣິນໂທ 3:17-18; ເອເຟໂຊ 5:8 )

**7. ເຮົາເຊື່ອວ່າ** ຄຣິສຕຽນຫລືຜູ້ທີ່ເຊື່ອໃນອົງພຣະເຢຊູຄຣິດຕ້ອງດຳເນີນຊີວິດໃກ້ຊິດຕິດສນິດກັບພຣະເຢຊູຄຣິດຢ່າງຕໍ່ເນື່ອງ(ຕລອດເວລາ) ຊຶ່ງສາມາດທີ່ຈະເຮັດໄດ້ໂດຍການເທີດທູນພຣະອົງເປັນເຈົ້າຊີວິດໃນຊີວິດແຕ່ຜູ້ດຽວບໍ່ຂາບໄຫວ້ບູຊາພຣະອື່ນໆ, ບໍ່ນະມັສການຮູບໂຄຣົບ, ຮັກພຣະເຈົ້າດ້ວຍສຸດໃຈ, ດ້ວຍສຸດຈິດ, ດ້ວຍສຸດກຳລັງຄວາມຄິດຕັ້ງໃຈຍອມເຊື່ອຟັງພຣະອົງ, ຮັກສາຄວາມເຊື່ອໄວ້ໃຫ້ໝັ້ນຄົງ, ໝັ່ນອ່ານແລະສຶກສາພຣະຄັມພີ, ອະທິຖານ, ນະມັສການ, ແລະອຸທິດຕົນ(ຍອມເສັຽສລະເວລາ, ເຫື່ອແຮງ, ຊັບສິນ) ໃນການບົວລະບັດຮັບໃຊ້ພຣະເຈົ້າ. (ອົບພະຍົບ 20:3-5; ລູກາ 10:27; ໂຢຮັນ 15:1-7 )

**8. ເຮົາເຊື່ອວ່າ** ພຣະຄັມພີແມ່ນພຣະວັຈນະ(ພຣະຄຳ)ຫລືຖ້ອຍຄຳຂອງພຣະເຈົ້າ ທີ່ພຣະອົງຊົງບັນດົນໃຈໃຫ້ຜູ້ປະກາດພຣະທັມຂອງພຣະອົງຂຽນຂຶ້ນ ໂດຍບໍ່ຜິດພາດ ເປັນຫລັກສູງສຸດແຫ່ງຄວາມເຊື່ອແລະການປະພຶດຂອງຄຣິສຕຽນທັງປວງ. ມີຣິດເດດໃນການປ່ຽນແປງຊີວິດຈິດໃຈ ວິນິສັຍຈິດໃຈ ດັ່ງນັ້ນເຮົາຕ້ອງໝັ່ນອ່ານ ໝັ່ນສຶກສາແລະຍອມເຊື່ອຟັງພຣະຄັມພີ ( 2 ຕີໂມທຽວ 3:15-17; ເຮັບເຣີ 4:12 )

**9. ເຮົາເຊື່ອວ່າ** ຄຣິສຕະຈັກ(ໝາຍເຖິງຄຣິສຕຽນທຸກຄົນ)ແມ່ນພຣະກາຍຂອງພຣະເຢຊູຄຣິດ ແລະຄຣິສຕຽນທຸກຄົນເປັນອະວັຍຍະວະຂອງພຣະກາຍນັ້ນ ດັ່ງນັ້ນຄຣິສຕະຈັກຈຶ່ງເປັນຄອບຄົວຂອງພຣະເຈົ້າແລະຄຣິສຕຽນທຸກຄົນເປັນອ້າຍເອື້ອຍນ້ອງກັນ ເຮົາຈຶ່ງຮັກເຊິ່ງກັນແລະກັນ. ຄຣິສຕະຈັກມີໜ້າທີ່ໃນການນະມັສການພຣະເຈົ້າ, ປະກາດຂ່າວປະເສີດຂອງພຣະເຢຊູຄຣິດ, ສອນຜູ້ທີ່ເຊື່ອໃຫ້ເຕີບໃຫຍ່ຝ່າຍຈິດວິນຍານ, ສ້າງຄວາມສາມັກຄີທັມໃນກຸ່ມພີ່ນ້ອງຄຣິສຕຽນ ແລະຮັບໃຊ້ສັງຄົມ. ເຮົາຕ້ອງຜູກພັນຊີວິດກັບຄຣິສຕະຈັກ ແລະສນັບສນູນວຽກງານຂອງຄຣິສຕະຈັກຢ່າງສຸດກຳລັງ (ເອເຟໂຊ 1:22-23; ໂຣມ 12:4-7; ກິຈການ 2:42-46 )

**10. ເຮົາເຊື່ອວ່າ** ມານຫລືມີອີກຊື່ນຶ່ງວ່າຊາຕານ, ເຫລົ່າວິນຍານຊົ່ວທີ່ເປັນບໍຣິວານຂອງມານ, ເນື້ອໜັງທີ່ເອີ້ນອີກຢ່າງນຶ່ງວ່າເພດຄົນເກົ່າຫລືມະນຸດເກົ່າ ຊຶ່ງໝາຍເຖິງທັມະຊາດບາບທີ່ຢູ່ໃນຕົວມະນຸດທຸກຄົນ, ແລະຄວາມ

ຊົ່ວຮ້າຍຂອງໂລກນີ້ ເປັນສັດຕຣູທີ່ຄອຍຖ້າຊັກຈູງເຮົາໃຫ້ຫລົງທາງໄປຈາກພຣະເຈົ້າ ບໍ່ໃຫ້ເຮົາເຊື່ອຟັງພຣະອົງ ດັ່ງນັ້ນເຮົາຈຶ່ງຕ້ອງຣະວັງ ແລະຕໍ່ສູ້ກັບສິ່ງເຫລົ່ານີ້ດ້ວຍການເຊື່ອຟັງພຣະເຈົ້າແລະເພິ່ງພາໃນພຣະອົງ. ( 1 ເປໂຕ 5:8-9; ເອເຟໂຊ 6:11-18; 4:17-32; ຄາລາເຕັຽ 5:19-23; ໂຢຮັນ 15:18; 1 ໂຢຮັນ 2:15 )

**11. ເຮົາເຊື່ອວ່າ** ວັນນຶ່ງ(ໃນຄາວສຸດທ້າຍ) ພຣະເຢຊູຄຣິດຈະສະເດັດກັບມາອີກເພື່ອພິພາກສາໂລກ ແລະຈະຮັບເອົາບັນດາຜູ້ທີ່ເຊື່ອໃນພຣະອົງເຂົ້າໄປສູ່ແຜ່ນດິນສວັນ ຢູ່ກັບພຣະອົງໃນທີ່ນັ້ນຕລອດໄປເປັນນິດ ເຮົາຈະໄດ້ຮັບບໍາເຫນັດເພີ້ມເຕີມຫລາຍຫລືໜ້ອຍແມ່ນຂຶ້ນຢູ່ກັບການເຊື່ອຟັງຂອງແຕ່ລະຄົນ. ສ່ວນມານແລະວິຍານຊົ່ວຮ້າຍທັງປວງພ້ອມທັງບັນດາຄົນບາບທີ່ບໍ່ຖິ້ມໃຈເກົ່າເອົາໃຈໃຫມ່ເຊື່ອໃນອົງພຣະເຢຊູຈະຕ້ອງຖືກພິພາກສາຮັບໂທດໃນບຶງໄຟນະຣົກຕລອດໄປເປັນນິດ. ( ໂຢຮັນ 14-2-3; ມັດທາຍ 10:41-42; 2 ໂຢຮັນ 1:8; ພຣະນິມິດ 20:10-15 )

**12. ເຮົາເຊື່ອວ່າ** ພຣະເຈົ້າຊົງມອບຫມາຍຫນ້າທີ່ໃຫ້ຄຣິສຕຽນດູແລໂລກນີ້ໃຫ້ຈະເຣີນ ແລະຊ່ວຍມະນຸດໃນໂລກໃຫ້ໄດ້ຮັບຄວາມຫລຸດພົ້ນຈາກບາບ ດັ່ງນັ້ນເຮົາຕ້ອງທຸ້ມເທຊີວິດໃນການພັດທະນາເສີມສ້າງໂລກນີ້ໃຫ້ດີທີ່ສຸດ ແລະເປັນພະຍານນໍາຄົນໃນໂລກນີ້ໃຫ້ມາເຊື່ອວາງໃຈໃນພຣະເຢຊູຄຣິດເຈົ້າໃຫ້ຫລາຍທີ່ສຸດແລະໄວທີ່ສຸດເທົ່າທີ່ຈະເປັນໄປໄດ້. ( ມັດທາຍ 5:13-16; 28:19-20; ໂຣມ 15:2; ປະຖົມມະການ 1:28 )

**<u>ການຕັດສິນໃຈ</u>:** - ທ່ານພ້ອມທີ່ຈະເຊື່ອແລະຍຶດຫມັ້ນໃນຫລັກຄວາມເຊື່ອຂອງຄຣິສຕຽນດັ່ງກ່າວນີ້ຫລືບໍ່?............

( )ພ້ອມແລ້ວ ( )ຍັງບໍ່ທັນພ້ອມ

- ທ່ານຕັດສິນໃຈຈະເທີດທູນພຣະເຢຊູເປັນເຈົ້າຊີວິດແຕ່ຜູ້ດຽວ ບໍ່ໂຄຣົບຂາບໄຫວ້ພຣະອື່ນໆ ບໍ່ນະມັສການຮູບໂຄຣົບ ແລະຮັກພຣະເຈົ້າດ້ວຍສຸດໃຈ, ສຸດຈິດ, ສຸດກໍາລັງຄວາມຄິດຫລືບໍ່?............

( )ຕັດສິນໃຈແລ້ວ ( )ຍັງບໍ່ຕັດສິນໃຈເທື່ອ

**<u>ທ່ອງຈໍາຂໍ້ພຣະຄັມພີ</u>:** 2 ຕີໂມທຽວ 3:16-17 *"ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ, ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສໍາເຣັດ ແລະຈັດຕຽມໄວ້ພ້ອມສໍາລັບການດີທຸກຢ່າງ."*

# ບົດທີ 5
# ອຸປນິສັຍຂອງຄຣິສຕຽນ

ຈົ່ງເປີດພຣະຄັມພີອ່ານ ພຣະທັມ ໂກໂລຊາຍ 3:1-10 *ອ່ານແລະພິຈາຣະນາເບິ່ງວ່າເມື່ອເຮົາມີຊີວິດໃຫມ່ກັບອົງພຣະເຢຊູຄຣິດແລ້ວ ເຮົາຄວນປະຖິ້ມລັກສະນະທ່າທີເກົ່າຫລືນິສັຍເກົ່າຂອງເຮົາຢ່າງໃດແດ່? ແລະຄວນຫົ່ມເອົາອຸປນິສັຍຂອງຊີວິດໃຫມ່ຢ່າງໃດ?*

ເມື່ອທ່ານຖິ້ມໃຈເກົ່າເອົາໃຈໃຫມ່ເຊື່ອໃນອົງພຣະເຢຊູຄຣິດແລ້ວ ພຣະເຈົ້າຊົງມີນ້ຳພຣະທັຍທີ່ຈະສ້າງຊີວິດຂອງທ່ານໃຫມ່ ເປັນຊີວິດທີ່ມີນິສັຍທີ່ປ່ຽນແປງໃຫມ່ດັ່ງພຣະທັມ 2 ໂກຣິນໂທ 5:17 ກ່າວໄວ້ວ່າ "*ເຫດສັນນັ້ນຜູ້ທີ່ຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກສ້າງຂຶ້ນໃຫມ່ແລ້ວ ຖານະເກົ່າເຫຼົ່ານັ້ນກໍລ່ວງໄປ ເບິ່ງແມ, ກາຍເປັນສິ່ງໃຫມ່ທັງນັ້ນ.*" ແລະພຣະອົງຍັງສອນໃຫ້ເຮົາຖິ້ມ<u>ຄົນເກົ່າ</u>ຫລືນິສັຍເກົ່າຂອງເຮົານຳ ແລ້ວຫົ່ມເອົາຖານະຫລືນິສັຍຂອງຊີວິດໃຫມ່ແທນ. ( ໂກໂລຊາຍ 3:5-10 )

ພຣະຄັມພີເອີ້ນນິສັຍເກົ່າທີ່ບໍ່ດີ ຄືນິສັຍທີ່ເປັນທັມມະຊາດຂອງບາບວ່າ "**ເນື້ອຫນັງ**" ຊຶ່ງມີລັກສະນະດັ່ງຕໍ່ໄປນີ້... "*ແຕ່ການງານຂອງມະນຸດທັມມະດານັ້ນກໍປາກົດແຈ້ງແລ້ວຄື ການຫລິ້ນຊູ້, ການບໍ່ສະອາດ, ການໂລພະຕັນຫາ, ການໄຫວ້ພຣະທຽມ, ການຄຽດແຄ້ນກັນ, ການໃຝ່ສູງຕໍ່ກັນ, ການແຕກແຍກກັນ, ການຖືພັກຖືພວກ, ການອິດສາກັນ, ການເສບສຸຣາຢາເມົາ, ການກິລ້ຽງຢ່າງຊົ່ວຊ້າ, ແລະການອື່ນໆໃນທຳນອງນີ້ອີກ. ເຮົາຂໍເຕືອນເຈົ້າທັງຫລາຍເຫມືອນກັບທີ່ເຮົາໄດ້ເຕືອນພວກເຈົ້າລ່ວງຫນ້າແລ້ວວ່າ ຄົນທີ່ເຮັດການຢ່າງນັ້ນຈະບໍ່ມີສ່ວນໃນຣາຊອານາຈັກຂອງພຣະເຈົ້າ.*" ( ຄາລາເຕັຽ 5:19-21 )

ເມື່ອທ່ານເຊື່ອໃນອົງພຣະເຢຊູຄຣິດແລ້ວ ພຣະວິນຍານບໍຣິສຸດຂອງພຣະເຈົ້າຈະເຂົ້າມາສະຖິດຢູ່ໃນຊີວິດຂອງທ່ານ ແລະຈະຊົງທຳງານໃນຈິດໃຈຂອງທ່ານ ໃຫ້ຈິດໃຈຂອງທ່ານປ່ຽນໃຫມ່ເປັນຈິດໃຈແບບພຣະເຈົ້າ ຊຶ່ງສິ່ງນີ້ຈະເກີດຂຶ້ນໄດ້ກໍຕໍ່ເມື່ອທ່ານຍອມໃຫ້ພຣະອົງປ່ຽນແປງທ່ານ ຄືທ່ານຕ້ອງຍອມໃຫ້<u>ຄົນເກົ່າ</u>ຂອງທ່ານຖືກຄຶງຕາຍກັບອົງພຣະເຢຊູຄຣິດທີ່ໄມ້ກາງແຂນ ທີ່ຊົງຕາຍເພື່ອໄຖ່ຄວາມຜິດບາບຂອງເຮົາ ແລ້ວຈາກນັ້ນທ່ານກໍມີຊີວິດໃຫມ່ຂອງພຣະເຢຊູທີ່ປາກົດຂຶ້ນມາແທນໃນຊີວິດຂອງທ່ານ ດັ່ງພຣະທັມຄາລາເຕັຽ 2:19-20 ໄດ້ກ່າວໄວ້ວ່າ "*....ເຮົາໄດ້ຖືກຄຶງໄວ້ກັບພຣະຄຣິດແລ້ວ. ເຮົາຈຶ່ງບໍ່ມີຊີວິດຢູ່ ແຕ່ແມ່ນພຣະຄຣິດເປັນຜູ້ຊົງມີຊີວິດໃນເຮົາ ຊີວິດທີ່ເຮົາມີຢູ່ໃນຮ່າງກາຍເວລານີ້ນັ້ນ ເຮົາກໍມີຢູ່ໂດຍຄວາມເຊື່ອໃນພຣະບຸດຂອງພຣະອົງເຈົ້າ ຜູ້ຊົງຮັກເຮົາແລະຊົງສລະພຣະອົງເອງແທນເຮົາ.*" ແລະໃນພຣະທັມໂກໂລຊາຍ 3:3 ກໍໄດ້ກ່າວວ່າ "*ເພາະວ່າເຈົ້າທັງຫລາຍໄດ້ຕາຍແລ້ວ ແລະຊີວິດຂອງພວກເຈົ້າກໍຊົງບັງໄວ້ດ້ວຍກັນກັບພຣະຄຣິດໃນພຣະເຈົ້າ.*" ແລະໃນພຣະທັມ ຄາລາເຕັຽ 5:24 ກໍໄດ້ກ່າວໄວ້ເຫມືອນກັນວ່າ "*ຜູ້ທີ່ຢູ່ຝ່າຍພຣະຄຣິດກໍໄດ້ເອົາຄວາມປາຖນາກັບຕັນຫາຂອງມະນຸດທັມມະດານັ້ນ ຄຶງໄວ້ທີ່ໄມ້ກາງແຂນແລ້ວ.*"

ເມື່ອພຣະວິນຍານບໍຣິສຸດທີ່ຢູ່ໃນຊີວິດຂອງທ່ານຊົງທຳງານຢ່າງເຕັມທີ່ແລ້ວ ຊີວິດຂອງທ່ານກໍຈະມີສິ່ງນຶ່ງເກີດຂຶ້ນຊຶ່ງເອີ້ນວ່າ "ຜົນຂອງພຣະວິນຍານ" ຊຶ່ງມີລັກສະນະຕາມທີ່ພຣະທັມຄາລາເຕັຽ 5:22-23 ໄດ້ກ່າວໄວ້ວ່າ "*ຝ່າຍ ຜົນຂອງພຣະວິນຍານນັ້ນຄື ຄວາມຮັກ, ຄວາມຍິນດີ, ສັນຕິສຸກ, ຄວາມອົດກັ້ນໄວ້ນານ. ຄວາມປານີ, ຄວາມດີ, ຄວາມສັດຊື່, ຄວາມສຸພາບອ່ອນຫວານ, ການຮູ້ຈັກບັງຄັບຕົນ ກົດຫມາຍທີ່ຫ້າມການຢ່າງນີ້ບໍ່ມີ.*"

## ອຸປນິສັຍແບບຄຣິສຕຽນ:

ພຣະເຈົ້າມີພຣະປະສົງໃຫ້ຄຣິສຕຽນມີອຸປນິສັຍທີ່ກະທຳແຕ່ຄວາມດີ (ຄາລາເຕັຽ 5:22; ຕີໂຕ 1:8; 2:14 ) ຄວາມດີສາມາດສະແດງອອກໃນຫລາຍໆດ້ານ ຈະເປັນສິ່ງໃດກໍຕາມທີ່ຈິດສຳນຶກຜິດແລະຊອບຂອງຕົນເຫັນວ່າດີແລະສາມັນສຳນຶກຂອງຄົນທົ່ວໄປເຫັນວ່າດີ (ກິຈການ 24:16; ໂຣມ 12:17 ) ພຣະຄັມພີໄດ້ກ່າວເຖິງອຸປນິສັຍແຫ່ງຄວາມ

ດີໄວ້ຫລາຍປະການທີ່ຄຣິສຕຽນຄວນຈະມີ ແຕ່ເຮົາສາມາດຄັດເອົາແລະຈັດເປັນອຸປນິສັຍປະເພດຕ່າງໆ ໄດ້ 10 ປະເພດດັ່ງຕໍ່ໄປນີ້.

**1. ຄວາມຮັກ** ພຣະເຈົ້າຊົງສອນວ່າ "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ" (ມັດທາຍ 22:39) "ຈົ່ງຮັກສັດຕຣູ" (ມັດທາຍ 5:44) ໃນພຣະທັມ 1 ໂກຣິນໂທ 13:4-7 ໄດ້ອະທິບາຍເຖິງລັກສະນະຂອງຄວາມຮັກແບບຄຣິສຕຽນວ່າ *"ຄວາມຮັກກໍອົດທົນດົນນານ ແລະຊອບໃນການເມດຕາກະຣຸນາ ຄວາມຮັກບໍ່ເຫິງສາ, ບໍ່ອວດອ້າງ, ບໍ່ຈອງຫອງ, ບໍ່ເຮັດການອັນບໍ່ສຸພາບ, ບໍ່ຄິດເຫັນແກ່ປະໂຍດສ່ວນຕົວຝ່າຍດຽວ, ບໍ່ມີໃຈຮ້າຍງ່າຍ, ບໍ່ຊອບຈົດຈຳຄວາມຜິດ, ບໍ່ຍິນດີໃນການອະທັມແຕ່ຍິນດີໃນການສັດຈິງ, ຄວາມຮັກສູ້ທົນທຸກສິ່ງ(ເຖິງຈະເປັນຄວາມຜິດຂອງຄົນອື່ນ), ເຊື່ອທຸກສິ່ງ (ເຊື່ອໃນສ່ວນດີຂອງຄົນອື່ນ), ໄວ້ວາງໃຈໃນທຸກສິ່ງ, ແລະພຽນທົນເອົາທຸກສິ່ງ."* ການມີຄວາມຮັກຍັງລວມໄປເຖິງມີໃຈກວ້າງຂວາງແລະມີການພົວພັນທີ່ດີກັບຄົນອື່ນອີກນຳ (ຕີໂຕ 1:8) ຄວາມຮັກເປັນພື້ນຖານຂອງອຸປນິສັຍແບບຄຣິສຕຽນ(ໂຢຮັນ 13:35) ຄຣິສຕຽນຈົ່ງຮັກທຸກຄົນ ປາຖນາດີຕໍ່ທຸກຄົນ ແລະກະທຳດີກັບທຸກຄົນ.

**2. ຄວາມບໍຣິສຸດ** ໃນທີ່ນີ້ໄດ້ເນັ້ນໃສ່ຄວາມບໍຣິສຸດເຣື່ອງເພດ ທີ່ສະແດງອອກໂດຍການບໍ່ລ່ວງປະເວນີ (ການຜິດຊາຍຍິງ)ຄືບໍ່ມີເພດສັມພັນແລະບໍ່ມີໃຈກຳຫນັດກັບຄົນທີ່ບໍ່ແມ່ນຄູ່ສົມຣົດຂອງຕົນ, ສັດຊື່ຕໍ່ຄູ່ສົມຣົດ, ຖ້າຫາກເປັນຄູ່ຮັກ(ແຟນ)ກັນກໍບໍ່ລ່ວງເກີນກັນກ່ອນການແຕ່ງງານ ໃຫ້ພິທີສົມຣົດຂອງເຮົາເປັນໄປຢ່າງມີກຽດ ( ເຮັບເຣີ 13:4; 1 ເທຊະໂລນິກ 4:3; ມັດທາຍ 5:8 ) ບໍ່ຫຍຸ້ງກ່ຽວກັບສິ່ງລາມົກອານາຈານ ວາງຕົວຕໍ່ເພດກົງກັນຂ້າມຢ່າງເໝາະສົມ.

**3. ຄວາມສັດຊື່** ສະແດງອອກດ້ວຍການຮັກຄວາມຈິງ ເວົ້າແຕ່ຄວາມຈິງ, ບໍ່ຄົດໂກງ, ບໍ່ມີເລ້ຫລ່ຽມ, ຮັບຜິດຊອບ, ຮັກສາຄຳເວົ້າ, ລວມທັງການປະກອບອາຊີບຫາລ້ຽງຊີວິດໃນທາງສັດຊື່ສຸຈຣິດ ( ເອເຟໂຊ 4:15; ຕີໂຕ 2:12) ຄວາມສັດຊື່ຍັງສະແດງອອກເຖິງການຮັກຄວາມຖືກຕ້ອງ, ຍຸດຕິທັມ, ບໍ່ລຳອຽງ, ບໍ່ເຂົ້າຂ້າງໃດຂ້າງນຶ່ງຢ່າງຜິດໆ ເພາະເຫັນແກ່ໜ້າວ່າເປັນເພື່ອນຫລືເປັນພີ່ນ້ອງ ຫລືເຫັນແກ່ຜົນປະໂຍດທີ່ຕົນຈະໄດ້ຮັບ ( ຕີໂຕ 1:8; ຢາໂກໂບ 2:9)

**4. ຄວາມຖ່ອມຕົນ** ພຣະເຈົ້າມີພຣະປະສົງໃຫ້ເຮົາມີຄວາມຖ່ອມຕົນ (ໂຣມ 12:6; ຄາລາເຕັຽ 5:22; ເອເຟໂຊ 4:2; ຟີລິບປອຍ 2:3) ລັກສະນະຂອງຄວາມຖ່ອມຕົນມີຫລາຍປະການເຊັ່ນ ບໍ່ອວດອົ່ງ, ສຸພາບອ່ອນນ້ອມ, ບໍ່ຫລົງຕົນ ຍອມຮັບວ່າຕົນເອງກໍບໍ່ສົມບູນ, ບໍ່ໂອ້ອວດ, ບໍ່ຍົກຕົນຂົ່ມເພິ່ນ, ໃຫ້ກຽດຄົນອື່ນ, ບໍ່ຮຽກຮ້ອງເອົາກຽດແລະຄວາມໂຄຣົບນັບຖືຈາກຄົນອື່ນ, ຍອມນົວລະບັດຮັບໃຊ້ຄົນອື່ນ, ຍອມຮັບຄົນອື່ນ, ຍອມເຊື່ອຟັງຄົນທີ່ມີຄຸນນະວຸດທີທີ່ເຮົາຄວນເຊື່ອຟັງເຊັ່ນ ພໍ່ແມ່, ຄຣູອາຈານ, ຜູ້ບັງຄັບບັນຊາ, ຜູ້ຮັກສາກົດຫມາຍ, ຜູ້ບໍຣິຫານປະເທດ, ຍອມຟັງຄວາມຄິດເຫັນຂອງຄົນອື່ນ, ຮູ້ຈັກຍອມຮັບຄວາມຜິດຂອງຕົນ, ຮູ້ຈັກຂໍອະພັຍແລະໃຫ້ອະພັຍ ອົງພຣະເຢຊູຊົງກ່າວວ່າ *"ຜູ້ໃດຍົກຕົວຂຶ້ນ ຜູ້ນັ້ນຈະຖືກຖອຍລົງ ຜູ້ໃດຖ່ອມຕົວລົງ ຜູ້ນັ້ນຈະຖືກຍົກຂຶ້ນ."* (ມັດທາຍ 23:12 )

**5. ຄວາມພໍໃຈ** ພຣະຄັມພີສອນເຮົາວ່າຢ່າໂລບ ( ໂຣມ 13:9) ຈົ່ງພໍໃຈໃນສິ່ງທີ່ຕົນມີຢູ່ (ເຮັບເຣີ 13:5 ) ບໍ່ຍຶດຫມັ້ນກັບສິ່ງຂອງໃນໂລກ ແລະຄວາມສະດວກສະບາຍສນຸກລື້ນເລີງໃນໂລກນີ້ ( 1 ໂຢຮັນ 2:15 ) ບໍ່ຟູມເຟືອຍ, ອຸປໂພກບໍຣິໂພກ(ໃຊ້, ກິນ, ດື່ມ)ຕາມຄວາມຈຳເປັນ, ບໍ່ດຳເນີນຊີວິດທີ່ເກີນຖານະຂອງຕົນ (ລູກາ 12:15; ຢາໂກໂບ 5:5) ຮູ້ຈັກບັງຄັບຕົນ ( 1 ຕີໂມທຽວ 3:2, 11 )

**6. ການບັງຄັບຕົນ** ພຣະຄັມພີສອນໃຫ້ເຮົາດຳເນີນຊີວິດໂດຍຮູ້ຈັກບັງຄັບຕົນຫລືບັງຄັບໃຈຕົນເອງ (ຄາລາເຕັຽ 5:23; 2 ຕີໂມທຽວ 1:7; ຕີໂຕ 1:9 ) ການບັງຄັບຕົນສະແດງອອກດ້ວຍການດຳເນີນຊີວິດຢ່າງມີວິນັຍ (ສຸພາສິດ 4:13; 5:23; 12:1 ) ຂຍັນຫມັ່ນພຽນ (ສຸພາສິດ 10:4) ການບັງຄັບຕົນຈະນຳໄປສູ່ການພະຍາຍາມປັບປຸງແກ້ໄຂຕົນເອງໃນທຸກດ້ານເຊັ່ນ ການຄວບຄຸມອາລົມ, ຄວາມຮູ້ສຶກ, ແລະຄວາມຕ້ອງການຂອງຕົນເອງ (1 ໂກຣິນໂທ 9:

27) ການຮູ້ຈັກບັງຄັບຕົນແລະຄວບຄຸມຕົນເອງໃນດ້ານການກິນດື່ມ ຫລືໃນດ້ານການໃຊ້ຈ່າຍ(ຕີໂຕ 2:2) ການບັງຄັບຕົນຍັງລວມໄປເຖິງຄວາມຮັບຜິດຊອບຕໍ່ໜ້າທີ່ແລະເປັນຄົນທີ່ກົງຕໍ່ເວລາອີກນໍາ.

**7. ຄວາມເຂັ້ມແຂງກ້າຫານ** ພຣະເຈົ້າຢາກໃຫ້ເຮົາມີຄວາມເຂັ້ມແຂງແລະກ້າຫານ ( ພຣະບັນຍັດສອງ 31: 6-7; ໂຢຊວຍ 1:6-9; ເພງສັຣເສີນ 27:14; 1 ໂກຣິນໂທ 16:13; 2 ຕີໂມທຽວ 2:1 ) ຄວາມເຂັ້ມແຂງກ້າຫານໃນທີ່ນີ້ແມ່ນຄວາມເຂັ້ມແຂງທີ່ຈະພາໃຫ້ຢືນຢັດໃນສິ່ງທີ່ຖືກຕ້ອງ ຄວາມເຂັ້ມແຂງກ້າຫານຈະສະແດງອອກດ້ວຍການບໍ່ຢ້ານກົວ. ການບໍ່ທໍ້ຖອຍຕໍ່ຄວາມຍາກລໍາບາກແລະການຖືກຕໍາໜິນິນທາ, ຄົນທີ່ເຂັ້ມແຂງກ້າຫານຈະມີຄວາມອົດທົນດົນນານ, ບາກບັ່ນ, ຢືນຢັດ, ໜັກແໜ້ນ, ກະຕືລືລົ້ນ, ແລະກ້າຮັບຜິດ, ຄວາມເຂັ້ມແຂງກ້າຫານນີ້ຈະເກີດຂຶ້ນໄດ້ກໍຍ້ອນວ່າເຮົາມີພຣະເຈົ້າເປັນຜູ້ຊົງເພີ່ມກໍາລັງເຫື່ອແຮງຢູ່ພາຍໃນເຮົາ (ຟີລິບປອຍ 4:13; 2 ເທຊະໂລນີກ 3:3 )

**8. ຄວາມກະຕັນຍູ** ແມ່ນການກະທໍາດີຕອບແທນຜູ້ທີ່ກະທໍາດີຕໍ່ເຮົາ ຜູ້ມີບຸນຄຸນຕໍ່ເຮົາ ເຮົາສາມາດສະແດງອອກໄດ້ໂດຍການໃຫ້ກຽດເຊັ່ນ ການດູແລບົວລະບັດບິດາມານດາ(ໂກໂລຊາຍ 3:15; 2 ຕີໂມທຽວ 3:2) ນອກນັ້ນຍັງລວມໄປເຖິງຄົນອື່ນໆ ທີ່ໄດ້ກະທໍາດີຕໍ່ເຮົາອີກນໍາ.

**9. ຄວາມຊົມຊື່ນຍິນດີ** ພຣະເຈົ້າມີພຣະປະສົງໃຫ້ເຮົາເປັນຄົນທີ່ມີຄວາມຊົມຊື່ນຍິນດີ, ມີສັນຕິສຸກ, ຊຶ່ງສະແດງອອກເຖິງມີຄວາມຊົມຊື່ນຢູ່ສເມີ, ຈິດໃຈທີ່ລ້າເລີງເບີກບານ, ມີຄວາມຫວັງຢູ່ສເມີ, ບໍ່ກະວົນກະວາຍ, ຄິດໃນແງ່ບວກ, ມີກໍາລັງໃຈ, ບໍ່ຈົມຢູ່ກັບຄວາມເສົ້າໝອງ(ຟີລິບປອຍ 4:4; 1 ເທຊະໂລນີກ 5:16; ມັດທາຍ 6:31-34) ຄວາມຊົມຊື່ນຍິນດີແລະສັນຕິສຸກດັ່ງກ່າວນີ້ແມ່ນພຣະເຈົ້າເປັນຜູ້ຊົງປະທານໃຫ້ ເປັນສັນຕິສຸກທີ່ເກີນຄວາມເຂົ້າໃຈ ແລະເປັນສັນຕິສຸກທີ່ບໍ່ເໝືອນໂລກນີ້ໃຫ້ເຮົາ(ຟີລິບປອຍ 4:6-7; ໂຢຮັນ 14:27 ) ເປັນສັນຕິສຸກທີ່ມີຢູ່ໃນສ່ວນເລິກຂອງຈິດໃຈເຖິງແມ່ນວ່າຈະຢູ່ຖ້າມກາງໂລກທີ່ມີຄວາມທຸກ(ໂຢຮັນ 16:33)

**10. ການໃຊ້ສະຕິປັນຍາ** ພຣະເຈົ້າມີພຣະປະສົງໃຫ້ເຮົາເປັນຄົນມີສະຕິປັນຍາ (ເພງສັຣເສີນ 90:12; ສຸພາສິດ 16:22) ທ່ານຄວນເປັນຄົນສລາດໃນການດໍາເນີນຊີວິດ(ມັດທາຍ 10:16) ຄົນທີ່ມີປັນຍາໃນຊີວິດສາມາດສະແດງອອກໄດ້ດ້ວຍການເປັນຄົນທີ່ຮັກໃນທາງດີ, ມີເປົ້າໝາຍໃນຊີວິດ, ມີຄວາມຄິດທີ່ສ້າງສັນ, ເປັນຄົນຂຍັນໝັ່ນຮຽນຮູ້, ຂົນຂວາຍຫາຄວາມຮູ້ (ສຸພາສິດ 10:14; 23:23; 2 ຂ່າວຄາວ 1:11) ເປັນຄົນທີ່ຮູ້ຈັກເລືອກດໍາເນີນຊີວິດໃຫ້ເປັນປໂຍດຕໍ່ພຣະເຈົ້າ, ຕໍ່ຕົນເອງ, ແລະຕໍ່ຄົນອື່ນ ບໍ່ດໍາເນີນຊີວິດທີ່ບໍ່ເກີດປໂຍດຕໍ່ພຣະເຈົ້າ, ຕໍ່ຕົນເອງ, ແລະຕໍ່ຄົນອື່ນ(ໂຣມ 15: 2; 1 ໂກຣິນໂທ 6:12; 10:23-24; 2 ໂກຣິນໂທ 5:15) ນອກຈາກນີ້ການໃຊ້ສະຕິປັນຍາຍັງສະແດງອອກໃນການດໍາເນີນຊີວິດຢ່າງມີສະຕິຮອບຄອບ(ຕີໂຕ 1:8; 2:2,5,6,12) ບໍ່ເມົາສຸຣາຫລືສິ່ງໃດໆ ທີ່ເຮັດໃຫ້ຂາດສະຕິ(ເອເຟໂຊ 5: 18)ດໍາເນີນຊີວິດໃນຄວາມບໍ່ປມາດ (1 ໂກຣິນໂທ 10:12) ບໍ່ເມົາເຫລົ້າຫລືເສບສິ່ງທີ່ເຮັດໃຫ້ສະຕິປັນຍາເສື່ອມ ພຣະຄັມພີສອນວ່າ *"ການຢໍາເກງພຣະຜູ້ເປັນເຈົ້າ ເປັນບໍ່ເກີດແຫ່ງປັນຍາ."* (ສຸພາສິດ 9:10)

ອຸປນິສັຍຄຣິສຕຽນ 10 ປະການນີ້ ຕ້ອງໃຫ້ມີຢູ່ສເມີໃນການກະທໍາ, ຄໍາເວົ້າ, ແລະຄວາມຄິດຂອງເຮົາ ຄືໃຫ້ດີພ້ອມທຸກປະການ (1 ເປໂຕ 1:15; ມັດທາຍ 5:48)

**ການຕັດສິນໃຈ**: - ທ່ານຕັດສິນໃຈທີ່ຈະຖິ້ມອຸປນິສັຍເກົ່າທີ່ບໍ່ດີ ແລະຕັ້ງໃຈຈະໃຫ້ພຣະເຈົ້າປ່ຽນແປງທ່ານໃຫ້ມີອຸປນິສັຍໃໝ່ຫລືບໍ່? ..... ( )ຕັດສິນໃຈແລ້ວ ( )ຍັງບໍ່ທັນຕັດສິນໃຈເທື່ອ

**ທ່ອງຈໍາຂໍ້ພຣະຄັມພີ**: ພຣະທັມ 2 ໂກຣິນໂທ 5:17 *"ເຫດສັນນັ້ນຜູ້ທີ່ຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກສ້າງຂຶ້ນໃໝ່ແລ້ວ ຖານະເກົ່າເຫຼົ່ານັ້ນກໍລ່ວງໄປ ເບິ່ງແມ, ກາຍເປັນສິ່ງໃໝ່ທັງນັ້ນ."*

# ບົດທີ 6
# ນຳຄົນອື່ນມາຫາພຣະເຢຊູຄຣິດ

*ເປີດພຣະຄັມພີ ອ່ານພຣະທັມມັດທາຍ 28:19-20 ພິຈາຣະນາເບິ່ງວ່າ ພຣະເຢຊູມີພຣະບັນຊາ (ສັ່ງ ) ໃຫ້ສາວົກຂອງພຣະອົງກະທຳຫຍັງແດ່? ໃນການກະທຳສິ່ງເຫລົ່ານັ້ນ ພວກເພິ່ນຕ້ອງເຮັດແນວໃດແດ່? ແລະພຣະອົງຊົງສັນຍາໄວ້ກັບພວກເພິ່ນແນວໃດ?*

ໃນພຣະທັມມັດທາຍ 28:19-20 ເປັນພຣະມະຫາບັນຊາຂອງພຣະເຢຊູຄຣິດທີ່ມີຕໍ່ສາວົກຂອງພຣະອົງທຸກຄົນ ພຣະອົງຊົງສັ່ງວ່າ *"ເຫດສັນນັ້ນທ່ານທັງຫລາຍຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດ ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫລະ, ເຮົາຢູ່ກັບທ່ານທັງຫລາຍທຸກໆ ວັນຈົນຫມົດກັບ."* ໃນພຣະທັມກິຈການ 1:8 ພຣະເຢຊູຊົງກ່າວອີກວ່າ *"...ພວກທ່ານຈະເປັນພຍານຝ່າຍເຮົາໃນກຸງເຢຣູຊາເລັມ, ຕລອດທົ່ວແຂວງຢູດາຍ, ກັບແຂວງຊາມາເຣັຽ, ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ."*

ການໄປເຮັດໃຫ້ຄົນທຸກຊາດເປັນລູກສິດຂອງພຣະເຢຊູ ແລະການເປັນພຍານຝ່າຍພຣະເຢຊູຈົນເຖິງສຸດປາຍແຜ່ນດິນໂລກນັ້ນຫມາຍຄວາມວ່າ ຄຣິສຕຽນທຸກຄົນມີໜ້າທີ່ຕ້ອງປະກາດຂ່າວປະເສີດຫລືສອນເຣື່ອງພຣະເຢຊູຊົງຊ່ອຍມະນຸດໃຫ້ລອດພົ້ນຈາກບາບແກ່ທຸກໆ ຄົນ ແລະເຊີນຊວນເຂົາເຈົ້າໃຫ້ຕ້ອນຮັບເອົາພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນ ເພື່ອຊ່ອຍຄົນທັງຫລາຍໃຫ້ລອດພົ້ນບາບໃຫ້ໄດ້ຫລາຍແລະໄວທີ່ສຸດເທົ່າທີ່ຈະເປັນໄປໄດ້. ການປະກາດຂ່າວປະເສີດບາງຄັ້ງເອີ້ນວ່າ "ການເປັນພຍານ" ແລະເຣື່ອງລາວທີ່ເຮົາກ່າວບອກນັ້ນເອີ້ນວ່າ "ຂ່າວດີ" "ຂ່າວປະເສີດ" ຫລື "ພຣະກິຕິຄຸນ"

ການປະກາດຂ່າວປະເສີດຫລືການເປັນພຍານເພື່ອນຳຄົນມາຫາພຣະເຢຊູຄຣິດນັ້ນ ເຮົາສາມາດກະທຳໄດ້ຫລາຍທາງ ໃນທີ່ນີ້ເຮົາຈະກ່າວເຖິງແຕ່ວິທີທີ່ເຮົາທຸກຄົນສາມາດທີ່ຈະເຮັດໄດ້ ຊຶ່ງໄດ້ແກ່.

1. ເລົ່າເຣື່ອງສ່ວນຕົວໃຫ້ແກ່ຄົນທີ່ເຮົາກຳລັງເປັນພຍານຟັງ ຊຶ່ງບາງເທື່ອເອີ້ນວ່າ "ການເປັນພຍານສ່ວນຕົວ" ເປັນການເລົ່າເຣື່ອງສ່ວນຕົວທີ່ເປັນຂ່າວດີໃຫ້ແກ່ຄົນທີ່ເຮົາເປັນພຍານຟັງແບບຕົວຕໍ່ຕົວ.
2. ແຈກໃບປິວຫລືປື້ມເຣື່ອງຂອງພຣະເຈົ້າໃຫ້ລາວອ່ານ ຫລືແຈກກາແຊດ ວີດີໂອ ເຣື່ອງຂອງພຣະເຈົ້າໃຫ້ລາວໄດ້ຟັງຫລືເບິ່ງ.
3. ຊວນລາວໄປຮ່ວມນະມັສການນຳທີ່ຄຣິສຕະຈັກ ຫລືໄປຮ່ວມກິຈກັມຕ່າງໆ ທີ່ຄຣິສຕະຈັກຈັດຂຶ້ນ
4. ຊວນລາວໄປຮ່ວມກຸ່ມສາມັກຄີທັມຂອງຄຣິສຕະຈັກ ຫລືທີ່ໄດ້ຈັດຂຶ້ນຕາມເຮືອນ ຫລືທີ່ອື່ນໆ
5. ສະແດງຄວາມຮັກ, ເອົາໃຈໃສ່, ຊ່ອຍເຫລືອ ແລະສະແດງຊີວິດທີ່ດີຕໍ່ລາວ
6. ອະທິຖານເພື່ອລາວ(ອອກຊື່)ເປັນປະຈຳ ເພື່ອໃຫ້ພຣະເຈົ້າຊົງເປີດຈິດໃຈຂອງລາວ
7. ຖ້າຫາກລາວມີບັນຫາ ຈົ່ງຂໍອະທິຖານຮ່ວມກັບລາວ ທູນຂໍໃຫ້ພຣະເຈົ້າຊົງຊ່ອຍແກ້ບັນຫາຂອງລາວ ເພື່ອລາວຈະໄດ້ມີປະສົບການຊີວິດກັບພຣະອົງເປັນການສ່ວນຕົວ.

## ວິທີການເປັນພຍານສ່ວນຕົວ:

ການເປັນພຍານສ່ວນຕົວ ສາມາດກະທຳເປັນຂັ້ນຕອນດັ່ງຕໍ່ໄປນີ້...

1. **ເລີ້ມການສົນທະນາໂອ້ລົມ** ເລີ້ມຕົ້ນດ້ວຍການຖາມທັກທາຍ ຖ້າຫາກຍັງບໍ່ທັນຮູ້ຈັກກັນກໍຈົ່ງແນະນຳຕົວກ່ອນ ຖ້າຫາກຮູ້ຈັກກັນແລ້ວບໍ່ຕ້ອງແນະນຳຕົວກໍໄດ້ ຕໍ່ຈາກນັ້ນກໍໃຫ້ໂອ້ລົມເຣື່ອງທົ່ວໄປເພື່ອສ້າງຄວາມສັມພັນລຶ້ງ

ເຄີຍກັນ ແລະຕໍ່ໄປອີກໃຫ້ຂໍເວລານຳລາວໜ້ອຍນຶ່ງເພື່ອຈະໄດ້ເລົ່າເຣື່ອງຂອງພຣະເຈົ້າສູ່ລາວຟັງວ່າພຣະອົງສາມາດຊ່ອຍລາວໄດ້ຢ່າງໃດແດ່ ເໝືອນກັບທີ່ພຣະອົງໄດ້ຊ່ອຍທ່ານມາແລ້ວນັ້ນ. ຕໍ່ຈາກນັ້ນກໍແມ່ນເລົ່າຄຳພຍານຊີວິດຂອງທ່ານເອງ.

**2. ເລົ່າຄຳພຍານຊີວິດ** ຄືເລົ່າເຖິງປະສົບການຊີວິດຂອງທ່ານເອງໃນການເຊື່ອພຣະເຢຊູວ່າ ມີສິ່ງໃດແດ່ເກີດຂຶ້ນໃນຊີວິດຂອງທ່ານ ການເລົ່າເຣື່ອງລາວຊີວິດຈິງຂອງຕົນຈະຊ່ອຍເປັນພຍານຢືນຢັນວ່າພຣະເຈົ້າມີຈິງ ແລະພຣະອົງຊົງຊ່ອຍທ່ານໄດ້ຢ່າງແທ້ຈິງ ການເລົ່າຄຳພຍານຊີວິດປະກອບດ້ວຍ 3 ຂັ້ນຕອນດັ່ງນີ້..

(1) ຊີວິດຂອງທ່ານເອງ ກ່ອນທີ່ຈະມາເຊື່ອໃນພຣະເຢຊູເປັນຊີວິດແບບໃດ?

(2) ທ່ານມາເຊື່ອພຣະເຢຊູໄດ້ຢ່າງໃດ?

(3) ເມື່ອທ່ານເຊື່ອພຣະເຢຊູແລ້ວ ຊີວິດຂອງທ່ານດີຂຶ້ນຢ່າງໃດແດ່? ເຊັ່ນ ອຸປນິສັຍຂອງທ່ານໄດ້ປ່ຽນແປງດີຂຶ້ນກວ່າແຕ່ກ່ອນແນວໃດແດ່? ທ່ານມີສັນຕິສຸກໃນຊີວິດຢ່າງໃດແດ່? ຊີວິດຂອງທ່ານໄດ້ຮັບພຣະພອນຈາກພຣະເຈົ້າແນວໃດແດ່? ພຣະເຈົ້າໄດ້ຕອບຄຳອະທິຖານຂອງທ່ານຢ່າງໃດແດ່? ທ່ານມີປະສົບການຊີວິດແບບພິເສດກັບພຣະເຈົ້າຢ່າງໃດແດ່? ແລະສິ່ງທີ່ດີອື່ນໆ ທີ່ທ່ານໄດ້ຮັບການປ່ຽນແປງເມື່ອມາເຊື່ອພຣະເຢຊູ.

ຖ້າຫາກທ່ານເກີດຢູ່ໃນຄອບຄົວຄຣິສຕຽນ ໃຫ້ທ່ານເປັນພຍານເນັ້ນໃສ່ຈຸດທີ 3 ວ່າຊີວິດຂອງທ່ານໄດ້ມີໂອກາດເກີດແລະເຕີບໃຫຍ່ໃນຄອບຄົວຄຣິສຕຽນນັ້ນ ດີແນວໃດແດ່? ແນະນຳວ່າທ່ານໄດ້ຕັດສິນໃຈເຊື່ອພຣະເຢຊູດ້ວຍຕົນເອງຢ່າງແທ້ຈິງ ບໍ່ແມ່ນວ່າທ່ານເປັນຄຣິສຕຽນເພາະວ່າຄອບຄົວຂອງທ່ານເປັນຄຣິສຕຽນ.

ຫລັງຈາກເລົ່າຄຳພຍານຊີວິດແລ້ວ ຈຶ່ງຢືນຢັນກັບລາວອີກເທື່ອນຶ່ງວ່າພຣະເຈົ້າຜູ້ຊົງຊ່ອຍທ່ານນັ້ນ ສາມາດຊ່ອຍລາວໄດ້ເຊັ່ນດຽວກັນ ແລະພຣະອົງຊົງຊ່ອຍມະນຸດທຸກຄົນໄດ້ດັ່ງນີ້..... (ຍົກຕົວຢ່າງໃຫ້ລາວຟັງ)

ຈາກນັ້ນໃຫ້ເລົ່າຄຳພຍານ ເຣື່ອງຂ່າວປະເສີດ ຕໍ່

**3. ເລົ່າຄຳພຍານເຣື່ອງຂ່າວປະເສີດ** (ພຣະກິຕິຄຸນ) ແມ່ນການເລົ່າເຣື່ອງພຣະເຢຊູຊົງໄຖ່ບາບ ໂດຍເວົ້າເຖິງຫົວເຣື່ອງຕ່າງໆ ຕາມໂຄງເຣື່ອງດັ່ງຕໍ່ໄປນີ້.

(1) **ພຣະເຈົ້າຊົງຮັກມະນຸດ** ພຣະເຈົ້າມີຈິງແຕ່ພຣະອົງຊົງເປັນພຣະວິນຍານ ມະນຸດຈຶ່ງບໍ່ສາມາດເບິ່ງເຫັນພຣະອົງ. ພຣະເຈົ້າຊົງເປັນຜູ້ສ້າງສັພສິ່ງທັງປວງດ້ວຍຄວາມຮັກ, ຊົງປາຖນາໃຫ້ມະນຸດເຊື່ອຟັງພຣະອົງເພື່ອເຂົາຈະມີຊີວິດທີ່ຄົບບໍຣິບູນເປັນຊີວິດອັນຕລອດໄປເປັນນິດ (ນິຣັນ)

(2) **ແຕ່ມະນຸດໄດ້ເຮັດບາບ** ມະນຸດຄູ່ທຳອິດທີ່ເປັນພໍ່ເຖົ້າແມ່ເດີມຂອງມະນຸສໂລກໄດ້ກະທຳບາບບໍ່ເຊື່ອຟັງພຣະເຈົ້າ ສົ່ງຜົນໃຫ້ພວກເຮົາຜູ້ເປັນເຊື້ອສາຍໄດ້ຮັບຖານະເປັນຄົນບາບແລະຖືກຕັດຂາດຈາກພຣະເຈົ້າແລະຕ້ອງໄດ້ຮັບຜົນກັມຄື 1)ມີຊີວິດທີ່ທຸກລຳບາກ, ບໍ່ມີສັນຕິສຸກອັນແທ້ຈິງໃນຊີວິດ 2) ມີນິສັຍທີ່ຕິດຢູ່ກັບທັມມະຊາດຂອງຄວາມບາບ 3) ບໍ່ມີພຣະເຈົ້າເປັນທີ່ເພິ່ງພາ ແລະ 4) ຕ້ອງຕາຍທັງຝ່າຍຮ່າງກາຍແລະຝ່າຍຈິດວິນຍານ ຄືຮ່າງກາຍຕ້ອງກັບຄືນໄປເປັນດິນ ສ່ວນຈິດວິນຍານກໍຕ້ອງຖືກພິພາກສາ ໄປຕົກນະຮົກບຶງໄປຕລອດໄປເປັນນິດ

(3) **ຄົນທີ່ເຊື່ອໃນພຣະເຢຊູຈະຫລຸດພົ້ນຈາກບາບ** ມີທາງດຽວທີ່ມະນຸດສາມາດຫລຸດພົ້ນຈາກບາບກໍຄືຕ້ອງຖິ້ມໃຈເກົ່າເອົາໃຈໃໝ່ ໂດຍສຳນຶກວ່າຕົນເອງເປັນຄົນບາບ ເຊື່ອວ່າພຣະເຢຊູຊົງເປັນພຣະຜູ້ໂຜດໃຫ້ພົ້ນແລະຍອມໃຫ້ພຣະອົງເປັນເຈົ້າຊີວິດ(ເປັນພຣະເຈົ້າ)ໃນຊີວິດ ຖ້າລາວຫາກຍອມຮັບເຊື່ອຕາມນີ້ລາວກໍຈະໄດ້ຮັບຄວາມຫລຸດພົ້ນຈາກບາບ ຊຶ່ງມີລັກສະນະດັ່ງຕໍ່ໄປນີ້ 1)ຈະມີສັນຕິສຸກອັນແທ້ຈິງ ຊຶ່ງເປັນສັນຕິສຸກທີ່ບໍ່ເໝືອນໂລກນີ້ເອົາໃຫ້ 2)ນິສັຍຈະໄດ້ຮັບການປ່ຽນແປງໄປໃນທາງດີ 3)ຈະມີພຣະເຈົ້າເປັນທີ່ເພິ່ງພາ ແລະ 4) ເມື່ອຝ່າຍຮ່າງກາຍໄດ້ຕາຍໄປຈິດວິນຍານຂອງລາວຈະໄດ້ໄປຢູ່ນຳພຣະເຈົ້າໃນສວັນຕລອດໄປເປັນນິດ.

ສິ່ງທີ່ສຳຄັນນັ້ນແມ່ນ ມະນຸດບໍ່ສາມາດຊ່ອຍຕົນເອງໃຫ້ຫລຸດພົ້ນຈາກບາບໄດ້ ຈຳເປັນຕ້ອງເພິ່ງໃນພຣະຄຸນຂອງພຣະເຈົ້າ ແລະດ້ວຍການຖິ້ມໃຈເກົ່າເອົາໃຈໃໝ່ຫັນມາເຊື່ອແລະວາງໃຈໃນອົງພຣະເຢຊູພຽງເທົ່ານັ້ນ.

ຕໍ່ຈາກນັ້ນແມ່ນການອະທິຖານເຊີນຊວນ

4) **ການເຊີນຊວນ** ເຊີນຊວນລາວວ່າ ໃນເມື່ອອົງພຣະເຢຊູຊົງສາມາດຊ່ອຍລາວໄດ້ດັ່ງທີ່ກ່າວມາແລ້ວ ບັດນີ້ລາວຢາກໃຫ້ພຣະອົງຊ່ອຍຫລືບໍ່ ຖ້າລາວຕອບວ່າຢາກໃຫ້ຊ່ອຍ ກໍຈົ່ງຊວນລາວໃຫ້ຮັບເຊື່ອໂດຍການນຳພາລາວອະທິຖານຕ້ອນຮັບເອົາພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນ ໃຫ້ລາວອະທິຖານຕາມຫລັງວ່າດັ່ງນີ້...

*"ຂ້າແດ່ພຣະເຈົ້າ ຂ້າພຣະອົງສຳນຶກແລ້ວວ່າຂ້າພຣະອົງເປັນຄົນບາບ ເຊື່ອວ່າພຣະອົງຊົງສິ້ນພຣະຊົນເທິງໄມ້ກາງແຂນ ເພື່ອຮັບໂທດບາບແທນຂ້າພຣະອົງ ຂ້າພຣະອົງຈຶ່ງຂໍອັນເຊີນພຣະອົງເຂົ້າມາ ເປັນພຣະຜູ້ເປັນເຈົ້າຂອງຂ້າພຣະອົງແຕ່ບັດນີ້ສືບຕໍ່ໄປ ຂ້າພຣະອົງອະທິຖານ ໃນພຣະນາມຂອງອົງພຣະເຢຊູຄຣິດເຈົ້າ ອາແມນ."*

ຫລັງຈາກລາວໄດ້ຮັບເຊື່ອແລ້ວ ທ່ານຄວນໜູນໃຈລາວໃຫ້ໄປນະມັສການທີ່ຄຣິສຕະຈັກເປັນປະຈຳ ເພື່ອໃຫ້ລາວໄດ້ຮຽນແລະສຶກສາເພີ້ມຂຶ້ນ ຂໍໃຫ້ທ່ານບອກຊື່ຂອງຜູ້ທີ່ເຊື່ອໃຫມ່ໃຫ້ຜູ້ນຳໃນຄຣິສຕະຈັກຮູ້ນຳ ແລະທ່ານຄວນເປັນອ້າຍ/ເອື້ອຍລ້ຽງຂອງລາວຕໍ່ໄປ ເພື່ອຊ່ອຍລ້ຽງດູລາວຝ່າຍຈິດວິນຍານໃຫ້ເຕີບໃຫຍ່ຂຶ້ນໄປ ຈົນລາວໄດ້ກາຍເປັນສາວົກທີ່ເຂັ້ມແຂງແລະເປັນອ້າຍ/ເອື້ອຍລ້ຽງຄົນອື່ນຕໍ່ໄປ.

ບາງເທື່ອກ່ອນທີ່ລາວຈະຮັບເຊື່ອລາວອາດຈະມີຄຳຖາມ ຖ້າທ່ານຫາກຕອບລາວໄດ້ຢ່າງເພິ່ງພໍໃຈຈະເປັນການດີທີ່ສຸດ ແຕ່ຖ້າທ່ານຫາກຕອບບໍ່ໄດ້ກໍຢ່າກັງວົນໃຈ ແຕ່ໃຫ້ບອກລາວວ່າມີຄົນອື່ນ(ອາຈານ)ທີ່ສາມາດຕອບຄຳຖາມຂອງລາວໄດ້ ທ່ານຈະໄປຄົ້ນຄວ້າຫລືຊອກຫາຄຳຕອບມາໃຫ້ ແຕ່ສິ່ງທີ່ແນ່ໃຈແທ້ໆນັ້ນແມ່ນພຣະເຈົ້າຊົງສາມາດຊ່ອຍເຮົາໄດ້ ແລະພຣະອົງຈະຊົງຊ່ອຍລາວເຫມືອນກັນ.

ຖ້າທ່ານຫາກໄດ້ກ່າວຄຳພຍານແລ້ວແຕ່ຄົນໆນັ້ນບໍ່ທັນພ້ອມທີ່ຈະຮັບເຊື່ອຫລືບໍ່ສົນໃຈ ທ່ານຢ່າມີຄວາມທໍ້ຖອຍໃຈ ເພາະວ່າມີຄຣິສຕຽນຈຳນວນຫລວງຫລາຍບໍ່ໄດ້ຮັບເຊື່ອໃນທັນທີທີ່ເຂົາເຈົ້າໄດ້ຍິນຂ່າວປະເສີດ ຫລາຍຄົນໄດ້ຮັບເຊື່ອຫລັງຈາກໄດ້ຮັບຟັງຄຳພຍານຫລາຍໆ ຄັ້ງ ແລະບາງຄົນຕ້ອງໃຊ້ເວລາຫລາຍປີຈຶ່ງມາຮັບເຊື່ອ.

ຂໍໃຫ້ທ່ານເປັນພຍານຊັກຊວນຕໍ່ໄປ ແລະຈົ່ງໃຊ້ຫລາຍວິທີສລັບກັນເຊັ່ນ ເລົ່າເຖິງສິ່ງທີ່ດີຫລາຍຢ່າງທີ່ທ່ານແລະເພື່ອນຄຣິສຕຽນຄົນອື່ນໄດ້ຮັບຈາກພຣະເຈົ້າໃຫ້ລາວໄດ້ຟັງເລື້ອຍໆ , ມອບໃບປິວຫລືປື້ມເຣື່ອງພຣະເຈົ້າໃຫ້ລາວອ່ານ, ມອບເທັບຄຳສອນໃຫ້ລາວຟັງ, ຊວນລາວໄປນະມັສການນຳທີ່ຄຣິສຕະຈັກຫລືຮ່ວມກິຈກັມຕ່າງໆ ທີ່ທາງຄຣິສຕະຈັກໄດ້ຈັດຂຶ້ນ, ຊວນລາວໄປຮ່ວມກຸ່ມສາມັກຄີຂອງຄຣິສຕຽນທີ່ໄດ້ຈັດຂຶ້ນຕາມບ້ານເຮືອນ, ສະແດງຄວາມຮັກແລະເອົາໃຈໃສ່ຕໍ່ລາວ, ຊ່ອຍເຫລືອແລະສະແດງຊີວິດທີ່ດີຕໍ່ລາວ, ອະທິຖານຢ່າງເອົາຈິງເພື່ອລາວເພື່ອໃຫ້ພຣະເຈົ້າຊົງເປີດຈິດໃຈຂອງລາວ.

ນອກຈາກນີ້ ຖ້າລາວຫາມີບັນຫາ ທ່ານຄວນຂໍອະນຸຍາດນຳລາວເພື່ອຈະໄດ້ອະທິຖານຮ່ວມກັນກັບລາວເພື່ອທູນຂໍໃຫ້ພຣະເຈົ້າຊົງແກ້ໄຂບັນຫາຂອງລາວ ເພື່ອລາວຈະໄດ້ມີປະສົບການກັບພຣະອົງ ແລະໃນທີ່ສຸດລາວຈະໄດ້ຮັບເຊື່ອພຣະອົງ.

**<u>ການຕັດສິນໃຈ</u>**: - ທ່ານຕັ້ງໃຈຈະເປັນພຍານເຣື່ອງພຣະເຢຊູກັບຄົນອື່ນຫລືບໍ່.... ( )ຕັ້ງໃຈ ( )ບໍ່ທັນຕັ້ງໃຈເທື່ອ

**<u>ທ່ອງຈຳຂໍ້ພຣະຄັມພີ</u>**: ພຣະທັມ ມັດທາຍ 28:19-20 *"ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດ ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫລະ, ເຮົາຈະຢູ່ກັບທ່ານທັງຫລາຍທຸກໆ ວັນຈົນຫມົດກັບ."*

# ບົດທີ 7
# ເຕີບໃຫຍ່ຂຶ້ນເປັນຜູ້ໃຫຍ່ຝ່າຍວິນຍານ

*ເປີດພຣະຄັມພີ ອ່ານພຣະທັມ ເອເຟໂຊ 4:12-13 ແລ້ວພິຈາຣະນາເບິ່ງວ່າ ບັນດາຜູ້ນຳຄຣິສຕະຈັກພຍາຍາມຕຽມໄພ່ພົນຊຶ່ງໝາຍເຖິງຜູ້ທີ່ເຊື່ອທຸກຄົນເພື່ອໃຫ້ເຂົາເຈົ້າບັນລຸຫຍັງ? ຈົນກວ່າທຸກຄົນຈະໄດ້ເປັນຫຍັງ? ຖ້ອຍຄຳທີ່ວ່າເປັນຄົນໃຫຍ່ເຕັມສ່ວນນັ້ນມີຄວາມໝາຍຢ່າງໃດ?*

ເມື່ອທ່ານຮັບເຊື່ອອົງພຣະເຢຊູແລ້ວ ທ່ານກໍເຫມືອນໄດ້ເກີດໃຫມ່ໃນພຣະເຈົ້າ ຊຶ່ງພຣະຄັມພີເອີ້ນວ່າ "**ການບັງເກີດໃຫມ່**" ເປັນການເກີດໃຫມ່ຝ່າຍຈິດວິນຍານ ອີງຕາມທັມມະຊາດ ເມື່ອຄົນເຮົາເກີດມາໃຫມ່ກໍຕ້ອງເປັນເດັກອ່ອນກ່ອນ (ແອນ້ອຍ) ແລ້ວຄ່ອຍໆ ຈະເຣີ່ມເຕີບໃຫຍ່ຂຶ້ນເປັນຜູ້ໃຫຍ່. ການເກີດໃຫມ່ຝ່າຍຈິດວິນຍານກໍເຊັ່ນດຽວກັນ ເມື່ອເຮົາຮັບເຊື່ອພຣະເຢຊູເອີ້ນວ່າການເກີດໃຫມ່ຝ່າຍຈິດວິນຍານ ເຮົາຈະເປັນເດັກອ່ອນຝ່າຍຈິດວິນຍານກ່ອນ ແຕ່ພຣະເຈົ້າບໍ່ປາຖນາໃຫ້ເຮົາເປັນເດັກອ່ອນຝ່າຍວິນຍານຕລອດໄປ ພຣະອົງມີພຣະປະສົງໃຫ້ເຮົາຈະເຣີ່ມເຕີບໃຫຍ່ຂຶ້ນຈົນເປັນຜູ້ໃຫຍ່ຝ່າຍຈິດວິນຍານ ດັ່ງໃນພຣະທັມໂກໂລຊາຍ 1:28 ໄດ້ກ່າວໄວ້ວ່າ "*ພຣະອົງນັ້ນແຫລະ, ທີ່ພວກເຮົາປະກາດຢູ່ ໂດຍເຕືອນສະຕິແລະສັ່ງສອນທຸກຄົນດ້ວຍປັນຍາທຸກຢ່າງ ເພື່ອຈະໄດ້ຖວາຍທຸກຄົນຕໍ່ພຣະພັກພຣະເຈົ້າເຫມືອນເປັນຄົນໃຫຍ່ຖ້ວນແລ້ວໃນພຣະຄຣິດ.*"

ພຣະທັມເຮັບເຣີ 6:1 ໄດ້ກ່າວໄວ້ວ່າ "*ເຫດສັນນັ້ນໃຫ້ພວກເຮົາປະຫລັກທັມເບື້ອງຕົ້ນຂອງພຣະຄຣິດໄວ້ແລະກ້າວຫນ້າໄປສູ່ຄວາມເປັນຜູ້ແກ່ແລ້ວ*" (ປະໄວ້ ບໍ່ແມ່ນປະຖິ້ມ) ໃນພຣະທັມເອເຟໂຊ 4:11-13 ກໍໄດ້ບອກເຮົາວ່າບັນດາຜູ້ນຳຄຣິສຕະຈັກທັງຫລາຍຈະພຍາຍາມສິດສອນບັນດາຜູ້ທີ່ເຊື່ອທຸກຄົນ "*..ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນນ້ຳນຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງເຣື່ອງພຣະບຸດຂອງພຣະເຈົ້າ ຈົນກວ່າເຮົາຈະເປັນຄົນໃຫຍ່ເຕັມສ່ວນ ຄືເຕັມເຖິງຂນາດຄວາມສົມບູນຂອງພຣະຄຣິດ.*"

ຂໍ້ພຣະຄັມພີທັງ 3 ຕອນຂ້າງເທິງນີ້ໄດ້ຊີ້ບອກຢ່າງດຽວກັນວ່າ ພຣະເຈົ້າບໍ່ປາຖນາໃຫ້ຄຣິສຕຽນເປັນເດັກທີ່ອ່ອນຝ່າຍຈິດວິນຍານຢູ່ຕລອດໄປ ພຣະອົງຢາກໃຫ້ທຸກຄົນເຕີບໃຫຍ່ຂຶ້ນເປັນຜູ້ໃຫຍ່ຝ່າຍຈິດວິນຍານໄປຈົນເຖິງຂັ້ນທີ່ວ່າ "*ໃຫຍ່ເຕັມສ່ວນ ຄືເຕັມເຖິງຂນາດຄວາມສົມບູນຂອງພຣະຄຣິດ.*" ຊຶ່ງມີຄວາມໝາຍວ່າໃຫ້ເຮົາເຕີບໃຫຍ່ຂຶ້ນໄປເລື້ອຍໆຈົນເຮົາຄ້າຍຄືກັບພຣະເຢຊູ (ບໍ່ແມ່ນເປັນພຣະເຢຊູ ເຮົາເປັນພຣະເຢຊູບໍ່ໄດ້) ດັ່ງນັ້ນເຮົາຄວນຕັ້ງໃຈທີ່ຈະເຕີບໃຫຍ່ເປັນຜູ້ໃຫຍ່ຝ່າຍຈິດວິນຍານຢ່າງຕໍ່ເນື່ອງກັນ.

ລັກສະນະຂອງເດັກອ່ອນຝ່າຍວິນຍານ ກັບຜູ້ໃຫຍ່ຝ່າຍວິນຍານ ມີຄວາມແຕກຕ່າງກັນດັ່ງນີ້...

**1. ເດັກອ່ອນຝ່າຍວິນຍານ ຈະມີຄວາມເຊື່ອທີ່ບໍ່ຫມັ້ນຄົງ ແຕ່ຜູ້ໃຫຍ່ຝ່າຍວິນຍານຈະມີຄວາມເຊື່ອທີ່ຫມັ້ນຄົງ** ຜູ້ໃຫຍ່ຝ່າຍວິນຍານຈະບໍ່ມີໃຈອ່ອນໄຫວ ເມື່ອຄົນທີ່ມີຄວາມເຊື່ອອື່ນຊັກຊວນຈູງໃຈລາວ ລາວຈະບໍ່ມີຄວາມສົງສັຍໃນຈິດໃຈຂອງຕົນເອງທີ່ຊັກຈູງລາວໃຫ້ອ່ວາຍໜີຈາກຄວາມເຊື່ອໃນພຣະເຢຊູຄຣິດ ລາວຈະມີຄວາມເຊື່ອທີ່ຫມັ້ນຄົງບໍ່ຫວັ່ນໄຫວເຖິງແມ່ນວ່າຈະຕົກຢູ່ໃນຄວາມຍາກລຳບາກ ຫລືໃນຍາມທີ່ລາວບໍ່ໄດ້ຮັບຄຳຕອບຈາກຄຳອ້ອນວອນອະທິຖານ ລາວຈະເປັນຄົນທີ່ເຊື່ອວາງໃຈໃນພຣະເຈົ້າໃນທຸກໆ ສະຖານະການ ( ເອເຟໂຊ 4:14 )

**2. ເດັກອ່ອນຝ່າຍວິນຍານ ຈະບໍ່ຮູ້ຫລັກຄຳສອນຂອງພຣະຄັມພີຢ່າງເລິກເຊິ່ງ ເຖິງແມ່ນຮູ້ກໍອາດຈະບໍ່ຖືກຕ້ອງ ແຕ່ຜູ້ໃຫຍ່ຝ່າຍວິນຍານຈະຮູ້ຫລັກຄຳສອນຂອງພຣະຄັມພີຢ່າງເລິກເຊິ່ງ, ຖືກຕ້ອງ**(ເຮັບເຣີ 5:12-14; 6:1-3) ຜູ້ໃຫຍ່ຝ່າຍວິນຍານຈະໃຊ້ຄວາມພຍາຍາມສຶກສາພຣະຄັມພີເພື່ອຈະໄດ້ຮູ້ແລະເຂົ້າໃຈພຣະຄັມພີຢ່າງຖືກຕ້ອງ ຊຶ່ງຈະເຮັດໃຫ້ລາວມີຫລັກຄວາມເຊື່ອແລະເຂົ້າໃຈເຣື່ອງຕ່າງໆ ຕາມຫລັກຄຳສອນພຣະຄັມພີ ບໍ່ຫລົງໄປຕາມຄວາມຄິດຫລື

ຫລັກຄຳສອນທີ່ບໍ່ຖືກຕ້ອງຕາມພຣະຄັມພີ.

**3. ເດັກອ່ອນຝ່າຍວິນຍານ ຈະບໍ່ມີຈຸດມຸ້ງຫມາຍໃຫ້ພຣະເຢຊູຄຣິດເປັນທີ່ນຶ່ງໃນຊີວິດຂອງລາວ ແຕ່ຜູ້ໃຫຽ່ຝ່າຍວິນຍານໄດ້ມອບໃຫ້ພຣະເຢຊູຄຣິດເປັນທີ່ນຶ່ງໃນຊີວິດ** ໃນພຣະທັມຟີລິບປອຍ 1:21 ຜູ້ຮັບໃຊ້ພຣະເຈົ້າທ່ານນຶ່ງຊື່ໂປໂລໄດ້ກ່າວວ່າ *"ເພາະວ່າຖ້າເຮົາມີຊີວິດພຣະຄຣິດເປັນຊີວິດນັ້ນ ຖ້າເຮົາຕາຍກໍເປັນປໂຍດແກ່ເຮົາ"* ແລະເພິ່ນຍັງໄດ້ກ່າວໄວ້ອີກວ່າ *"ແຕ່ເຮົາບໍ່ໄດ້ຖືວ່າຊີວິດຂອງເຮົາເປັນຂອງມີຄ່າແກ່ເຮົາຢ່າງໃດເພື່ອເຮົາຈະເຮັດຫນ້າທີ່ຂອງເຮົາ ແລະຈະໄດ້ປະຕິບັດງານທີ່ໄດ້ຮັບມອບຫມາຍຈາກອົງພຣະຜູ້ເປັນເຈົ້າໃຫ້ສຳເຣັດ ຄືທີ່ຈະເປັນພຍານຢ່າງຄົບຖ້ວນເຖິງເຣື່ອງຂ່າວປະເສີດກ່ຽວກັບພຣະຄຸນຂອງພຣະເຈົ້ານັ້ນ."* ( ກິຈການ 20:24 ) ນີ້ຄືຫລັກຄວາມຄິດໃນການດຳເນີນຊີວິດຂອງຄົນທີ່ເປັນຜູ້ໃຫຽ່ຝ່າຍວິນຍານ ລາວຈະຕັ້ງເປົ້າຫມາຍຊີວິດຂອງລາວໄວ້ວ່າຈະດຳເນີນຊີວິດເພື່ອໃຫ້ນ້ຳພຣະທັຍພຣະເຈົ້າສຳເຣັດໃນຊີວິດຂອງລາວ ນັ້ນຫມາຍເຖິງວ່າລາວຈະຕິດຕາມແລະເຊື່ອຟັງພຣະເຢຊູທຸກຢ່າງໂດຍທີ່ບໍ່ມີຂໍ້ແກ້ຕົວ (ມັດທາຍ 8:22 ) ຍອມເຊື່ອຟັງພຣະເຢຊູຫລາຍກວ່າການເຫັນແກ່ອາຊີບຂອງຕົນເອງ ( ມັດທາຍ 9:9 ) ຮັກພຣະເຢຊູຫລາຍກວ່າຄວາມສນຸກສົນເລີງ ຄວາມສະດວກສະບາຍ ( ລູກາ 8:14 ) ຮັກພຣະເຢຊູຫລາຍກວ່າຊັບສິ່ງຂອງທັງຫມົດທີ່ລາວມີຢູ່ (ມັດທາຍ 19:21; ລູກາ 8:14 ) ຮັກພຣະເຢຊູຫລາຍກວ່າຄອບຄົວຫລືຫລາຍກວ່າຊີວິດຂອງຕົນເອງ (ມັດທາຍ10:37-39 ; ລູກາ 9:23 )

ພຣະເຢຊູຊົງກ່າວວ່າ *"ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິດຕາມເຮົາມາ. ເພາະວ່າຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສັຽຊີວິດ ແຕ່ຜູ້ໃດຈະເສັຽຊີວິດຂອງຕົນເພາະເຫັນແກ່ເຮົາ ຜູ້ນັ້ນກໍຈະມີຊີວິດພົ້ນ. ເຫດວ່າຖ້າຜູ້ໃດຈະໄດ້ສິ່ງຂອງຫມົດທັງໂລກ ແຕ່ຈະເຮັດໃຫ້ຕົນເອງຈິບຫາຍຫລືເສັຽໄປ ຜູ້ນັ້ນຈະໄດ້ປໂຍດອັນໃດ."* (ລູກາ 9:23-25 )

ເມື່ອທ່ານຍອມໃຫ້ພຣະເຢຊູເປັນທີ່ນຶ່ງໃນຊີວິດເຫນືອສິ່ງອື່ນໃດນັ້ນ ພຣະອົງຊົງກ່າວໄວ້ວ່ານັ້ນແມ່ນສິ່ງທີ່ມີຄຸນຄ່າອັນປະເສີດ ດັ່ງທີ່ພຣະທັມມັດທາຍ 19:29 ໄດ້ກ່າວໄວ້ວ່າ *"ຜູ້ໃດສລະເຮືອນ, ຫລືອ້າຍເອື້ອຍນ້ອງ, ຫລືບິດາມານດາ, ຫລືລູກ, ຫລືໄຮ່ນາ ເພາະເຫັນແກ່ນາມຂອງເຮົາ ຜູ້ນັ້ນຈະໄດ້ຮັບຜົນຕອບແທນຮ້ອຍທໍ່ ແລະຈະໄດ້ຮັບມໍຣະດົກຄືຊີວິດອັນຕລອດໄປເປັນນິດ."* ໃນພຣະທັມຟີລິບປອຍ 1:21 ກໍໄດ້ກ່າວໄວ້ເຫມືອນກັນວ່າ ຄົນທີ່ດຳເນີນຊີວິດເພື່ອອົງພຣະເຢຊູຄຣິດ ເມື່ອລາວຕາຍໄປກໍຈະໄດ້ກຳໄລ.

**4. ເດັກອ່ອນຝ່າຍວິນຍານມີນິສັຍແບບມະນຸດທັມມະດາຫລືຍັງເຮັດບາບເປັນນິສັຍຢູ່ ແຕ່ຜູ້ໃຫຽ່ຝ່າຍວິນຍານຈະມີລັກສະນະນິສັຍແບບຄຣິສຕຽນ, ມີນິສັຍແບບມະນຸດທັມມະດາຫນ້ອຍຫລືອາດຈະບໍ່ມີເລີຍ** ພຣະທັມ 1 ໂກຣິນໂທ 3:1-3 ກ່າວໄວ້ວ່າ *"ພີ່ນ້ອງທັງຫລາຍເອີຍ, ຝ່າຍເຮົາຈະເວົ້າກັບເຈົ້າທັງຫລາຍເຫມືອນເວົ້າກັບຜູ້ທີ່ຢູ່ຝ່າຍພຣະວິນຍານແລ້ວບໍ່ໄດ້ ແຕ່ຕ້ອງເວົ້າກັບເຈົ້າເຫມືອນເວົ້າກັບຄົນທີ່ຢູ່ຝ່າຍມະນຸດທັມມະດາ ເຫມືອນກັບພວກເຈົ້າເປັນເດັກອ່ອນໃນພຣະຄຣິດ. ເຮົາໄດ້ລ້ຽງພວກເຈົ້າດ້ວຍນ້ຳນົມບໍ່ໃຊ່ດ້ວຍອາຫານແຂງ ເຫດວ່າເມື່ອກ່ອນນັ້ນເຈົ້າຍັງບໍ່ສາມາດຮັບໄດ້ ແລະເຖິງດຽວນີ້ກໍຍັງບໍ່ສາມາດ. ເພາະວ່າເຈົ້າທັງຫລາຍຍັງຢູ່ຝ່າຍມະນຸດທັມມະດາ ດ້ວຍວ່າເມື່ອພວກເຈົ້າຍັງອິດສາແລະຜິດຖຽງກັນ ເຈົ້າທັງຫລາຍບໍ່ໄດ້ຢູ່ຝ່າຍມະນຸດທັມມະດາແລະບໍ່ໄດ້ດຳເນີນຊີວິດຕາມມະນຸດທັມມະດາດອກຫຼື"*

**5. ເດັກອ່ອນຝ່າຍວິນຍານ ຈະບໍ່ພຍາຍາມນຳວິນຍານແລະລ້ຽງດູຈິດວິນຍານຂອງຄົນອື່ນ ແຕ່ຜູ້ໃຫຽ່ຝ່າຍວິນຍານຈະພຍາຍາມນຳວິນຍານແລະລ້ຽງດູຈິດວິນຍານຂອງຄົນອື່ນ** ພຣະທັມ 2 ຕີໂມທຽວ 2:2 ກ່າວວ່າ *"ຈົ່ງມອບຄຳສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ຫນ້າພຍານຫລາຍຄົນ ໄວ້ກັບຄົນຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ."*

ພຣະທັມລູກາ 6:40 ກ່າວໄວ້ວ່າ *"...ແຕ່ສິດທຸກຄົນທີ່ຮັບການຝຶກສອນຄົບແລ້ວ ກໍຈະເປັນເຫມືອນຄຣູຂອງຕົນ."* ຂໍ້ພຣະຄັມພີເຫລົ່ານີ້ໄດ້ຊີ້ບອກວ່າ ຄົນທີ່ເປັນຜູ້ໃຫຽ່ຝ່າຍວິນຍານຈະບໍ່ພຽງແຕ່ຮັບຄຳສອນເທົ່ານັ້ນ ແຕ່ລາວຈະຮຽນຮູ້ຈົນສາມາດສອນຜູ້ອື່ນຕໍ່ໄປໄດ້ ສ່ວນຄົນທີ່ຍັງເປັນເດັກອ່ອນຝ່າຍວິນຍານເຖິງແມ່ນວ່າຈະຮຽນຮູ້ແລ້ວກໍຕາມ

ລາວບໍ່ສາມາດຈະສອນໃຜໄດ້ເລີຍ ແລະຍັງບໍ່ສາມາດຮຽນຮູ້ແລະພັດທະນາຕົນເອງໃຫ້ສູງຂຶ້ນໄດ້ອີກນຳ, ລາວບໍ່ຮັບຄຳສອນຫລືເປັນຄົນທີ່ສອນບໍ່ໄດ້ (ເຮັບເຣີ 5:12-14)

## ວິທີຊ່ອຍຕົນເອງໃຫ້ເຕີບໃຫຍ່ຂຶ້ນເປັນຜູ້ໃຫຍ່ຝ່າຍວິນຍານ:

ທ່ານຈະສາມາດເຕີບໃຫຍ່ຝ່າຍວິນຍານໄດ້ດ້ວຍການຮ່ວມມືທັງສອງຝ່າຍຄືຕົວທ່ານເອງແລະພຣະເຈົ້າ. ພຣະເຈົ້າຊົງເປັນຜູ້ກະທຳໃຫ້ຈິດວິນຍານຂອງທ່ານເຕີບໃຫຍ່ ( 1 ໂກຣິນໂທ 3:6 ) ພຣະວິນຍານບໍຣິສຸດຂອງພຣະເຈົ້າທີ່ຢູ່ໃນເຮົາຈະຊົງທຳງານໃນຊີວິດຂອງເຮົາ. ແຕ່ທ່ານເອງຕ້ອງມີຄວາມຮັບຜິດຊອບໃນການຮ່ວມມືກັບພຣະເຈົ້າ ເພື່ອພຣະອົງຈະຊົງກະທຳໃຫ້ຈິດວິນຍານຂອງທ່ານເຕີບໃຫຍ່ໄວຂຶ້ນ ທ່ານສາມາດຮ່ວມມືກັບພຣະອົງໄດ້ດັ່ງຕໍ່ໄປນີ້...

1. **ຍອມຈຳນົນຕໍ່ພຣະເຈົ້າຢ່າງສິ້ນເຊີງ** ອະທິຖານຕໍ່ພຣະເຈົ້າດ້ວຍຄວາມນຈິງໃຈ ຍອມສາຣະພາບບາບຕໍ່ພຣະອົງທັງຫມົດບໍ່ອຳໄວ້ ແລະຍອມໃຫ້ພຣະອົງເປັນເຈົ້າຊີວິດຂອງທ່ານຢ່າງແທ້ຈິງ. ທູນຕໍ່ພຣະອົງວ່າທ່ານຍອມເຊື່ອຟັງພຣະອົງຢ່າງສິ້ນເຊີງ ການຍອມຈຳນົນຕໍ່ພຣະເຈົ້າຢ່າງສິ້ນເຊີງນີ້ຈະເຮັດໃຫ້ພຣະເຈົ້າຊົງກະທຳກິຈກັມໃນຊີວິດຂອງທ່ານໄດ້ຫລາຍຂຶ້ນ.

2. **ຕິດສນິດກັບພຣະເຈົ້າຕລອດເວລາ** ມີຊີວິດທີ່ຕິດສນິດກັບພຣະເຈົ້າດ້ວຍການຫມັ່ນສຶກສາພຣະຄັມພີ ແລະອະທິຖານສ່ວນຕົວເປັນປະຈຳທຸກວັນ. ຮ່ວມນະມັສການກັບພີ່ນ້ອງທີ່ຄຣິສຕະຈັກຢ່າງສມ່ຳສເມີ. ການຕິດສນິດກັບພຣະເຈົ້າຈະເຮັດໃຫ້ຊີວິດຂອງທ່ານເກີດຜົນໃນການເຕີບໃຫຍ່ຂຶ້ນເປັນຜູ້ໃຫຍ່ຝ່າຍຈິດວິນຍານ.

3. **ຜູກພັນຊີວິດກັບຄຣິສຕະຈັກ** ທ່ານສາມາດຜູກພັນຊີວິດກັບຄຣິສຕະຈັກໄດ້ດ້ວຍການໄປຮ່ວມນະມັສການຢ່າງສມ່ຳສເມີ. ການຮ່ວມສາມັກຄີທັມກັບພີ່ນ້ອງຄຣິສຕຽນຢ່າງໃກ້ຊິດສມ່ຳສເມີຈະເຮັດໃຫ້ທ່ານໄດ້ຮັບການເສີມສ້າງຊີວິດຝ່າຍວິນຍານຢ່າງຕໍ່ເນື່ອງ ແລະຈະເຮັດໃຫ້ທ່ານເຕີບໃຫຍ່ຂຶ້ນເປັນຜູ້ໃຫຍ່ຝ່າຍວິນຍານ.

4. **ພັດທະນາຄວາມເຊື່ອ** ບາງຄັ້ງມີຄວາມທຸກລຳບາກເກີດຂຶ້ນໃນຊີວິດແລະມີຄວາມສົງສັຍໃນພຣະເຈົ້າ ທີ່ອາດຈະເຮັດໃຫ້ຄວາມເຊື່ອຂອງເຮົາລົດຫນ້ອຍຖອຍລົງ. ເມື່ອຄວາມເຊື່ອລົດຫນ້ອຍຖອຍລົງ ຄວາມເຕີບໃຫຍ່ຝ່າຍຈິດວິນຍານກໍຖອຍລົງນຳ. ຂໍໃຫ້ທ່ານຮັກສາຄວາມເຊື່ອແລະພັດທະນາຄວາມເຊື່ອຂອງທ່ານຢູ່ເປັນປະຈຳ. ມີວິທີນຶ່ງທີ່ມີປະສິດທິພາບໃນການພັດທະນາຄວາມເຊື່ອໄດ້ແກ່ "**ການມີປະສົບການສ່ວນຕົວກັບພຣະເຈົ້າ**" ການມີປະສົບການສ່ວນຕົວກັບພຣະເຈົ້າຈະຊ່ອຍສ້າງຄວາມເຊື່ອຂອງທ່ານໃຫ້ເຂັ້ມແຂງຫລາຍຂຶ້ນ. ປະສົບການກັບພຣະເຈົ້າຈະເກີດຂຶ້ນໄດ້ ເມື່ອທ່ານພຍາຍາມສັງເກດເບິ່ງການທຳງານຂອງພຣະເຈົ້າໃນຊີວິດຂອງທ່ານໃນທຸກໆ ກໍຣະນີ ຕັ້ງແຕ່ເຣື່ອງນ້ອຍທີ່ສຸດຂຶ້ນໄປຫາເຣື່ອງໃຫຍ່ທີ່ສຸດ ເຊັ່ນສັງເກດເບິ່ງວ່າພຣະເຈົ້າຊົງຕອບຄຳອະທິຖານຂອງທ່ານຢ່າງໃດແດ່ ພຣະອົງຊົງປ່ຽນແປງຊີວິດແລະຈິດໃຈຂອງທ່ານຢ່າງໃດ ຊົງຊ່ອຍເຫລືອແລະແກ້ບັນຫາຊີວິດຂອງທ່ານຢ່າງໃດ ຊົງອວຍພອນທ່ານຢ່າງໃດ ແລະຊົງໃຫ້ປະສົບການແປກໆ ຫລືອັສຈັນ ແກ່ທ່ານຢ່າງໃດ.

ບໍ່ພຽງແຕ່ສັງເກດເບິ່ງສິ່ງທີ່ພຣະເຈົ້າຊົງກະທຳໃນຊີວິດຂອງທ່ານເທົ່ານັ້ນ ແຕ່ໃຫ້ສັງເກດຫລືຟັງຄຳບອກເລົ່າຂອງພີ່ນ້ອງຄຣິສຕຽນອື່ນໆ ນຳວ່າເຂົາເຈົ້າມີປະສົບການກັບພຣະເຈົ້າຢ່າງໃດແດ່. ປະສົບການຂອງເຂົາເຈົ້າສາມາດເສີມສ້າງຄວາມເຊື່ອແລະຄວາມເຂົ້າໃຈຂອງເຮົາໄດ້ເຫມືອນກັນ.

5. **ບົວລະບັດຮັບໃຊ້ພຣະເຈົ້າ** ທ່ານສາມາດຮັບໃຊ້ພຣະເຈົ້າໄດ້ດ້ວຍການພຍາຍາມນຳຄົນອື່ນມາຫາອົງພຣະເຢຊູຄຣິດ, ຊ່ອຍໃນການລ້ຽງດູຈິດວິນຍານຂອງຄົນອື່ນແລະຮັບໃຊ້ພຣະເຈົ້າໃນດ້ານອື່ນໆ ນຳ. ການຮັບໃຊ້ພຣະເຈົ້າ

ຈະເຮັດໃຫ້ຊີວິດຂອງທ່ານເຕີບໃຫຍ່ຂື້ນຝ່າຍຈິດວິນຍານ.

**<u>ການຕັດສິນໃຈ</u>**: - ທ່ານຕັ້ງໃຈຈະເຕີບໃຫຍ່ເປັນຜູ້ໃຫຍ່ຝ່າຍຈິດວິນຍານຫລືບໍ່.... ( )ຕັ້ງໃຈ ( )ບໍ່ທັນຕັ້ງໃຈເທື່ອ

- ທ່ານມີພາຣະໃຈທີ່ຈະຮັບໃຊ້ພຣະເຈົ້າໃນການນຳວິນຍານແລະຊ່ອຍລ້ຽງດູຈິດວິນຍານຂອງຄົນອື່ນຫລືບໍ່? ( )ມີພາຣະໃຈແລະຈະຊ່ອຍ ( )ບໍ່ຢາກມີພາຣະໃຈອັນໃດ

**<u>ທ່ອງຈຳຂໍ້ພຣະຄັມພີ</u>**: ພຣະທັມ ລູການ 9:23 "*ແລ້ວພຣະອົງຊົງກ່າວແກ່ເຂົາວ່າ, ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເອງເສັຽແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິດຕາມເຮົາມາ*"

# ບົດທີ 8
## ຄຳຖາມທີ່ຄຣິສຕຽນໃຫມ່ມັກຈະພົບຢູ່ສເມີ ແລະວິທີຕອບ

ການເປັນພຍານໃນການດຳເນີນຊີວິດຄຣິສຕຽນ ທ່ານອາດຈະພົບກັບຄຳຖາມທີ່ຄົນບໍ່ເປັນຄຣິສຕຽນມັກຈະຖາມຫລືໂຕ້ຖຽງຢູ່ສເມີ ຫລືບາງຄັ້ງກໍເປັນຄຳຖາມທີ່ເກີດປຸບປັບຂຶ້ນຈາກພາຍໃນຈິດໃຈຂອງເຮົາເອງ. ຕໍ່ໄປນີ້ຈະເປັນຕົວຢ່າງຂອງຄຳຖາມທີ່ມັກໄດ້ຍິນເລື້ອຍໆ ແລະການຕອບຄຳຖາມແບບງ່າຍໆ...

### 1. ຮູ້ໄດ້ຢ່າງໃດວ່າພຣະເຈົ້າມີຈິງ ເຈົ້າເຄີຍເຫັນຊັ້ນບໍ?

**ຄຳຕອບ** ສິ່ງທີ່ຕາເຮົາເບິ່ງບໍ່ເຫັນບໍ່ໄດ້ໝາຍຄວາມວ່າສິ່ງນັ້ນບໍ່ມີຈິງສເມີໄປ ເຮົາເບິ່ງບໍ່ເຫັນລົມ ແຕ່ເຮົາຮູ້ວ່າມີລົມພັດຜິວໜັງຂອງເຮົາ, ເຮົາເຫັນໃບໄມ້ເໜັງຕີງເຮົາກໍຮູ້ວ່າມີລົມ. ອ້ອມຮອບຕົວເຮົາມີສັນຍານວິທຍຸ, ສັນຍານໂທຣະທັດແລະສັນຍານການສື່ສານອື່ນໆ ແຕ່ເຮົາເບິ່ງບໍ່ເຫັນສັນຍານນັ້ນແລະບໍ່ຮູ້ສຶກ ເຮົາຕ້ອງມີເຄື່ອງຮັບວິທຍຸ, ໂທຣະທັດແລະສື່ສານຈຶ່ງຈະສາມາດຮັບສັນຍານເຫລົ່ານັ້ນໄດ້. ໃນທຳນອງດຽວກັນ ພຣະເຈົ້າບໍ່ແມ່ນວັດຖຸສິ່ງຂອງ ຫລືມີເນື້ອກາຍເຫມືອນກັບມະນຸດ ແຕ່ພຣະອົງຊົງເປັນ(ພຣະ)ວິນຍານ ເຮົາຈຶ່ງບໍ່ສາມາດເບິ່ງເຫັນພຣະອົງຫລືສັມຜັດພຣະອົງໄດ້ໂດຍອາສັຍການສັມຜັດທັງ 5 ຄື ຮູບ, ຣົດ, ກິ່ນ, ສຽງ, ຈັບຕ້ອງ. ແຕ່ເຮົາສາມາດແນ່ໃຈໄດ້ວ່າພຣະອົງມີຈິງ ໂດຍອາສັຍຫລັກຖານຫລາຍປະການດັ່ງຕໍ່ໄປນີ້...

1) **ຫລັກຖານຈາກຄວາມອັສຈັນຂອງທັມມະຊາດ** ພຣະທັມໂຣມ 1:19-20 ກ່າວວ່າ *"ເຫດວ່າທີ່ຈະຮູ້ຈັກພຣະເຈົ້າໄດ້ເທົ່າໃດນັ້ນກໍໄດ້ປາກົດແຈ້ງຄັກໃນໃຈເຂົາ ດ້ວຍວ່າພຣະເຈົ້າໄດ້ຊົງໂຜດສະແດງໃຫ້ເຂົາຮູ້ແລ້ວ. ຕັ້ງແຕ່ແຣກສ້າງໂລກມາສະພາບທີ່ບໍ່ປາກົດຂອງພຣະເຈົ້າ ຄືຣິດທານຸພາບອັນຖາວອນແລະຄວາມເປັນພຣະຂອງພຣະອົງກໍໄດ້ຊົງປາກົດແຈ້ງໃນສັພສິ່ງທີ່ພຣະອົງໄດ້ຊົງສ້າງ ສັນນັ້ນເຂົາທັງຫລາຍຈຶ່ງບໍ່ມີຂໍ້ແກ້ຕົວໄດ້."* ພຣະຄັມພີຂໍ້ນີ້ໄດ້ຊີ້ໃຫ້ເຫັນວ່າທັມມະຊາດເປັນສິ່ງທີ່ຊ່ວຍໃຫ້ມະນຸດແຕ່ສມັຍບູຮານຈົນຮອດປັດຈຸບັນນີ້ຮູ້ສຶກຢູ່ໃນໃຈວ່າມີພຣະເຈົ້າ (ຫລືຜູ້ທີ່ບໍ່ຮູ້ຈັກພຣະເຈົ້າເອີ້ນວ່າ ສິ່ງສັດສິດ) ຖ້າເຮົາຫາກສັງເກດເບິ່ງທັມມະຊາດທັງໃນໂລກນີ້ແລະຈັກກະວານ ກໍຈະພົບກັບຄວາມມີລະບຽບ ສອດຄ່ອງ ກົມກຽວກັນຢ່າງໜ້າອັສຈັນ ຈົນເຮັດໃຫ້ນັກວິທຍາສາດຊັ້ນນຳຂອງໂລກຫລາຍທ່ານເກີດຄວາມງຶງງວຍ ມີຂໍ້ຂ້ອງໃຈໃນສິ່ງຕ່າງໆ ວ່າໃນທັມມະຊາດທີ່ມີຄວາມສອດຄ່ອງ ເປັນລະບຽບ ແລະກົມກຽວກັນຢ່າງນີ້ ຈະເກີດຂຶ້ນມາໂດຍບັງເອີນໄດ້ຢ່າງໃດ ມັນຕ້ອງມີຜູ້ທີ່ອອກແບບແລະສ້າງໄວ້ຢ່າງແນ່ນອນ.

ຍົກຕົວຢ່າງເຊັ່ນ ນັກວິທຍາສາດທີ່ມີຊື່ສຽງທ່ານນຶ່ງຊື່ ເຊີ ເຟຣດ ຮອຍລ໌ ໄດ້ກ່າວວ່າ ໂອກາດທີ່ທາດໂປຣຕີນໃນຮ່າງກາຍຂອງຄົນເຮົາຈຳນວນ 200,000 ໂປຣຕີນ ຈະມາສັມພັນກັນຈົນເກີດເປັນໂມເລກູນ ທີ່ມີຊີວິດໂດຍບັງເອີນນັ້ນ ອາດຈະມີຢູ່ພຽງນຶ່ງໃນຫ້າສິບລ້ານເທົ່ານັ້ນ ເປັນເຣື່ອງທີ່ບັງເອີນທີ່ເຫລືອເຊື່ອທີ່ໂປຣຕີນເຫລົ່ານັ້ນຈະມາສັມພັນກັນເອງແລ້ວກໍ່ໃຫ້ເກີດສິ່ງທີ່ມີຊີວິດຂຶ້ນໃນໂລກ. ນັກວິທຍາສາດບາງທ່ານກ່າວວ່າເປັນໄປໄດ້ຍາກເທົ່າໆ ກັນກັບລົມພາຍຸຈະພັດກອງເສດເຫລັກແລ້ວເກີດເປັນເຮືອບິນຂຶ້ນມາເອງ ຫລືຍາກເທົ່າໆ ກັນກັບທີ່ຈະສັ່ນລູກໝາກອີ່ເຕົາໃຫ້ໄດ້ຫົກ (ດ້ານ 6 ຫງາຍຂຶ້ນ) ຕິດຕໍ່ກັນໄດ້ເຖິງພັນເທື່ອ. ສິ່ງສຳຄັນນັ້ນແມ່ນ ເຖິງແມ່ນວ່າທາດໂປຣຕີນເຫລົ່ານີ້ຈະກໍ່ຕົວຂຶ້ນມາເປັນແຊລວ໌ໄດ້ ແຕ່ເຫັນວ່າບໍ່ມີທາງເປັນໄປໄດ້ທີ່ມັນຈະພັດທະນາຕໍ່ໄປຈົນເປັນສິ່ງທີ່ມີຊີວິດອັນສລັບຊັບຊ້ອນດັ່ງທີ່ເຮົາເຫັນຢູ່ໃນປັດຈະບັນນີ້ໄດ້.

ຄວາມອັສຈັນຂອງການກໍ່ຕົວຂອງເດັກອ່ອນໃນທ້ອງແມ່ ເລີ້ມຈາກໄຂ່ທີ່ປະຕິສົນທິແລ້ວແລະພັດທະນາໄປເລື້ອຍໆ ສູ່ສະພາບການເປັນຮ່າງກາຍຄົນອັນສົມບູນ. ການທີ່ແຊລວ໌ໄດ້ຖືກຈັດຢ່າງເປັນຣະບຽບໃຫ້ມີອະວັຍຍະວະຮູບຮ່າງຢ່າງເຫມາະສົມ ຄວາມອັສຈັນຂອງພັນທຸກັມຂອງມະນຸດທີ່ໄດ້ຮັບໂຄຣໂມໂຊມ 23 ຢ່າງມາຈາກພໍ່ແລະແມ່ ຄວາມອັສຈັນຂອງລາຍນິ້ວມືຂອງແຕ່ລະຄົນທົ່ວທັງໂລກທີ່ບໍ່ຄືກັນ ແລະຄວາມອັສຈັນອື່ນໆ ອີກ.

ຖ້າຫາກທ່ານເດີນທາງເຂົ້າໄປໃນປ່າ ໄດ້ເຫັນໂມງໜ່ວຍນຶ່ງຢູ່ເທິງພື້ນດິນ ທ່ານຈະບໍ່ຄິດວ່າໂມງໜ່ວຍນັ້ນເກີດຂຶ້ນມາໂດຍບັງເອີນຕາມທັມມະຊາດ. ປາກົດການທາງທັມມະຊາດເຫລົ່ານີ້ເປັນສິ່ງທີ່ອັສຈັນເກີນກວ່າທີ່ຈະເກີດຂຶ້ນມາໂດຍບັງເອີນໄດ້. ຈາກຂໍ້ສັງເກດເຫລົ່ານີ້ໄດ້ຊີ້ໃຫ້ມະນຸດເຮົາເຫັນວ່າໂລກຈັກກະວານຕ້ອງມີຜູ້ສ້າງຂຶ້ນມາ ແລະບຸກຄົນຜູ້ສ້າງນັ້ນຈະຕ້ອງເປັນຜູ້ທີ່ຍິ່ງໃຫຍ່ສູງສຸດເໜືອສັພທຸກສິ່ງ ຊຶ່ງໄດ້ຊີ້ບອກວ່າພຣະເຈົ້າມີຈິງນັ້ນເອງ.

2) **ຫລັກຖານຈາກຈິດສຳນຶກຂອງມະນຸດ** ມະນຸດທຸກຄົນລ້ວນແລ້ວແຕ່ສແວງຫາສິ່ງສັກສິດ ຫລືບ່ອນເພິ່ງພາທາງຈິດໃຈ ເຮົາພົບຄວາມຈິງວ່າມະນຸດທົ່ວໂລກທຸກຍຸກທຸກສມັຍຄຸ້ນເຄີຍກັບການສແວງຫາສິ່ງສັກສິດຫລືບ່ອນຍຶດຖືທາງຈິດໃຈ ມະນຸດສ່ວນຫລາຍໃນໂລກນັບຖືສາສນາ ແລະສາສນາທີ່ປະຊາຊົນຂອງໂລກນັບຖືຢູ່ນັ້ນເປັນສາສນາທີ່ເຊື່ອວ່າພຣະເຈົ້າມີຈິງ ດັ່ງນັ້ນ ຈຶ່ງສະແດງໃຫ້ເຫັນເຖິງສ່ວນເລິກພາຍໃນຈິດໃຈຂອງມະນຸດທີ່ຫິວກະຫາຍພຣະເຈົ້າຊຶ່ງກຳລັງບອກເຮົາວ່າ ພຣະເຈົ້າມີຈິງ.

3) **ຫລັກຖານຈາກມະໂນທັມຂອງມະນຸດ** ຫລືຈິດສຳນຶກເຣື່ອງຄວາມດີຄວາມຊົ່ວຂອງມະນຸດ ຊຶ່ງໃນພຣະທັມໂຣມ 2:14-15 ໄດ້ບອກພວກເຮົາວ່າ ມະນຸດທົ່ວໂລກໃນທຸກຍຸກທຸກສມັຍລ້ວນແຕ່ມີມະໂນທັມຫລືຈິດສຳນຶກໃນເຣື່ອງຄວາມດີຄວາມຊົ່ວ ເຖິງແມ່ນວ່າມາຕະຖານອາດຈະແຕກຕ່າງກັນໄປແຕ່ກໍເຫັນວ່າມີຄວາມໃກ້ຄຽງກັນຫລາຍສະແດງໃຫ້ເຫັນວ່າມີບາງສິ່ງບາງຢ່າງທີ່ເປັນກົດເກນທີ່ມະນຸດບໍ່ໄດ້ຕັ້ງສ້າງຂຶ້ນເອງ ແຕ່ເປັນກົດເກນທີ່ຖືກປ້ອນໃສ່ໄວ້ໃນຕົວມະນຸດ ສິ່ງນີ້ໄດ້ຊີ້ໃຫ້ເຫັນວ່າມີຜູ້ທີ່ປ້ອນມະໂນທັມໃສ່ໄວ້ໃນໃຈຂອງມະນຸດຕັ້ງແຕ່ດຶກດຳບັນ ຊຶ່ງເປັນການບອກພວກເຮົາວ່າພຣະເຈົ້າມີຈິງ.

4) **ຫລັກຖານຈາກການໃຊ້ເຫດຜົນ** ໄດ້ມີການໃຊ້ເຫດຜົນແບບງ່າຍໆ ວ່າ ຖ້າມີສິ່ງທີ່ມີຊີວິດກຳເນີດມາຈາກສິ່ງທີ່ມີຊີວິດສືບຕໍ່ກັນມາ ມີຄຳຖາມວ່າສິ່ງທີ່ມີຊີວິດແຕ່ຕົ້ນຕໍແຕ່ທຳອິດນັ້ນມາຈາກໃສ? ເປັນໄປໄດ້ບໍ່ວ່າມາຈາກພຣະເຈົ້າ. ແລະຍັງມີການໃຊ້ເຫດຜົນທີ່ວ່າ ການເຄື່ອນໄຫວຂອງສິ່ງໃດກໍຕາມໃນຈັກກະວານນີ້ລ້ວນແລ້ວແຕ່ໄດ້ຮັບແຮງກະທົບ ຊຸກຍູ້ຈາກສິ່ງອື່ນສືບຕໍ່ກັນມາ ມີຄຳຖາມວ່າສິ່ງທີ່ເຄື່ອນໄຫວທຳອິດຫລືຕົ້ນກຳເນີດຂອງແຮງຊຸກຍູ້ນັ້ນມາຈາກໃສ? ເປັນໄປໄດ້ບໍ່ວ່າມາຈາກພຣະເຈົ້າ ເຫດແລະຜົນດັ່ງກ່າວນີ້ມີຢູ່ຢ່າງຫລວງຫລາຍ ລ້ວນແລ້ວແຕ່ເປັນສິ່ງຊີ້ໃຫ້ເຮົາເຫັນວ່າພຣະເຈົ້າມີຈິງ.

5) **ຫລັກຖານຈາກພຣະຄັມພີ** ເຫດການຕ່າງໆ ທີ່ໄດ້ບັນທຶກໄວ້ໃນພຣະຄັມພີໄດ້ຮັບການພິສູດວ່າເປັນເຣື່ອງຈິງ ມີຄວາມຖືກຕ້ອງໃນດ້ານປະຫວັດສາດ ແລະບູຮານຄະດີ. ຄຳທຳນວາຍຫລາຍເຣື່ອງຫລາຍຕອນໃນພຣະຄັມພີໄດ້ພິສູດໃຫ້ເຫັນວ່າເມື່ອເວລາຜ່ານພົ້ນໄປແລ້ວ ຄຳທຳນວາຍເຫລົ່ານັ້ນເປັນຈິງຖືກຕ້ອງທຸກປະການ. ເຫດການເຣື່ອງການສະແດງການອັສຈັນທີ່ອົງພຣະເຢຊູໄດ້ກະທຳໄວ້ຢ່າງຫລວງຫລາຍໃນພຣະຄັມພີເປັນທີ່ຍອມຮັບຂອງນັກປະຫວັດສາດໃນຍຸກສມັຍນັ້ນ ແລະບໍ່ໄດ້ພົບວ່າມີການຄັດຄ້ານໃດໆທີ່ກ່າວວ່າການອັສຈັນທີ່ອົງພຣະເຢຊູໄດ້ກະທຳບໍ່ເປັນຄວາມຈິງ ດ້ວຍເຫດນີ້ ພຣະຄຳຂອງພຣະເຈົ້າໃນພຣະຄັມພີໄດ້ຊີ້ໃຫ້ເຮົາເຫັນວ່າ ພຣະເຈົ້າມີຈິງ.

6) **ຫລັກຖານຈາກປະສົບການສ່ວນຕົວກັບພຣະເຈົ້າ** ພຣະເຈົ້າໄດ້ສັນຍາໄວ້ຫລາຍປະການໃນພຣະຄັມພີວ່າພຣະອົງໄດ້ຊົງກະທຳສິ່ງໃດແດ່ແກ່ຜູ້ທີ່ເຊື່ອວາງໃຈໃນພຣະອົງ ຊຶ່ງເຫັນວ່າເປັນຈິງໃນປະສົບການຊີວິດຂອງຄຣິສຕຽນທຸກຄົນ. ຄຣິສຕຽນຈະມີປະສົບການທີ່ພາຍໃນຈິດໃຈສັມຜັດກັບສັນຕິສຸກທີ່ມາຈາກພຣະເຈົ້າ. ຊີວິດທີ່ເຄີຍຕິດຢູ່ກັບນິສັຍທີ່ບໍ່ດີໄດ້ຮັບການປ່ຽນແປງໃໝ່ມາສູ່ທາງທີ່ດີຂຶ້ນ. ເມື່ອອະທິຖານກໍໄດ້ຮັບຄຳຕອບຈາກພຣະເຈົ້າເປັນຕົ້ນວ່າບາງຄົນມີປະສົບການພິເສດ ເຊັ່ນໄດ້ດີພະຍາດຫລັງຈາກທີ່ໄດ້ອະທິຖານຕໍ່ພຣະເຈົ້າ ໄດ້ຍິນພຣະສຸຣະສຽງຈາກພຣະເຈົ້າ ໄດ້ເຫັນນິມິດຈາກພຣະອົງ ສິ່ງເຫລົ່ານີ້ຊີ້ໃຫ້ເຫັນວ່າພຣະເຈົ້າມີຈິງ.

## ໒. ຮູ້ໄດ້ຢ່າງໃດວ່າພຣະຄັມພີມາຈາກພຣະເຈົ້າ?

**ຄຳຕອບ** ພຣະຄັມພີໄດ້ຮັບການພິສູດວ່າມີຄວາມຖືກຕ້ອງໃນດ້ານປະຫວັດສາດແລະບູຮານຄະດີ. ຄຳທຳນວາຍທີ່ມີຢ່າງຫລວງຫລາຍໃນພຣະຄັມພີໄດ້ພິສູດໃຫ້ເຫັນວ່າ ເມື່ອເວລາຜ່ານໄປຄຳທຳນວາຍເຫລົ່ານັ້ນໄດ້ເປັນຈິງທຸກປະການ. ( ໒ ຕີໂມທຽວ 3:16 )

## 3. ນະຮົກສວັນມີຈິງຫລື?

**ຄຳຕອບ** ເຮົາບໍ່ມີທາງຫາຫລັກຖານທີ່ແນ່ຊັດມາພິສູດເຣື່ອງນະຮົກສວັນໄດ້ ແຕ່ໃນທາງການແພດໄດ້ບັນທຶກໄວ້ຢ່າງຫລວງຫລາຍ ຈາກການສັມພາດກັບຄົນປ່ວຍທີ່ໄດ້ຮັບການຊ່ວຍເຫລືອໃຫ້ຫົວໃຈເຕັ້ນກັບຄືນມາອີກຫລັງຈາກທີ່ຫົວໃຈໄດ້ຢຸດເຕັ້ນໄປຊ່ວງໄລຍະນຶ່ງ ຜູ້ປ່ວຍຈຳນວນຫລາຍເຫລົ່ານີ້ໄດ້ຢືນຢັນວ່າຊີວິດຫລັງຈາກຄວາມຕາຍມີຈິງວິນຍານໄດ້ອອກຈາກຮ່າງກາຍໄປແທ້ຈິງ ແລ້ວໄດ້ກັບເຂົ້າມາສູ່ຮ່າງກາຍຂອງຕົນອີກໃຫມ່.

ຫລາຍໄປກວ່ານັ້ນ ເຖິງແມ່ນວ່າເຮົາມີຫລັກຖານພິສູດຢ່າງແນ່ຊັດໃນເວລານີ້ວ່າສວັນນະຮົກມີຈິງ ແຕ່ເຮົາຍັງບໍ່ໄດ້ເຊື່ອໃນພຣະເຢຊູຄຣິດ ເຖິງແມ່ນເຮົາຮູ້ຄວາມຈິງໃນວັນທີ່ເຮົາຕາຍໄປແລ້ວວ່າມີນະຮົກມີສວັນກໍບໍ່ມີປໂຍດອັນໃດ ເພາະວ່າເຮົາຕ້ອງຕົກນະຮົກຢ່າງແນ່ນອນ. ເຮົາຄວນເຊື່ອອົງພຣະເຢຊູໄວ້ກ່ອນຈະດີກວ່າ ເມື່ອເຮົາຕາຍໄປແລ້ວຖ້າວ່າສວັນນະຮົກມີຈິງເຮົາກໍບໍ່ເສັຽປໂຍດອັນໃດ. ສວັນແລະນະຮົກເປັນເຣື່ອງຝ່າຍວິນຍານ ເຮົາບໍ່ສາມາດໃຫ້ຄຳຕອບແບບຕາເບິ່ງເຫັນໄດ້ ແຕ່ເຮົາສາມາດໃຊ້ຂໍ້ພຣະຄັມພີເປັນຄຳຕອບເຣື່ອງສວັນໄດ້ໃນ ໂຢຮັນ 3:12-13; ແລະຄຳຕອບເຣື່ອງນະຮົກໃນ ລູກາ 16:22-23 ແລະໃນປຶ້ມພຣະຄັມພີອື່ນໆ ອີກຢ່າງຫລວງຫລາຍ.

## 4. ທຸກສາສນາສອນຄົນໃຫ້ເປັນຄົນດີ ເປັນຫຍັງຈຶ່ງຕ້ອງເຊື່ອໃນພຣະເຢຊູ?

**ຄຳຕອບ** ເປັນຄວາມຈິງທີ່ວ່າທຸກສາສນາສອນຄົນໃຫ້ເປັນຄົນດີ ແຕ່ສິ່ງທີ່ແຕກຕ່າງຢ່າງເຫັນໄດ້ແຈ້ງຊັດນັ້ນແມ່ນ ພຣະເຈົ້າບໍ່ໄດ້ພຽງແຕ່ສອນໃຫ້ເຮົາເປັນຄົນດີເປັນອັນດັບທຳອິດ ເພາະໂດຍປົກກະຕິແລ້ວມະນຸດເຮົາທຸກຄົນກໍຮູ້ຢູ່ແລ້ວວ່າສິ່ງໃດດີສິ່ງໃດຊົ່ວ. ແຕ່ບັນຫາຂອງຄົນເຮົານັ້ນແມ່ນຮູ້ແລ້ວຕ່າວພາໂລຫລືຮູ້ແລ້ວກໍຍັງເຮັດບາບຢູ່ ຈຶ່ງສົ່ງຜົນໃຫ້ມະນຸດເຮົາຕ້ອງໄດ້ຮັບຜົນກັມໃນນະຮົກ ແລະຜົນຮ້າຍອື່ນໆ ທີ່ຕາມມາຢ່າງຫລີກລ້ຽງບໍ່ໄດ້. ດັ່ງນັ້ນພຣະເຢຊູຈຶ່ງໄດ້ສະເດັດເຂົ້າມາໃນໂລກນີ້ເພື່ອຊ່ວຍມະນຸດໃຫ້ຫລຸດພົ້ນຈາກບາບ ພົ້ນຈາກຜົນກັມໃນນະຮົກແລະປ່ຽນແປງຊີວິດຂອງເຮົາໃຫມ່. ຄວາມລອດພົ້ນໃນຜູ້ອື່ນບໍ່ມີ ມີແຕ່ໃນອົງພຣະເຢຊູເທົ່ານັ້ນ (ກຈ 4:12).

## 5. ຂ້ອຍໄດ້ກະທຳດີພຽງພໍ ສາມາດທີ່ຈະຂຶ້ນໄປເທິງສວັນໄດ້?

**ຄຳຕອບ** ສວັນເປັນທີ່ປະທັບຂອງພຣະເຈົ້າ ພຣະອົງຊົງບໍຣິສຸດ ດັ່ງນັ້ນທີ່ປະທັບຂອງພຣະອົງຈຶ່ງບໍຣິສຸດ ຄົນທີ່ດີພຽງພໍທີ່ຈະຂຶ້ນໄປສວັນໄດ້ຈະຕ້ອງເປັນຄົນທີ່ສົມບູນແບບ ເປັນຄົນບໍຣິສຸດພຽງພໍ ບໍ່ມີຄວາມບາບແລະຄວາມຊົ່ວເຈືອປົນ. ພຣະຄັມພີກ່າວໄວ້ວ່າ ບໍ່ມີໃຜເປັນຄົນຊອບທັມແມ່ນແຕ່ຄົນດຽວ ບໍ່ມີເລີຍ (ໂຣມ 3:23 ) ດັ່ງນັ້ນຈຶ່ງບໍ່ມີຜູ້ໃດດີພໍທີ່ຈະຂຶ້ນໄປສວັນໄດ້ ມະນຸດຈະຫລຸດພົ້ນຈາກບາບແລະຂຶ້ນໄປສວັນໄດ້ດ້ວຍການຮັບການໄຖ່ບາບຈາກພຣະເຢຊູເທົ່ານັ້ນ.

## 6. ຄົນທີ່ຕາຍໄປກ່ອນໂດຍທີ່ບໍ່ໄດ້ຍິນເຣື່ອງພຣະເຢຊູ ຈະຕົກນະຮົກຫລືບໍ່?

**ຄຳຕອບ** ພຣະເຈົ້າຊົງຍຸດຕິທັມ ພຣະອົງຈະຊົງພິພາກສາຄົນທີ່ບໍ່ເຄີຍໄດ້ຍິນເຣື່ອງພຣະເຢຊູດ້ວຍມາຕະຖານຫລືບັນທັດຖານທີ່ເຫມາະສົມກັບໂອກາດຂອງເຂົາເຈົ້າຢ່າງແນ່ນອນ. ( ກິຈການ 17:26-27; ໂຣມ 3:19-20 )

## 7. ສາສນາອື່ນກໍຊ່ວຍເຮົາໃຫ້ໄປສວັນໄດ້ຫລື?

**ຄຳຕອບ** ອາດຈະມີບາງສາສນາທີ່ບອກວ່າຊ່ອຍເຮົາໃຫ້ໄປສວັນໄດ້ ແຕ່ພຣະເຢຊູຄຣິດຊົງກ່າວຢືນຢັນວ່າ ພຣະອົງຊົງເປັນທາງດຽວເທົ່ານັ້ນທີ່ພາໄປເຖິງສວັນ ບໍ່ມີນາມອື່ນໃດທີ່ສາມາດຊ່ອຍໃຫ້ລອດພົ້ນໄດ້ ພຣະອົງຊົງພິສູດໃຫ້ພວກເຮົາເຫັນວ່າພຣະອົງຊົງສາມາດຊ່ອຍພວກເຮົາໄປສວັນໄດ້ໂດຍການຊົງເປັນຄືນມາຈາກຄວາມຕາຍ ພວກເຮົາບໍ່ເຄີຍເຫັນການພິສູດຂອງຜູ້ໃດເຫມືອນກັບອົງພຣະເຢຊູ. ( ໂຢຮັນ 14:6 )

## 8. ຄອບຄົວບໍ່ເຫັນດີນຳ ຖ້າເຮົາຈະມາເຊື່ອໃນອົງພຣະເຢຊູ?

**ຄຳຕອບ** ສາຍເຫດທີ່ຄອບຄົວບໍ່ເຫັນດີນຳກໍເປັນຍ້ອນວ່າເຂົາເຈົ້າບໍ່ຮູ້ແລະບໍ່ເຂົ້າໃຈພຣະເຢຊູຢ່າງຖືກຕ້ອງ ຖ້າທ່ານຫາກຮັບເຊື່ອພຣະເຢຊູ ແລະສະແດງໃຫ້ເຂົາເຈົ້າເຫັນເຖິງສິ່ງທີ່ພຣະເຢຊູໄດ້ກະທຳໃນຊີວິດຂອງທ່ານ ເຂົາເຈົ້າກໍຈະຄ່ອຍໆ ປ່ຽນໃຈ ດັ່ງນັ້ນທ່ານບໍ່ພຽງແຕ່ໄດ້ຊ່ອຍຕົນເອງໃຫ້ຫລຸດພົ້ນ ແຕ່ຍັງຈະໄດ້ຊ່ອຍຄອບຄົວຂອງທ່ານໃຫ້ໄດ້ຮັບຄວາມລອດພົ້ນນຳ. ( ກິຈການ 16:33-34)

## 9. ສາສນາຄຣິດແມ່ນສາສນາຂອງຄົນໜັງຂາວ ເຮົາຄົນລາວຕ້ອງນັບຖືສາສນາປະຈຳຊາດ?

**ຄຳຕອບ** ພຣະເຈົ້າຊົງເປັນຜູ້ສ້າງໂລກແລະຈັກກະວານ ພຣະອົງຊົງກ່າວວ່າພຣະອົງຊົງຮັກໂລກ ດັ່ງນັ້ນພຣະອົງຈຶ່ງຊົງເປັນພຣະເຈົ້າຂອງຄົນທົ່ວທັງໂລກ ບໍ່ແມ່ນເປັນພຣະເຈົ້າຂອງຊາດໃດຊາດນຶ່ງເທົ່ານັ້ນ ພຣະອົງມີພຣະປະສົງຢາກຊ່ອຍມະນຸສໂລກໃຫ້ຫລຸດພົ້ນຈາກບາບ ບໍ່ວ່າຈະເປັນຄົນຝຣັ່ງ, ອະເມຣິກາ, ຈີນ, ອິນເດັຽ, ລາວ, ໄທ, ຫລືຄົນຊາດໃດກໍຕາມ ຖ້າຫາກບໍ່ໄດ້ຮັບເຊື່ອໃນອົງພຣະເຢຊູຄຣິດ ເຂົາເຈົ້າຈະຕ້ອງຕົກນະຮົກໄປຕາມໆ ກັນ. (ໂຣມ 4:17-18)

## 10. ເປັນຫຍັງພຣະເຢຊູຈຶ່ງຮັບໂທດບາບແທນເຮົາໄດ້ ຜູ້ໃດເຮັດສິ່ງໃດກໍຕ້ອງຮັບຜົນກັມນັ້ນບໍ່ແມ່ນຫລື ?

**ຄຳຕອບ** ແມ່ນອນ ຄົນເຮົາຕ້ອງຮັບຜົນກັມຕາມການກະທຳຂອງຕົນ ແທ້ຈິງແລ້ວຖ້າຫາກມີຜູ້ນຶ່ງທີ່ຈະຊົດໃຊ້ຜົນກັມແທນເຮົາກໍສາມາດເຮັດໄດ້ ຖ້າຫາກວ່າຜູ້ຊົດໃຊ້ນັ້ນເປັນຜູ້ມີສິດອັນເຕັມປ່ຽມທີ່ຈະຊົດໃຊ້ໂທດນັ້ນ ພຣະເຢຊູຊົງເປັນຜູ້ມີສິດທີ່ຈະຊົດໃຊ້ໂທດນັ້ນແທນເຮົາ ແລະຊົງຊົດໃຊ້ຢ່າງພຽງພໍເພາະວ່າ...(1)ພຣະອົງຊົງເປັນພຣະເຈົ້າ ຊົງເປັນເຈົ້າຂອງຊີວິດຂອງມະນຸດທຸກຄົນ (2)ພຣະອົງຊົງສະເດັດມາບັງເກີດເປັນມະນຸດແລະຍອມຖືກຄຶງເທິງໄມ້ກາງແຂນຈົນສິ້ນພຣະຊົນເພື່ອໃຊ້ຊີວິດຂອງພຣະອົງເອງເປັນສິ່ງຊົດໃຊ້ແທນໂທດກັມມະນຸດ (3)ພຣະອົງຈະຊົງຊົດໃຊ້ໂທດແທນສະເພາະແຕ່ຜູ້ທີ່ຍອມມອບກາຍຖວາຍຊີວິດແກ່ພຣະອົງເທົ່ານັ້ນ. ( ໂຢຮັນ 1:29; 1 ເປໂຕ 1:19; 3:18 )

## 11. ເປັນຫຍັງຄຣິສຕຽນຄືຫລຸດພົ້ນບາບໄດ້ງ່າຍແທ້ ພຽງແຕ່ເຊື່ອກໍຫລຸດພົ້ນຈາກບາບໄດ້?

**ຄຳຕອບ** ແທ້ຈິງແລ້ວ ການທີ່ຄົນເຮົາຈະຫລຸດພົ້ນຈາກບາບນັ້ນເປັນເຣື່ອງທີ່ຍາກຫລາຍແລະເປັນໄປບໍ່ໄດ້ ສາຍເຫດທີ່ເບິ່ງຄືວ່າງ່າຍນັ້ນກໍຍ້ອນວ່າພຣະເຢຊູຊົງໄດ້ກະທຳສິ່ງທີ່ຍາກນັ້ນແທນເຮົາ ແຕ່ຢ່າງໃດກໍຕາມ ການເຊື່ອວາງໃຈໃນພຣະເຢຊູຢ່າງແທ້ຈິງນັ້ນກໍບໍ່ແມ່ນຂອງງ່າຍ ເພາະຜູ້ທີ່ເຊື່ອຈະຕ້ອງຍອມເຊື່ອຟັງແລະຍອມທົນທຸກທໍຣະມານເມື່ອຖືກຂົ່ມເຫັງ. ( ຄາລາເຕັຽ 3:24-27 )

## 12. ການຕັດສິນໃຈເປັນຄຣິສຕຽນ ເອົາໄວ້ມື້ໜ້າກໍໄດ້?

**ຄຳຕອບ** ຊີວິດຂອງຄົນເຮົາບໍ່ມີສິ່ງໃດທີ່ແນ່ນອນ ສິ່ງທີ່ແນ່ນອນທີ່ເຮົາບໍ່ສາມາດຫລີກໄດ້ກໍຄືຄວາມຕາຍ ດັ່ງນັ້ນຈຶ່ງຮີບຕັດສິນໃຈໃນຂະນະທີ່ຍັງມີຊີວິດຢູ່ເພາະເປັນໂອກາດທີ່ດີກວ່າ. ອີກປະການນຶ່ງ ການຕັດສິນໃຈກ່ອນ ກໍຍ່ອມໄດ້ຮັບຜົນປໂຍດແລະສິ່ງທີ່ດີກ່ອນ ( ຢາໂກໂບ 4:13-14).

## 13. ຢາກເປັນຄຣິສຕຽນ ແຕ່ຢ້ານໄດ້ໄປໂບດທຸກວັນທິດແລະຕ້ອງປະພຶດດີ, ຢ້ານວ່າເຮັດບໍ່ໄດ້?

**ຄຳຕອບ** ບໍ່ຕ້ອງຢ້ານວ່າຈະບໍ່ດຳເນີນຊີວິດຄຣິສຕຽນບໍ່ດີພໍ ຂໍພຽງແຕ່ຍອມໃຫ້ພຣະເຈົ້າເປັນຜູ້ນຳພາໃນຊີວິດຂອງເຮົາ ພຍາຍາມເຊື່ອຟັງພຣະອົງຢ່າງສຸດຈິດສຸດໃຈ ອະທິຖານເພິ່ງພຣະອົງຢ່າງສຸດຈິດສຸດໃຈ ພຣະອົງຈະຊົງຊ່ອຍເຮົາໄດ້ໂດຍທີ່ເຮົາບໍ່ຄາດຄິດມາກ່ອນ. ( ມັດທາຍ 6:33 )

ສິ່ງທີ່ກ່າວມານີ້ເປັນພຽງສ່ວນນຶ່ງເທົ່ານັ້ນ ເຮົາບໍ່ອາດຈະນຳເອົາຄຳຖາມຫລືຂໍ້ສົງສັຍຂ້ອງໃຈທັງຫມົດມາອະທິບາຍຢ່າງລະອຽດໃນຫນ້າເຈັ້ຽອັນຈຳກັດນີ້ໄດ້ ແຕ່ຂໍໃຫ້ເຮົາຫມັ້ນໃຈວ່າຄຳຖາມແລະຂໍ້ຂ້ອງໃຈຕ່າງໆກ່ຽວກັບເຣື່ອງຂອງພຣະເຈົ້ານັ້ນລ້ວນແລ້ວແຕ່ມີຄຳຕອບທັງນັ້ນ ແຕ່ຫົວໃຈຂອງການເຊື່ອໄວ້ວາງໃຈໃນພຣະເຢຊູນັ້ນບໍ່ໄດ້ຂຶ້ນຢູ່ກັບວ່າເຮົາຮູ້ແລະເຂົ້າໃຈເຫດຜົນລາຍລະອຽດທັງຫມົດໃນເຣື່ອງຂອງພຣະເຈົ້າ ( ຖ້າເຮົາໄປສມັກງານໃນໂຮງງານນຶ່ງແລະໂຮງງານນັ້ນຮັບເອົາເຮົາເຂົ້າເຮັດງານ ບໍ່ໄດ້ຫມາຍຄວາມວ່າເຮົາຮູ້ແລະເຂົ້າໃຈວຽກງານໃນໂຮງງານນັ້ນທຸກຢ່າງ ແຕ່ເມື່ອເຮົາໄດ້ເຂົ້າເຮັດງານແລ້ວ ທາງໂຮງງານຈະສອນແລະຝຶກອົບຮົມເຮົາ) ເຮົາເຊື່ອວາງໃຈໃນພຣະເຢຊູເພາະເຮົາເຂົ້າໃຈເຫດຜົນໃນລະດັບຕົ້ນເທົ່ານັ້ນທີ່ເຮັດໃຫ້ເຮົາເຊື່ອຫມັ້ນວ່າເຣື່ອງຂອງພຣະເຈົ້າເປັນຄວາມຈິງ ພຣະອົງສາມາດຊ່ອຍເຮົາໃຫ້ຫລຸດພົ້ນຈາກບາບແລະປ່ຽນແປງຈາກຊີວິດເກົ່າໄດ້ຈິງແທ້ ແລະປະສົບການທີ່ເກີດຂຶ້ນຈາກການຮັບເຊື່ອຈະເປັນສິ່ງຊ່ອຍຢືນຢັນອີກນຳ.

ເມື່ອທ່ານເປັນພຍານແກ່ຄົນອື່ນ ຂໍໃຫ້ທ່ານເຂົ້າໃຈເນື້ອໃນຂອງການເປັນພຍານຢ່າງແທ້ຈິງ ບໍ່ແມ່ນການຕອບຄຳຖາມ ແຕ່ການເປັນພຍານນັ້ນແມ່ນການເລົ່າຄຳພຍານຂ່າວປະເສີດ, ຄຳພຍານຊີວິດຂອງທ່ານ ແລະການເຊີນຊວນໃຫ້ຜູ້ຮັບຟັງຕ້ອນຮັບເອົາອົງພຣະເຢຊູຄຣິດ. ຖ້າຫາກທ່ານພົບກັບຄຳຖາມທີ່ຕອບບໍ່ໄດ້ຂໍໃຫ້ທ່ານບອກກັບຜູ້ຖາມດ້ວຍຄວາມຫມັ້ນໃຈວ່າ ທ່ານບໍ່ຮູ້ ແຕ່ມີຄຣິສຕຽນຜູ້ອາວຸໂສຮູ້ ຊຶ່ງທ່ານສາມາດໄປຂໍຄຳຕອບຫລືຄົ້ນຄວ້າຄຳຕອບໄດ້ຕາມພາຍຫລັງ. ແຕ່ຂໍໃຫ້ເຮົາຮູ້ແລະຫມັ້ນໃຈອີກຢ່າງນຶ່ງວ່າພຣະເຈົ້າຊ່ອຍເຮົາໄດ້ ຊີວິດເຮົາໄດ້ປ່ຽນແປງໃຫມ່ ຊີວິດເຮົາດີຂຶ້ນ ເພາະວ່າພຣະເຈົ້າໄດ້ປ່ຽນແປງຊີວິດຂອງເຮົາຢ່າງແນ່ນອນ.

## ການວາງຕົວຂອງຄຣິສຕຽນຕໍ່ຮີດຄອງປະເພນີຕ່າງໆ

ຮີດຄອງໝາຍເຖິງການປະຕິບັດຕ່າງໆໃນການດຳເນີນຊີວິດໃນສັງຄົມ ທີ່ຄົນໃນສັງຄົມນັ້ນໆ ໄດ້ຍຶດຖືແລະປະຕິບັດສືບຕໍ່ກັນມາ. ໃນອະດີດ ຕອນທີ່ເຮົາຍັງບໍ່ໄດ້ເຊື່ອໃນພຣະເຢຊູ ເຮົາໄດ້ດຳເນີນຊີວິດໄປຕາມວັດທະນະທັມ ຮີດຄອງປະເພນີດັ້ງເດີມໂດຍທີ່ບໍ່ຕ້ອງຄິດແຕ່ຢ່າງໃດ. ແຕ່ບັດນີ້ເຮົາໄດ້ເປັນລູກຂອງພຣະເຈົ້າແລ້ວ ເຮົາຈຳເປັນຕ້ອງພິຈາຣະນາໄຈ້ແຍກຄວາມເຊື່ອ ແລະຮີດຄອງປະເພນີຕ່າງໆ ທີ່ເຮົາເຄີຍຍຶດຖືມາ ສິ່ງໃດດີງາມເຮົາກໍຄວນຍຶດຖືໄວ້ ຍົກຕົວຢ່າງເຊັ່ນ ເມື່ອເຮົາເປັນຄຣິສຕຽນແລ້ວເຮົາກໍຍັງພາກພູມໃຈຄວາມເປັນຄົນລາວ ຮັກປະເທດລາວ ເວົ້າພາສາລາວ ທັກທາຍກັນດ້ວຍການຍົກມືໄຫວ້ແບບລາວໆ ໂຄຣົບນັບຖືຜູ້ນຳຂອງປະເທດ ແລະມີມາຣະຍາດອັນດີງາມຂອງລາວ ສ່ວນສິ່ງໃດທີ່ບໍ່ຖືກຕ້ອງຕາມພຣະຄຳຂອງພຣະເຈົ້າເຮົາກໍຄວນປະຕິເສດ. ການພິຈາຣະນາຍຶດຖືປະຕິບັດຕາມຮີດຄອງປະເພນີວັດທະນະທັມຕ່າງໆ ໃນສັງຄົມ ຫລັກການດັ່ງຕໍ່ໄປນີ້ຈະຊີ້ບອກເຮົາວ່າສິ່ງໃດທີ່ເຮົາຄວນຍຶດຖືເອົາ...

1. ເລືອກປະຕິບັດໃນສິ່ງທີ່ບໍ່ຂັດກັບຫລັກຄວາມເຊື່ອແລະຫລັກສິນທັມຂອງພຣະຄັມພີ ໂດຍສະເພາະຢ່າງຍິ່ງເຮົາຈະຕ້ອງເລືອກປະຕິບັດໃນສິ່ງທີ່ບໍ່ແມ່ນການນະມັສການຫລືຂາບໄຫວ້ບູຊາຮູບໂຄຣົບ, ຜີ, ວິນຍານ, ເຈົ້າ, ສິ່ງສັກສິດ, ເທພເຈົ້າ, ເທວະດາ, ໄສຍະສາດ ( ອົບພະຍົບ 20:4-6, 1 ໂຢຮັນ 5:21 ) ເຮົານະມັສການພຣະເຈົ້າຜູ້ສູງສຸດອົງດຽວເທົ່ານັ້ນ.

2. ເລືອກປະຕິບັດໃນສິ່ງທີ່ກໍ່ໃຫ້ເກີດຄວາມສຸກຄວາມຈະເຣີນໃນສັງຄົມໂດຍບໍ່ຂັດແຍ່ງກັບຫລັກຄຳສອນໃນພຣະຄັມພີ ( ໂຣມ 15:2; 1 ໂກຣິນໂທ 10:23 )

ຮີດຄອງປະເພນີຕ່າງໆ ໃນສັງຄົມລາວທີ່ຄຣິສຕຽນຄວນລະວັງແລະຖືປະຕິບັດຢ່າງຖືກຕ້ອງມີດັ່ງຕໍ່ໄປນີ້...

### 1. ການຂາບໄຫວ້ບູຊາພຣະອື່ນໆ, ຂາບໄຫວ້ບູຊາຮູບປັ້ນ, ຮູບໂຄຣົບ ແລະແຂວນພຣະ

ພຣະເຈົ້າຊົງບັນຊາວ່າ "ພວກເຈົ້າ ຢ່າເຮັດຮູບໂຄຣົບສຳລັບຕົນ... ຢ່າຂາບໄຫວ້ຮູບເຫລົ່ານັ້ນ..." ( ອົບພະຍົບ 20:4-6 ) ດັ່ງນັ້ນເຮົາຈຶ່ງບໍ່ຂາບໄຫວ້ບູຊາພຣະອື່ນໆ ບໍ່ຂາບໄຫວ້ຮູບປັ້ນຮູບໂຄຣົບ ແລະບໍ່ເອົາຮູບໂຄຣົບແລະຂອງດີຂອງແຄ້ວຂອງຄົງຕ່າງໆ ໄວ້ທີ່ເຮືອນ ມັດຫລືແຂວນທີ່ຕົນໂຕຂອງເຮົາ.

### 2. ການຖືໂຊກ, ຖືລາງ, ຖືເລີກຍາມ, ເບິ່ງດວງຊາຕາ, ແລະໄສຍະສາດຕ່າງໆ

ການຖືໂຊກລາງ, ເລີກຍາມ, ເບິ່ງດວງຊາຕາ, ແລະໄສຍະສາດຕ່າງໆ ແມ່ນສິ່ງທີ່ພຣະຄຳຂອງພຣະເຈົ້າໄດ້ກ່າວຫ້າມໄວ້ ( ລະບຽບພວກເລວີ 19:26, 31; ພຣະບັນຍັດສອງ 18:9-41; ຄາລາເຕັຽ 5:19-20 ) ເຮົາຜູ້ເປັນລູກຂອງພຣະເຈົ້າບໍ່ຄວນເຊື່ອຖືຫລືກະທຳສິ່ງເຫລົ່ານີ້ ເພາະວ່າເຮົາບໍ່ໄດ້ຢູ່ໃຕ້ອຳນາດຂອງວັນເວລາ, ເລີກຍາມ, ສະຖານທີ່, ດວງຊາຕາ ແຕ່ເຮົາຢູ່ໃນການດູແລຂອງພຣະເຈົ້າ ວັນທຸກວັນ, ຍາມທຸກຍາມ ແມ່ນສິ່ງທີ່ພຣະເຈົ້າຊົງສ້າງ ຈຶ່ງລ້ວນແລ້ວແຕ່ດີ ( ປະຖົມການ 1:31 ) ບໍ່ວ່າຈະເປັນວັນຫລືເວລາໃດ ຖ້າເຮົາຫາກເຮັດດ້ວຍການເຊື່ອຟັງພຣະເຈົ້າ ແລະພິຈາຣະນາດ້ວຍເຫດຜົນຢ່າງເໝາະສົມແລ້ວ ລ້ວນແລ້ວແຕ່ດີທັງສິ້ນ.

### 3. ການອວຍພອນແລະການຂໍພອນ

ຄົນທີ່ບໍ່ມີພຣະເຈົ້າຈະເຊື່ອເພິ່ງໂຊກຊາຕາແລະສິ່ງສັກສິດທີ່ເຂົາເຈົ້ານັບຖື ແຕ່ພຣະຄັມພີສອນວ່າ ພຣະເຈົ້າຊົງເປັນເຈົ້າຂອງສັພສິ່ງທັງປວງ ພຣະອົງຈຶ່ງເປັນຜູ້ທີ່ອວຍພອນຢ່າງແທ້ຈິງ ຄຣິສຕຽນຈຶ່ງຄວນຂໍພອນແລະອວຍພອນໃຫ້ກັນແລະກັນໃນໂອກາດຕ່າງໆ ໂດຍຂໍພຣະພອນຈາກພຣະເຈົ້າໃຫ້ແກ່ກັນແລະກັນເຊັ່ນ ເວລາສັ່ງລາກັນຄວນໃຊ້ຄຳວ່າ "**ຂໍພຣະເຈົ້າອວຍພຣະພອນ**" ແທນຄຳວ່າ "**ໂຊກດີ**" ຫລືແທນຖ້ອຍຄຳທີ່ວ່າ "**ຂໍໃຫ້ສິ່ງສັກສິດໃນສາກົລໂລກຈົ່ງດົນບັນດານໃຫ້...**"

## 4. ການທຳບຸນ

ການເຮັດບຸນໃຫ້ທານສຳລັບຄົນລາວ  ໂດຍທົ່ວໄປແລ້ວມີຄວາມໝາຍຢູ່ສອງປະການຄື  (1)ການປະຕິບັດທາງສາສນາ ແລະ (2)ການທຳດີ  ໂດຍເຊື່ອກັນວ່າການທຳບຸນສອງປະການນີ້ຈະສົ່ງຜົນໃຫ້ໄດ້ຮັບບຸນກຸສົນຕໍ່ຊີວິດທັງໃນຊາດນີ້ແລະຊາດໜ້າ  ແລະຍັງສາມາດສະສົມຜົນບຸນໄວ້ເພື່ອຊ່ອຍໃຫ້ເຮົາໄດ້ໄປສວັນເມື່ອເຮົາຕາຍຈາກໂລກນີ້ໄປ ນອກຈາກນີ້ຍັງເຊື່ອວ່າເປັນການອຸທິດບຸນໃຫ້ແກ່ຄົນທີ່ຕາຍໄປແລ້ວ ເພື່ອເປັນປໂຍດແກ່ຜູ້ທີ່ຕາຍໄປຢູ່ອີກໂລກນຶ່ງ.

ເຮົາຜູ້ເປັນຄຣິສຕະຊົນ  ບໍ່ຄວນທຳບຸນໃນແງ່ພິທີທາງສາສນາທຸກຊະນິດເຊັ່ນ  ການໃສ່ບາດ, ການຢາດນໍ້າ, ການທອດກະຖິນຜ້າປ່າ ແລະອື່ນໆ  ເພາະພຣະຄັມພີສອນວ່າ ເຮົາບໍ່ສາມາດຫລຸດພົ້ນໄປສວັນດ້ວຍການກະທຳ(ການທຳບຸນໃຫ້ທານຕາມພິທີທາງສາສນາ)  ແຕ່ເຮົາສາມາດຫລຸດພົ້ນໄດ້ດ້ວຍທາງຄວາມເຊື່ອແລະໄວ້ວາງໃຈໃນອົງພຣະເຢຊູຄຣິດ (ເອເຟໂຊ 2:8-10) ສ່ວນການທຳບຸນໃນແງ່ການກະທຳຄວາມດີນັ້ນ ພຣະເຢຊູຊົງໄດ້ສອນພວກເຮົາຢູ່ແລ້ວໃຫ້ເຮົາກະທຳດີແລະສະແດງຄວາມຮັກຕໍ່ຄົນອື່ນ ບໍ່ແມ່ນກະທຳເພື່ອຫວັງຈະໄດ້ບຸນແຕ່ກະທຳເພາະເປັນສິ່ງທີ່ພຣະເຈົ້າຢາກໃຫ້ພວກເຮົາກະທຳ ແລະເປັນການກະທຳເພື່ອສນອງຕອບວ່າເຮົາໄດ້ຮັບການປ່ຽນແປງຊີວິດໃໝ່ແລ້ວ. ການກະທຳຄວາມດີຂອງຄຣິສຕຽນສາມາດສະແດງອອກໃນການຊ່ອຍເຫລືອສັງຄົມເຊັ່ນ ການບໍຣິຈາກສ້າງໂຮງຮຽນ,  ໂຮງໝໍ ແທນທີ່ຈະເອົາເງິນໄປທຳບຸນຕາມພິທີທາງສາສນາ.

## 5. ການຮ່ວມໃນພິທີຊາປະນະກິດສົບ

1)**ພິທີຫົດນໍ້າສົບ**  ເປັນພິທີທີ່ມີຄວາມໝາຍວ່າ  ເຮົາແລະຜູ້ຕາຍໃຫ້ອະໂຫສິກັມແກ່ກັນແລະກັນ  ບໍ່ຄິດຈອງກັມຈອງເວນຕໍ່ກັນ ຄຣິສຕຽນສາມາດຮ່ວມພິທີນີ້ໄດ້.

2)**ການໂຄຣົບສົບ ແລະການທຳບຸນສົບ**  ພຣະຄັມພີກ່າວວ່າເມື່ອມະນຸດເສັຽຊີວິດ  ຈິດວິນຍານຂອງລາວຈະອອກຈາກຮ່າງກາຍໄປຢູ່ທີ່ແດນມໍຣະນາ(ແດນຄົນຕາຍ)ແລ້ວ  ບໍ່ສາມາດຈະກ່ຽວຂ້ອງກັບເຮົາໄດ້ອີກ  ດວງວິນຍານຂອງລາວຈະເປັນຢ່າງໃດແມ່ນຂຶ້ນຢູ່ກັບການກະທຳຂອງລາວໃນຂະນະທີ່ມີຊີວິດຢູ່  ເຮົາຈຶ່ງບໍ່ສາມາດຂາບໄຫວ້ບູຊາຫລືເຊັ່ນໄຫວ້ດວງວິນຍານຂອງຜູ້ທີ່ຕາຍ  ລວມທັງບໍ່ກະທຳສິ່ງໃດທີ່ຈະສົ່ງຜົນປໂຍດໄປໃຫ້ແກ່ວິນຍານຂອງຜູ້ທີ່ຕາຍ ໂດຍທົ່ວໄປແລ້ວໃນພິທີສົບ ເຮົາສາມາດເຂົ້າໄປນັ່ງຮ່ວມພິທີໂດຍທີ່ບໍ່ຕ້ອງສະແດງຄວາມໂຄຣົບກໍໄດ້    ແຕ່ຢ່າງໃດກໍຕາມ,   ຖ້າຫາກເຮົາຈຳເປັນຕ້ອງກະທຳເຮົາກໍສາມາດສະແດງຄວາມໂຄຣົບສົບຜູ້ຕາຍໃນລັກສະນະຂອງການລະນຶກເຖິງ ໂຄຣົບນັບຖືກັນ ອາລັຍຕໍ່ກັນ ອາດຈະສະແດງດ້ວຍການຢືນໄຫວ້, ຄຸເຂົ່າໄຫວ້, ຫລືຢືນໂຄ້ງຄຳນັບທີ່ໜ້າສົບຫລືໜ້າຮູບຂອງຜູ້ຕາຍ  ບໍ່ແມ່ນຕໍ່ໜ້າໂຕະໝູ່(ເປັນຊຸດ)ທີ່ມີຮູບໂຄຣົບ  ແລະໃນຂະນະທີ່ສະແດງຄວາມໂຄຣົບນັ້ນບໍ່ຈຳເປັນຈະຕ້ອງຈູດທູບທຽນບູຊາ.

3)**ການຟັງສູດອະພິທັມ**  ເນື່ອງຈາກວ່າຄຣິສຕຽນເຮົາບໍ່ໄດ້ອາຣາທະນາຂໍຮັບສີນຈາກພຣະສົງ ເຮົາຈຶ່ງບໍ່ຈຳເປັນຕ້ອງຍໍມືນົບ ຖ້າຫາກເຮົາຫາທາງຫລີກລ້ຽງບໍ່ໄດ້ກໍໃຫ້ນັ່ງຢູ່ໃນພິທີນັ້ນດ້ວຍໃຈສຳຣວມ  ເພື່ອເປັນການໃຫ້ກຽດແກ່ຜູ້ປະກອບພິທີ.

4) **ພິທີກົງເຕັກ (ພິທີຈີນ)**  ພິທີກົງເຕັກແມ່ນພິທີສູດສົ່ງວິນຍານຂອງຜູ້ຕາຍເພື່ອໃຫ້ໄປສູ່ທີ່ສຸຂເສີມ ລວມທັງມີການສົ່ງອາຫານ, ເຮືອນ, ເຄື່ອງໃຊ້, ແລະເງິນໄປໃຫ້ຜູ້ຕາຍ.  ຄວາມເຊື່ອດັ່ງກ່າວນີ້ບໍ່ຖືກຕ້ອງຕາມພຣະຄຳຂອງພຣະເຈົ້າ ດັ່ງນັ້ນເຮົາຈຶ່ງຫລີກລ້ຽງໃນການຮ່ວມພິທີນີ້ ຫລືຮ່ວມດ້ວຍການນັ່ງຢູ່ລ້າໆ ດ້ວຍໃຈສຳຣວມ.

5)**ການເຜົາ, ຝັງ, ແລະເກັບສົບ**     ຄຣິສຕຽນສາມາດຮ່ວມໄດ້ໃນລັກສະນະດຽວກັນກັບການຮ່ວມໃນພິທີທີ່ກ່າວໄວ້ຂ້າງເທິງນີ້. ບໍ່ວ່າຈະເປັນການເຜົາປອມຫລືເຜົາຈິງ, ຝັງ, ຫລືເກັບສົບໄວ້ ສາມາດໃຊ້ດອກໄມ້(ດອກຈັນ) ໃນການຮ່ວມເຜົາໄດ້.

6)**ການເຊັ່ນໄຫວ້ບັນພະບຸຣຸດ (ເຊັງເມັ້ງ)** ດັ່ງທີ່ໄດ້ກ່າວມາແລ້ວ ຄຣິສຕຽນຈະບໍ່ເຊັ່ນໄຫວ້ດວງວິນຍານຂອງຄົນຕາຍ ແຕ່ເຮົາສາມາດສະແດງຄວາມໂຄຣົບຕໍ່ສົບຂອງຜູ້ຕາຍໄດ້ໃນລັກສະນະຂອງການລະນຶກເຖິງ ໂຄຣົບນັບຖືກັນ ອາລັຍຕໍ່ກັນ ອາດຈະສະແດງດ້ວຍການຢືນໄຫວ້, ຄຸເຂົາໄຫວ້, ຫລືຢືນໂຄ້ງຄຳນັບຕໍ່ໜ້າຮູບຂອງຜູ້ຕາຍ  ອາດຈະຈັດ

ດອກໄມ້ທີ່ໜ້າຫລຸມຝັງສົບຫລືທີ່ໜ້າຮູບພາບເພື່ອໃຫ້ເບິ່ງສວຍງາມ ແຕ່ບໍ່ຈູດທູບທຽນບູຊາ ບໍ່ຕ້ອງເຊັ່ນໄຫວ້ດ້ວຍອາຫານ ແລະບໍ່ຕ້ອງເຜົາເຈ້ຍເງິນເຈ້ຍຄຳ.

## 6. ການຮ່ວມໃນພິທີສົມຣົດ

**ການແຫ່ເຂີຍ** ຂັນທີ່ໃສ່ໝາກພູ ສິນສອດຄ່າດອງ ອາຫານແລະເຂົ້າໜົມ ເປັນເຄື່ອງໝາຍສະແດງເຖິງຄວາມອຸດົມສົມບູນ ຢູ່ດີກິນດີ ບໍ່ກ່ຽວຂ້ອງກັບຮູບໂຄຣົບ ເຮົາສາມາດທີ່ຈະເຂົ້າຮ່ວມໄດ້.

**ພິທີຫົດນໍ້າສັງ** (ພິທີໄທ) ຄົນໄທຖືວ່າຫອຍສັງເປັນສິ່ງມີງຄຸນ ສ່ວນນໍ້າແມ່ນໃຊ້ນໍ້າມົນມາຫົດເພື່ອເປັນສິຣິມົງຄຸນແກ່ຄູ່ບ່າວສາວ ເຮົາສາມາດຫົດນໍ້າສັງໄດ້ໂດຍຖືວ່ານໍ້າໝາຍເຖິງພຣະພອນຂອງພຣະເຈົ້າເຮັດໃຫ້ຢູ່ເຢັນເປັນສຸກ ເຮົາຄວນເອີ່ຍອ້າງພຣະນາມຂອງພຣະເຈົ້າໃນການອວຍພອນໃຫ້ແກ່ຄູ່ສົມຣົດຍົກຕົວຢ່າງເຊັ່ນ *"ຂໍໃຫ້ພຣະເຈົ້າຊົງອວຍພຣະພອນໃຫ້ທ່ານທັງສອງຮັກກັນຕລອດໄປ"*

## 7. ການຮ່ວມພິທີອຸປສົມບົດ (ບວດ)

ພິທີອຸປສົມບົດຫລືບວດເປັນພິທີທີ່ກ່ຽວຂ້ອງກັບຮູບໂຄຣົບໂດຍກົງ ຄຣິສຕຽນຈະບໍ່ບວດຢ່າງເດັດຂາດ ແລະຄວນຫລີກລ້ຽງໃນການຮ່ວມພິທີນີ້ ຖ້າຫາກຫລີກລ້ຽງບໍ່ໄດ້ກໍອາດຈະຂໍຮ່ວມໃນພາກສ່ວນອື່ນທີ່ບໍ່ແມ່ນພິທີທາງສາສນາ ເຊັ່ນຮ່ວມສະເພາະແຕ່ໃນງານກິນລ້ຽງເທົ່ານັ້ນ.

## 8. ການຮ່ວມໃນຮີດຄອງປະເພນີຕ່າງໆ

**1)ປະເພນີລອຍກະທົງ (ໄຫລເຮືອໄຟ)** ດັ້ງເດີມນັ້ນເປັນພິທີທີ່ກະທຳເພື່ອຂໍຂະມາ(ຂໍອະພັຍ)ຕໍ່ແມ່ນໍ້າ ຄຣິສຕຽນຈຶ່ງບໍ່ຄວນມີສ່ວນຮ່ວມ ເພາະນອກຈາກຈະມີຄະຕິຄວາມເຊື່ອທີ່ບໍ່ຖືກຕ້ອງຕາມພຣະຄຳຂອງພຣະເຈົ້າແລ້ວ ຍັງສົ່ງຜົນໃຫ້ແມ່ນໍ້າມີຄວາມເປິະເປື້ອນອີກ ແຕ່ໃນປັດຈຸບັນຄວາມໝາຍດັ່ງກ່າວໄດ້ຕາຍໄປຈາກໃຈຂອງຄົນຍຸກໃໝ່ແລ້ວ ຈຶ່ງກາຍເປັນປະເພນີລົ້ນເລີງທັມມະດາ ເຮົາອາດສາມາດຮ່ວມໄດ້ ແຕ່ຖ້າເຮັດໃຫ້ນໍ້າເປິະເປື້ອນກໍບໍ່ຄວນຮ່ວມ

**2)ປະເພນີສົງການ (ປີໃໝ່)** ເປັນປະເພນີສລອງປີໃໝ່ຂອງຄົນລາວ ຄຣິສຕຽນສາມາດເຂົ້າຮ່ວມໄດ້ໂດຍເລືອກກະທຳແຕ່ໃນສິ່ງທີ່ດີງາມ ບໍ່ກ່ຽວຂ້ອງກັບຄວາມເຊື່ອທາງສາສນາເຊັ່ນ ເຮົາສາມາດຫົດນໍ້າອວຍພອນຜູ້ໃຫຍ່ແລະໝູ່ເພື່ອນ ແຕ່ຈະບໍ່ເຮັດບຸນ, ຫົດສົງນໍ້າພຣະ.

**3) ປະເພນີທາງສາສນາ** ປະເພນີທາງສາສນາຊຶ່ງມາຈາກຄວາມເຊື່ອທີ່ບໍ່ສອດຄ່ອງກັບພຣະຄຳຂອງພຣະເຈົ້າ ຄຣິສຕຽນບໍ່ຄວນເຂົ້າຮ່ວມໃນພິທີເຫລົ່ານີ້ເຊັ່ນ ວັນວິສາຂະບູຊາ, ວັນເຂົ້າພັນສາ, ວັນມາຄະບູຊາ, ວັນອອກພັນສາ, ການໃສ່ບາດ, ການໄຫວ້ພຣະ, ການວຽນທຽນ ແລະອື່ນໆ

**4) ປະເພນີເທສການທີ່ບໍ່ຂັດແຍ່ງຕໍ່ຫລັກຄວາມເຊື່ອຂອງຄຣິສຕຽນ ອີກທັງຍັງເປັນປໂຍດຕໍ່ສັງຄົມ** ເຮົາສາມາດທີ່ຈະເຂົ້າຮ່ວມໄດ້ເຊັ່ນ ວັນປີໃໝ່, ວັນແຮງງານ, ວັນເດັກ, ວັນພໍ່, ວັນແມ່, ວັນຊາດ ເປັນຕົ້ນ ແຕ່ຕ້ອງສັງເກດເບິ່ງວ່າບໍ່ມີການຂາບໄຫວ້ຮູບໂຄຣົບຮ່ວມຢູ່ໃນພິທີນັ້ນໆ.

# ການຈັດງານປະເພນີທີ່ເໝາະສົມຕາມແນວທາງຂອງຄຣິສຕຽນ

ຖ້າເຮົາຫາກຈະຈັດງານທາງສັງຄົມ ເຮົາກໍສາມາດປ່ຽນແປງວັດທະນະທັມປະເພນີບາງຢ່າງໃຫ້ມີຄວາມໝາຍແລະວິທີປະຕິບັດໃຫ້ສອດຄ່ອງກັບພຣະຄຳຂອງພຣະເຈົ້າເຊັ່ນ...

1. **ພິທີແຕ່ງງານ** ແຕ່ກ່ອນເປັນການແຕ່ງງານໂດຍໃຫ້ມະນຸດເທົ່ານັ້ນເປັນພຍານ ແຕ່ໃນຖານະທີ່ເຮົາເປັນຄຣິສຕຽນ ເຮົາຕ້ອງຈັດພິທີສົມຣົດໂດຍໃຫ້ພຣະເຈົ້າເປັນປະທານໃນພິທີ ໃຫ້ຄຳໝັ້ນສັນຍາຕໍ່ກັນຕາມພຣະຄຳຂອງ

ພຣະເຈົ້າ ຈຶ່ງຮັກພັກດີຕໍ່ກັນ ຕໍ່ໜ້າສັກຂີພຍານທັງພຣະເຈົ້າແລະມະນຸດ ແລະທູນຂໍພຣະພອນແກ່ຄູ່ສົມຣົດໃໝ່.

**2. ພິທີຊາປານະກິດສົບ** ແຕ່ກ່ອນເປັນການທຳພິທີເພື່ອມຸ່ງຫວັງໃຫ້ຜູ້ຕາຍໄດ້ຮັບຄວາມສຸກສະບາຍຂຶ້ນດ້ວຍວິທີໃດວິທີນຶ່ງຫລັງຈາກທີ່ຕາຍໄປແລ້ວ ແຕ່ບັດນີ້ເຮົາຕ້ອງປະກອບພິທີຕາມຄວາມເຊື່ອຂອງຄຣິສຕຽນຄືເພື່ອເປັນການຖວາຍພຣະກຽດແກ່ພຣະເຈົ້າ, ໄວ້ອາລັຍແກ່ຜູ້ເສັຽຊີວິດ, ແລະເປັນການຕັກເຕືອນສະຕິຜູ້ທີ່ຍັງມີຊີວິດຢູ່ໃຫ້ເຊື່ອວາງໃຈໃນພຣະເຢຊູຄຣິດຜູ້ທີ່ສາມາດຊ່ອຍພວກເຮົາໃຫ້ຫລຸດພົ້ນຈາກບາບ.

**3. ພິທີຂຶ້ນເຮືອນໃໝ່** ແຕ່ເດີມເປັນການປະກອບພິທີໂດຍຖືໂຊກລາງ ຫລືເລີກຍາມ ແຕ່ບັດນີ້ເຮົາຄວນຈັດພິທີໂດຍມີຄວາມໝາຍໃຫ້ພຣະເຈົ້າຊົງເປັນເຈົ້າຂອງເຮືອນ ທູນຂໍໃຫ້ພຣະອົງຊົງອວຍພຣະພອນແກ່ສະມາຊິກໃນເຮືອນ ແລະຄວນຖວາຍເຮືອນໃຫ້ໃຊ້ເປັນປໂຍດໃນພຣະຣາຊກິດຂອງພຣະອົງ.

**ນອກຈາກນີ້ວັດທະນະທັມປະເພນີໃໝ່ຊຶ່ງແຕ່ເດີມນັ້ນເຮົາບໍ່ໄດ້ກະທຳ ແຕ່ບັດນີ້ເຮົາຄວນຍຶດຖືປະຕິບັດເຊັ່ນ...**

1. **ການລະນຶກເຖິງວັນທີ່ມີຄວາມສຳຄັນໃນພຣະຄັມພີ** ເຊັ່ນ ວັນຄຣິສມັສ ເພື່ອເປັນການລະນຶກເຖິງວັນທີ່ພຣະເຢຊູຄຣິດສະເດັດມາບັງເກີດ, ວັນອີສເຕີ ເປັນການລະນຶກເຖິງວັນທີ່ພຣະເຢຊູຊົງສິ້ນພຣະຊົນແລະຄືນພຣະຊົນ

**2. ການຖວາຍລູກ** ເມື່ອຄອບຄົວມີລູກເກີດໃໝ່ ຄວນຈະນຳລູກໄປທຳພິທີຖວາຍທີ່ຄຣິສຕະຈັກ ເພື່ອເປັນການສະແດງວ່າ ເຮົາພ້ອມແລ້ວທີ່ຈະສອນລູກໃຫ້ດຳເນີນຊີວິດຢູ່ໃນນ້ຳພຣະທັຍຂອງພຣະເຈົ້າ ແລະຂໍພຣະພອນເພື່ອລູກ ທັງຜູ້ເປັນພໍ່ແລະແມ່ນຳ ( ພຣະທັມພຣະບັນຍັດສອງ 6:4-7 )

**3. ການລ້ຽງເນື່ອງໃນໂອກາດພິເສດຕ່າງໆ** ການຈັດງານລ້ຽງທີ່ລື້ນເລີງຄວນຈະເປັນໄປດ້ວຍຄວາມສຸພາບຮຽບຮ້ອຍ ບໍ່ຄວນຖືຕາມຮີດຄອງທີ່ຕ້ອງມີການລ້ຽງກັນດ້ວຍສຸຣາ ຫລືຕັ້ງວົງການພະນັນ.

( ຈົບ )

## <u>ປຶ້ມທີ່ໃຊ້ປະກອບໃນການຮຽບຮຽງ:</u>


✞ ພຣະຄັມພີພາກພຣະສັນຍາໃໝ່ ( ພົບຄວາມສຸກ )

📖 ປຶ້ມບົດຮຽນສຳລັບຄຣິສຕຽນໃໝ່ ( ສົມຊັຍ ເຊົາຈະເຣີນຣັດ )

📖 ປຶ້ມກິຣິຍາຄຣິສຕຽນ ( ຈີ.ອີ. ໂຣຟ )

📖 ປຶ້ມຄຣິສຕຽນແລະຮີດຄອງປະເພນີ ( ເສດ ຈັນຊົງ )



*ຮຽບຮຽງໂດຍ ໄພສານ ສົມສິດທ໌*
*ຄຣິສຕະຈັກ ຮົ່ມພຣະຄຸນ ບັບຕິສ*
*Homprakhoon Baptist Church*
*3721 S. Ledbetter Dr.*
*Dallas, TX 75236*
*E-mail: phaisane@juno.com*
*(214) 566-3415*